# ແຜນຍຸດທະສາດ

## ການນຳສະເໜີຂໍ້ມູນການທ່ອງທ່ຽວ

## ນະຄອນຫຼວງພະບາງ ແລະ ບໍລິເວນອ້ອມຮອບ





LAOS

*Simply Beautiful*

# ຄະນະຮັບຜິດຊອບຄົ້ນຄວ້າ ແລະ ຮ່າງແຜນຍຸດທະສາດ

| | |
|---|---|
| ຊີ້ນໍາລວມ | ທ່ານ ທະວີເພັດ ອຸລາ, ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ |
| | ກະຊວງຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ |
| | ຜູ້ຈັດການໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 |
| | ທ່ານ ນາງ ສຸດາພອນ ຄົມທະວົງ, ຫົວໜ້າພະແນກ |
| | ພະແນກຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງຫລວງພະບາງ |
| | ຫົວໜ້າໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 ແຂວງຫລວງພະບາງ |
| ຮຽບຮຽງ | ທ່ານ ວິລະ ຈັນທະວົງ, ຊ່ຽວຊານດ້ານການນໍາສະເໜີຂໍ້ມູນ ແລະ ການພັດທະນາການທ່ອງທ່ຽວ |
| | ທ່ານ ສະເຕຟານ ທະວີເດດ ສີວິໄລ, ຊ່ຽວຊານດ້ານການພັດທະນາການທ່ອງທ່ຽວ |
| ວັນທີ | 01 ພຶດສະພາ 2020 |

# ຄຳນຳ

ນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ເປັນຈຸດຫມາຍປາຍທາງການທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ. ມີສະຖານທີ່ທ່ອງທ່ຽວທີ່ຫລາກຫລາຍ ແລະ ມີເລື່ອງລາວທີ່ຫນ້າສົນໃຈ ທັງທາງດ້ານຄວາມອຸດົມສົມບູນຂອງທຳມະຊາດ, ວັດທະນະທຳ ແລະ ຮີດຄອງປະເພນີທີ່ເປັນເອກະລັກ ແລະ ເຫດການສຳຄັນທາງປະຫວັດສາດໃນແຕ່ລະຍຸກສະໄຫມ. ເຖິງຢ່າງໃດກໍ່ຕາມ, ການນຳສະເຫນີເລື່ອງລາວດັ່ງກ່າວໃຫ້ແກ່ນັກທ່ອງທ່ຽວໃນຮູບແບບທີ່ດຶງດູດຈິດໃຈແມ່ນຍັງຈຳກັດ, ສະແດງອອກບ່ອນການຂາດປ້າຍປະຫວັດແຫລ່ງທ່ອງທ່ຽວຢູ່ຕາມສະຖານທີ່ທ່ອງທ່ຽວ, ສື່ສິ່ງພິມທີ່ມີເນື້ອໃນທີ່ມີຄຸນນະພາບ ແລະ ແທດເຫມາະກັບກຸ່ມຕະຫລາດເປົ້າຫມາຍ ແລະ ການນຳສະເຫນີຂໍ້ມູນຜ່ານສື່ດີຈີຕອນ ແລະ ອອນລາຍ. ເຮັດໃຫ້ນັກທ່ອງທ່ຽວຍັງມີຄວາມຫຍຸ້ງຍາກໃນການທຳຄວາມເຂົ້າໃຈກັບເລື່ອງລາວ ແລະ ຄວາມຫມາຍຄວາມສຳຄັນຂອງບັນດາສະຖານທີ່ທ່ອງທ່ຽວທີ່ເຂົາເຈົ້າໄປຢ້ຽມຢາມ.

ດັ່ງນັ້ນ, ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 ໂດຍໄດ້ຮັບທຶນສະຫນັບສະຫນູນຈາກທະນາຄານພັດທະນາອາຊີ (Asian Development Bank – ADB) ຈຶ່ງໄດ້ສ້າງແຜນຍຸດທະສາດການນຳສະເຫນີຂໍ້ມູນການທ່ອງທ່ຽວນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບສະບັບນີ້ຂຶ້ນ, ເພື່ອເປັນທິດທາງໃຫ້ແກ່ການປັບປຸງການນຳສະເຫນີຂໍ້ມູນການທ່ອງທ່ຽວ ແລະ ຍົກລະດັບປະສົບການຂອງນັກທ່ອງທ່ຽວໃຫ້ນັບມື້ນັບດີຂຶ້ນເລື້ອຍໆ.

ຂໍຂອບໃຈຄະນະພະແນກ, ຂະແຫນງ ແລະ ວິຊາການຈາກພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງຫລວງພະບາງ ທີ່ເປັນເຈົ້າການໃນການປະສານງານກັບບັນດາຜູ້ມີສ່ວນຮ່ວມ ແລະ ພາກສ່ວນກ່ຽວຂ້ອງສຳລັບການເກັບກຳຂໍ້ມູນ ແລະ ຈັດກອງປະຊຸມປຶກສາຫາລື, ເຮັດໃຫ້ແຜນຍຸດທະສາດການນຳສະເຫນີຂໍ້ມູນການທ່ອງທ່ຽວນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບສະບັບນີ້ ມີຄວາມສອດຄ່ອງກັບສະພາບຕົວຈິງ ແລະ ສາມາດປະກອບສ່ວນເຂົ້າໃນການພັດທະນາການທ່ອງທ່ຽວ ກໍ່ຄືການພັດທະນາເສດຖະກິດ ແລະ ສັງຄົມຂອງແຂວງຫລວງພະບາງ.

ທ່ານ ທະວີເພັດ ອຸລາ

ຮອງຫົວຫນ້າກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຜູ້ຈັດການໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2

# ສາລະບານ

ຄະນະຮັບຜິດຊອບຄົ້ນຄວ້າ ແລະ ຮ່າງແຜນຍຸດທະສາດ ..... I
ຄຳນຳ ..... II
1) ພາກສະເຫນີ (Introduction) ..... 1
1.1) ການນຳສະເຫນີຂໍ້ມູນການທ່ອງທ່ຽວແມ່ນຫຍັງ? ..... 1
1.2) ປະເພດປ້າຍນຳສະເຫນີຂໍ້ມູນ ..... 2
1.2.1) ປ້າຍຊີ້ບອກ ..... 2
1.2.2) ປ້າຍປະຫວັດແຫລ່ງທ່ອງທ່ຽວ ..... 2
1.2.3) ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ ..... 2
1.3) ກ່ຽວກັບນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ..... 3
1.4) ສະພາບການນຳສະເຫນີຂໍ້ມູນການທ່ອງທ່ຽວ (Planning Context) ..... 4
1.4.1) ສະພາບປັດຈຸບັນ (Current Situation in terms of heritage interpretation) ..... 4
1.4.2) ໂຄງການໃນອາດີດ, ປັດຈຸບັນ ແລະ ອະນາຄົດທີ່ສົ່ງຜົນກະທົບຕໍ່ການນຳສະເຫນີຂໍ້ມູນ ..... 5
2) ເປົ້າຫມາຍ ແລະ ຈຸດປະສົງ (Goals and Objectives) ..... 6
2.1) ເປົ້າຫມາຍ (Interpretive Goals) ..... 6
2.2) ຈຸດປະສົງ (Interpretive Objectives) ..... 6
2.3) ຈຸດປະສົງໃນລະດັບສະຖານທີ່ທ່ອງທ່ຽວ (Site Objectives) ..... 7
3) ຂອບເຂດພື້ນທີ່ການສ້າງແຜນ (Geographic Scope) ..... 8
4) ຫລັກການໃນການນຳສະເຫນີຂໍ້ມູນ (Guiding Principle) ..... 9
5) ກຸ່ມຕະຫລາດເປົ້າຫມາຍ (Target Audiences) ..... 11
6) ສະຖານທີ່ທ່ອງທ່ຽວ ແລະ ເລື່ອງລາວ (Site and Stories) ..... 16
6.1) ນະຄອນຫລວງພະບາງ ..... 16
6.2) ເມືອງຈອມເພັດ ..... 27
6.3) ເມືອງປາກອູ ..... 31
7) ໃຈຄວາມໃນການນຳສະເຫນີ (Theme) ..... 33
8) ແນວທາງການນຳສະເຫນີຂໍ້ມູນ (Conceptual Approach) ..... 34

9) ວິທີການນໍາສະເໜີຂໍ້ມູນ (Interpretive Design Approach) .......... 36
9.1) ເງື່ອນໄຂໃນການອອກແບບ (Design Criteria) .......... 36
9.2) ສັນຍາລັກທີ່ເປັນເອກະລັກຂອງການທ່ອງທ່ຽວ (Brand Identity) .......... 36
9.3) ປ້າຍຊີ້ບອກ (Signage / Wayfinding) .......... 37
9.3.1) ປ້າຍຊີ້ບອກຕາມທາງຫລວງ .......... 38
9.3.2) ປ້າຍຊີ້ບອກແຫລ່ງທ່ອງທ່ຽວໃນຕົວເມືອງ .......... 39
9.3.3) ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວ .......... 39
9.4) ປ້າຍປະຫວັດແຫລ່ງທ່ອງທ່ຽວ (Interpretation Board) .......... 40
9.4.1) ປ້າຍແຜນທີ່ ແລະ ຂໍ້ມູນ .......... 40
9.4.2) ປ້າຍກະດານຂໍ້ມູນ .......... 40
9.4.3) ການອອກແບບ .......... 40
9.5) ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ .......... 41
9.6) ສື່ສິ່ງພິມ (Printed Materials) .......... 41
9.7) ການນໍາທ່ຽວ (Tour Guiding) .......... 42
9.8) ສື່ດີຈີຕອນ (Digital Media) .......... 42
10) ແຜນນໍາສະເໜີຂໍ້ມູນ (Content Delivery Plan) .......... 44
10.1) ສະຖານທີ່ທ່ອງທ່ຽວ .......... 44
10.1.1) ນະຄອນຫລວງພະບາງ .......... 44
10.1.2) ເມືອງຈອມເພັດ .......... 51
10.1.3) ເມືອງປາກອູ .......... 54
10.1.4) ປະຕູສູ່ຈຸດຫມາຍປາຍທາງການທ່ອງທ່ຽວ (Gateway) .......... 56
10.2) ປ້າຍຊີ້ບອກຕາມເສັ້ນທາງ .......... 58
10.2.1) ນະຄອນຫລວງພະບາງ .......... 58
10.2.2) ເມືອງຈອມເພັດ .......... 62
10.2.3) ເມືອງປາກອູ .......... 66
11) ແຜນຈັດຕັ້ງປະຕິບັດ (Action Plan) .......... 69
12) ການຈັດລຽງບູລິມະສິດ (Prioritization) .......... 72

13) ການຕິດຕາມ ແລະ ປະເມີນຜົນ (Monitoring and Evaluation) .................................................. 73
ເອກະສານອ້າງອີງ.............................................................................................................................. 74

# 1) ພາກສະເຫນີ (Introduction)

## 1.1) ການນຳສະເຫນີຂໍ້ມູນການທ່ອງທ່ຽວແມ່ນຫຍັງ?

ການນຳສະເຫນີຂໍ້ມູນການທ່ອງທ່ຽວ (Heritage Interpretation) ແມ່ນສິລະປະໃນການສື່ສານເລື່ອງລາວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ໃນຮູບແບບທີ່ຫນ້າສົນໃຈ ແລະ ສາມາດເຂົ້າໃຈໄດ້ງ່າຍ. ເລື່ອງລາວດັ່ງກ່າວ (Story) ສາມາດນຳສະເຫນີໃນຮູບແບບປ້າຍນຳສະເຫນີຂໍ້ມູນ, ສື່ສິ່ງພິມ, ສື່ດີຈີຕອນ ຫລື ຜ່ານພະນັກງານນຳທ່ຽວ.

ອີງການ Interpretation Canada ໄດ້ກຳນົດຄຳນິຍາມຂອງການນຳສະເຫນີຂໍ້ມູນໄວ້ວ່າ: "ການນຳສະເຫນີຂໍ້ມູນການທ່ອງທ່ຽວ ແມ່ນການສື່ສານເພື່ອອະທິບາຍຄວາມຫມາຍ (reveal meanings) ແລະ ຄວາມສຳພັນ (relationships) ຂອງມໍລະດົກທາງດ້ານທຳມະຊາດ ແລະ ວັດທະນະທຳໃຫ້ແກ່ສັງຄົມໄດ້ຮັບຮູ້, ຜ່ານປະສົບການຕົວຈິງ (first – hand involvement) ກັບວັດຖຸສິ່ງຂອງ, ແບບຈຳລອງ, ທິວທັດ ຫລື ສະຖານທີ່ທ່ອງທ່ຽວ"[1].

ອີງການ HDC International, ໄດ້ໃຫ້ຄຳນິຍາມວ່າ: "ການນຳສະເຫນີຂໍ້ມູນການທ່ອງທ່ຽວ ແມ່ນການສື່ສານເພື່ອແປຂໍ້ມູນດິບ (raw information) ທີ່ເປັນຄຳສັບເຕັກນິກຂອງຜູ້ຊ່ຽວຊານມາເປັນພາສາທີ່ນຳໃຊ້ໃນຊີວິດປະຈຳວັນ, ດ້ວຍວິທີການທີ່ດຶງດູດຈິດໃຈ ແລະ ມີສ່ວນຮ່ວມ ເຊິ່ງສາມາດສ້າງຄວາມປະທັບໃຈໃຫ້ແກ່ຜູ້ມາຢ້ຽມຢາມ"[2].

ການນຳສະເຫນີຂໍ້ມູນການທ່ອງທ່ຽວ ບໍ່ແມ່ນພຽງແຕ່ການຕິດຕັ້ງປ້າຍນຳສະເຫນີຂໍ້ມູນຢູ່ສະຖານທີ່ທ່ອງທ່ຽວເທົ່ານັ້ນ, ແຕ່ຍັງລວມເຖິງການກຳນົດເລື່ອງລາວໃນການນຳສະເຫນີ (Interpretive story) ທີ່ໂດດເດັ່ນ, ການກຳນົດໃຈຄວາມໃນການນຳສະເຫນີ (Interpretive theme) ທີ່ຫນ້າສົນໃຈ ແລະ ນຳໃຊ້ວິທີການນຳສະເຫນີ (Interpretive media and services) ທີ່ແທດເຫມາະກັບກຸ່ມຕະຫລາດເປົ້າຫມາຍ (Target audiences).




[1] https://interpretationcanada.ca/page-18058
[2] https://www.heritagedestination.com/hdc-interpretive-communication

## 1.2) ປະເພດປ້າຍນຳສະເຫນີຂໍ້ມູນ

ໂດຍທົ່ວໄປແລ້ວ ປ້າຍນຳສະເຫນີຂໍ້ມູນປະກອບດ້ວຍ 3 ປະເພດດັ່ງນີ້:

### 1.2.1) ປ້າຍຊີ້ບອກ

ປ້າຍຊີ້ບອກ ຫມາຍເຖິງປ້າຍທີ່ຕິດຕັ້ງຢູ່ຕາມເສັ້ນທາງເພື່ອສະແດງໃຫ້ຮູ້ທິດທາງ ແລະ ໄລຍະທາງຂອງຈຸດຫມາຍປາຍທາງການທ່ອງທ່ຽວ[3], ປະກອບມີ 3 ປະເພດຄື: ປ້າຍຊີ້ບອກຕາມທາງຫລວງ, ປ້າຍຊີ້ບອກແຫລ່ງທ່ອງທ່ຽວພາຍໃນຕົວເມືອງ ແລະ ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວ. ນອກຈາກຊີ້ບອກເສັ້ນທາງ ແລະ ໄລຍະທາງແລ້ວ, ປ້າຍຊີ້ບອກຍັງຊ່ວຍໃນການຫລຸດຜ່ອນອຸບັດຕິເຫດ ດ້ວຍການຕິດຕັ້ງປ້າຍຊີ້ບອກລ່ວງຫນ້າ (Advance warning sign) ເຮັດໃຫ້ນັກທ່ອງທ່ຽວ ຫລື ຜູ້ຂັບຂີ່ພາຫະນະຫລຸດຜ່ອນຄວາມໄວ ເພື່ອກະກຽມປ່ຽນທິດທາງການສັນຈອນຕາມລູກສອນຂອງປ້າຍ.

### 1.2.2) ປ້າຍປະຫວັດແຫລ່ງທ່ອງທ່ຽວ

ປ້າຍປະຫວັດແຫລ່ງທ່ອງທ່ຽວ ຫມາຍເຖິງປ້າຍທີ່ສະແດງຂໍ້ມູນກ່ຽວກັບປະຫວັດຄວາມເປັນມາ ແລະ ເລື່ອງລາວທີ່ຫນ້າສົນໃຈຂອງສະຖານທີ່ທ່ອງທ່ຽວ. ເນື້ອໃນຂອງປ້າຍແມ່ນປະກອບມີ: ຮູບພາບ, ຕົວຫນັງສື ແລະ ແຜນທີ່ສະເພາະຂອງສະຖານທີ່ທ່ອງທ່ຽວ. ປະຫວັດຄວາມເປັນມາ ແລະ ເລື່ອງລາວ ຈະຕ້ອງມີໃຈຄວາມໃນການນຳສະເຫນີ (Theme) ທີ່ຊັດເຈນ ເພື່ອດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວ ແລະ ເຮັດໃຫ້ສາມາດເຂົ້າໃຈເລື່ອງລາວໄດ້ໃນເວລາທີ່ຈຳກັດ.

### 1.2.3) ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ

ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ ຫມາຍເຖິງປ້າຍທີ່ອອກແບບມາເພື່ອດຶງດູດຜູ້ຄົນເພື່ອໃຫ້ມີຄວາມສົນໃຈໃນແຫລ່ງທ່ອງທ່ຽວໃດຫນຶ່ງ ຫລື ຫລາຍບ່ອນໃນປ້າຍດຽວ, ໂດຍອາດຈະມີການສະແດງຮູບພາບທິວທັດຂອງສະຖານທີ່ ຫລື ກິດຈະກຳຕ່າງໆໃນສະຖານທີ່ນັ້ນ ພ້ອມກັບຄຳບັນຍາຍຕ່າງໆເພື່ອສ້າງຄວາມສົນໃຈ. ປ້າຍໂຄສະນາປະກອບມີຫລາຍຮູບແບບຄື: ໂປສເຕີ້ (Poster), ແບນເນີ້ (Banner), ບິວບອດ (Billboard) ແລະ ແພໂນ (Panel).

ລາຍລະອຽດໃນການອອກແບບ ແລະ ການຕິດຕັ້ງປ້າຍແຕ່ລະປະເພດແມ່ນໄດ້ອະທິບາຍໄວ້ໃນບົດທີ 9.

ຕົວຢ່າງປ້າຍທັງສາມປະເພດ




ປ້າຍຊີ້ບອກ




ປ້າຍປະຫວັດແຫລ່ງທ່ອງທ່ຽວ




ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ

---

[3] ປຶ້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເຫນີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2019

### 1.3) ກ່ຽວກັບນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ

ນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ເປັນຈຸດຫມາຍປາຍທາງການທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ, ເນື່ອງຈາກມີວັດທະນະທຳທີ່ເປັນເອກະລັກແບບດັ່ງເດີມທີ່ຍັງສາມາດຮັກສາໄວ້, ມີແຫລ່ງທ່ອງທ່ຽວທາງທຳມະຊາດທີ່ໂດດເດັ່ນ ແລະ ແຫລ່ງທ່ອງທ່ຽວທາງປະຫວັດສາດທີ່ຕິດພັນກັບເລື່ອງລາວທີ່ຫນ້າສົນໃຈໃນຫລາຍຍຸກຫລາຍສະໄຫມ.

ຫລວງພະບາງມີວັດວາອາຮາມຈຳນວນຫລາຍທີ່ມີສະຖາປັດຕະຍະກຳທີ່ສວຍງາມ, ສະທ້ອນເຖິງສີໄມ້ລາຍມືຂອງນາຍຊ່າງຫລວງພະບາງທີ່ມີມາແຕ່ດົນນານ ເປັນຕົ້ນແມ່ນວັດຊຽງທອງ. ວັດວາອາຮາມຕິດພັນກັບວິຖີຊີວິດ ແລະ ຮີດຄອງປະເພນີຂອງຊາວຫລວງພະບາງ, ເຊັ່ນ: ປະເພນີການໃສ່ບາດໃຫ້ຂະບວນພະສົງສຳມະເນນ ທີ່ດຶງດູດໃຫ້ນັກທ່ອງທ່ຽວຕື່ນແຕ່ເຊົ້າເພື່ອມາສຳພັດກັບວັດທະນະທຳດັ່ງກ່າວ. ນອກຈາກນັ້ນ, ຍັງມີມໍລະດົກທາງດ້ານວັດທະນະທຳອີກຫລາຍຢ່າງທີ່ຍັງຄົງຖືກຮັກສາໄວ້ເຊັ່ນ: ເຮືອນຮູບຊົງລາວທີ່ເຮັດດ້ວຍໄມ້, ການຜະລິດເຄື່ອງຫັດຖະກຳໂດຍນາຍຊ່າງຫລວງພະບາງທີ່ມີສີໄມ້ລາຍມື, ການປຸງແຕ່ງອາຫານທ້ອງຖິ່ນ, ການຟ້ອນລຳ, ດົນຕີພື້ນເມືອງ ລວມໄປເຖິງຮີດຄອງປະເພນີທີ່ປະຕິບັດສືບຕໍ່ກັນມາໄລຍະບຸນປີໃຫມ່ລາວ ແລະ ວັນສຳຄັນທາງສາດສະຫນາ. ການນຳສະເຫນີຂໍ້ມູນດັ່ງກ່າວໃຫ້ແກ່ນັກທ່ອງທ່ຽວໄດ້ຮັບຮູ້, ກໍ່ເປັນອີກວິທີຫນຶ່ງທີ່ສາມາດອະນຸລັກວັດທະນະທຳອັນຈີບງາມເຫລົ່ານີ້ໄວ້ ໃຫ້ຄົງຢູ່ສູ່ຄົນລຸ້ນຫລັງ.

ແຫລ່ງທ່ອງທ່ຽວທາງທຳມະຊາດຂອງນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ກໍ່ມີຄວາມໂດດເດັ່ນ ແລະຍັງມີລັກສະນະແບບດັ່ງເດີມ. ຫນຶ່ງໃນສະຖານທີ່ທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມແມ່ນນ້ຳຕົກຕາດກວາງຊີ ທີ່ມີຄວາມສວຍງາມ ແລະ ສະທ້ອນເຖິງຄວາມອຸດົມສົມບູນຂອງຊັບພະຍາກອນທຳມະຊາດ. ທິວທັດຂອງຕົວເມືອງຫລວງພະບາງຈາກເທິງພະທາດພູສີກໍ່ມີຄວາມສວຍງາມ, ໂດຍສະເພາະຍາມຕາເວັນກຳລັງຕົກດິນ. ນອກຈາກເຫັນສະພາບອາຄານ, ວັດວາອາຮາມ ແລະ ເຮືອນຊານບ້ານຊ່ອງທີ່ຖືກອະນຸລັກເປັນຢ່າງດີແລ້ວ, ຍັງເຫັນແມ່ນ້ຳຂອງ ແລະ ສາຍນ້ຳຄານ ທີ່ໄຫລຜ່ານຕົວເມືອງພ້ອມທັງວິຖີຊີວິດຂອງຊາວຫລວງພະບາງຕາມລຳແມ່ນ້ຳ.

ຫລວງພະບາງເປັນເມືອງຫລວງເກົ່າຂອງອານາຈັກລ້ານຊ້າງ, ຈຶ່ງມີປະຫວັດຄວາມເປັນມາທີ່ຍາວນານ ແລະ ຕິດພັນກັບຂະບວນວິວັດຂອງຊາດໃນຫລາຍຍຸກຫລາຍສະໄຫມ. ມີເລື່ອງລາວນັບຕັ້ງແຕ່ສະໄຫມເຈົ້າຟ້າງຸ່ມ, ເຈົ້າໄຊເສດຖາທິລາດຈົນເຖິງເຈົ້າຊີວິດອົງສຸດທ້າຍ. ນອກຈາກນັ້ນ, ຍັງມີອາຄານເກົ່າສະໄຫມລ່າເມືອງຂຶ້ນຝລັ່ງ ແລະ ວັດຖຸບູຮານທີ່ມີຄຸນຄ່າເປັນຕົ້ນແມ່ນພະບາງ ພະພຸດທະຮູບສັກສິດ ແລະ ເປັນຂອງຄ້ຳຂອງຄູນຄູ່ບ້ານຄູ່ເມືອງລາວ.

## 1.4) ສະພາບການນຳສະເໜີຂໍ້ມູນການທ່ອງທ່ຽວ (Planning Context)

### 1.4.1) ສະພາບປັດຈຸບັນ (Current Situation in terms of heritage interpretation)

ການນຳສະເໜີຂໍ້ມູນການທ່ອງທ່ຽວຂອງນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ແມ່ນເຮັດໄດ້ດີພໍສົມຄວນ, ແຕ່ຍັງບໍ່ທັນທົ່ວເຖິງ. ປ້າຍປະຫວັດແຫລ່ງທ່ອງທ່ຽວແມ່ນສາມາດພົບເຫັນຢູ່ຕາມສະຖານທີ່ທ່ອງທ່ຽວບາງແຫ່ງເທົ່ານັ້ນເຊັ່ນ: ວັດຊຽງທອງ, ວັດວິຊຸນ ແລະ ພະທາດພູສີ, ແຕ່ທີ່ຕັ້ງຂອງປ້າຍດັ່ງກ່າວຍັງບໍ່ທັນເໝາະສົມ ເນື່ອງຈາກກີດຂວາງທາງຍ່າງເວລາມີກຸ່ມນັກທ່ອງທ່ຽວຢືນອ່ານ. ນອກຈາກນັ້ນ, ບາງປ້າຍຍັງມີເນື້ອໃນທີ່ຍາວ, ບໍ່ທັນກຳນົດໃຈຄວາມໃນການນຳສະເໜີທີ່ຊັບເຈນ ເຮັດໃຫ້ນັກທ່ອງທ່ຽວບໍ່ສາມາດຈົດຈຳເລື່ອງລາວ ແລະ ເຊື່ອມໂຍງກັບສະຖານທີ່ທ່ອງທ່ຽວໄດ້.

ປ້າຍຊີ້ບອກຕາມເສັ້ນທາງພາຍໃນຕົວເມືອງ ສ່ວນໃຫຍ່ແມ່ນຖືກຕິດຕັ້ງຢູ່ຕາມແຍກທີ່ສຳຄັນພາຍໃນນະຄອນຫລວງພະບາງ ແລະ ເມືອງຈອມເພັດເທົ່ານັ້ນເຊັ່ນ: ສີ່ແຍກສູນຂໍ້ມູນຂ່າວສານການທ່ອງທ່ຽວ, ສາມແຍກວັດວິຊຸນ, ສາມແຍກທ່າເຮືອບ້ານຊຽງແມນ, ສາມແຍກທາງເຂົ້າວັດຈອມເພັດ ແລະ ຢູ່ບ້ານຈ່ານເໜືອ. ການຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງພາຍໃນຕົວເມືອງແມ່ນຍັງບໍ່ທັນທົ່ວເຖິງ, ເຮັດໃຫ້ນັກທ່ອງທ່ຽວຍັງມີຄວາມຫຍຸ້ງຍາກໃນການເຂົ້າເຖິງສະຖານທີ່ທ່ອງທ່ຽວ. ນອກຈາກນັ້ນ, ປ້າຍຊີ້ບອກຕາມທາງຫລວງບາງແຫ່ງກໍ່ມີສະພາບຊຸດໂຊມ ແລະ ມີສິ່ງບົດບັງເຊັ່ນ: ງ່າໄມ້ ແລະ ປ້າຍຊື່ບ້ານ, ເປັນຕົ້ນແມ່ນປ້າຍຊີ້ບອກທາງເຂົ້າບ້ານຊ່າງໄຫ. ຍັງຂາດປ້າຍເຕືອນລ່ວງໜ້າ ເພື່ອໃຫ້ຜູ້ເດີນທາງຫລຸດຜ່ອນຄວາມໄວ ກ່ອນຈະຮອດທາງແຍກ. ສ່ວນປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວກໍ່ຍັງມີຈຳກັດ, ສາມາດພົບເຫັນແຕ່ຢູ່ຫໍພິພິດທະພັນແຫ່ງຊາດຫລວງພະບາງ, ເຮັດໃຫ້ນັກທ່ອງທ່ຽວມີຄວາມຫຍຸ້ງຍາກໃນການເຂົ້າເຖິງການບໍລິການ ແລະ ສິ່ງອຳນວຍຄວາມສະດວກພາຍໃນສະຖານທີ່ທ່ອງທ່ຽວ. ຄຽງຄູ່ກັນນັ້ນ, ຂໍ້ມູນຂອງສະຖານທີ່ທ່ອງທ່ຽວທີ່ມີຢູ່ໃນແຜນທີ່ອອນລາຍ (Google Maps) ກໍ່ຍັງມີຈຳກັດ, ເຊິ່ງນິຍົມນຳໃຊ້ຫລາຍໃນກຸ່ມນັກທ່ອງທ່ຽວອິດສະຫລະ ທີ່ເບິ່ງແຜນທີ່ດັ່ງກ່າວຢູ່ໃນມືຖືຂອງເຂົາເຈົ້າເພື່ອເຂົ້າເຖິງສະຖານທີ່ທ່ອງທ່ຽວ.

ສື່ສິ່ງພິມແມ່ນສາມາດພົບເຫັນໄດ້ຢູ່ຕາມສູນຂໍ້ມູນຂ່າວສານການທ່ອງທ່ຽວ ທັງຢູ່ສະໜາມບິນຫລວງພະບາງ ແລະ ພາຍໃນຕົວເມືອງ ໃນຮູບແບບແຜ່ນພັບໂຄສະນາ ແລະ ແຜນທີ່ທ່ອງທ່ຽວ, ແຕ່ນັກທ່ອງທ່ຽວກໍ່ນິຍົມນຳໃຊ້ນັບມື້ນັບໜ້ອຍລົງ ເນື່ອງຈາກການເຂົ້າເຖິງຂໍ້ມູນທາງອອນລາຍດ້ວຍມືຖືແມ່ນມີຄວາມສະດວກ ແລະ ມີຂໍ້ມູນທີ່ສົດໃໝ່ກວ່າ. ເວັບໄຊ ແລະ ແອບມືຖືທ່ອງທ່ຽວແຂວງຫລວງພະບາງ[4] ແມ່ນມີຂໍ້ມູນທີ່ຫລາກຫລາຍ, ອີກທັງຍັງມີຄຳບັນຍາຍສຽງ (Audio Guide) ໃຫ້ນັກທ່ອງທ່ຽວສາມາດດາວໂຫລດ ແລະ ຮັບຟັງການນຳສະເໜີຂໍ້ມູນບາງສະຖານທີ່ທ່ອງທ່ຽວອີກດ້ວຍ. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນທາງອອນລາຍຢູ່ໃນເວັບໄຊທ່ອງທ່ຽວອື່ນກໍ່ຍັງມີຈຳກັດ, ໂດຍສະເພາະແມ່ນ TripAdvisor[5], ເຊິ່ງເປັນຊ່ອງທາງທີ່ສາມາດນຳສະເໜີຂໍ້ມູນ ແລະ ຮັບຟັງຄຳຄິດຄຳເຫັນຂອງນັກທ່ອງທ່ຽວທີ່ມີຕໍ່ສະຖານທີ່ທ່ອງທ່ຽວໄດ້ອີກດ້ວຍ.

---

[4] https://tourismluangprabang.org

[5] https://www.tripadvisor.com/Tourism-g295415-Luang_Prabang_Luang_Prabang_Province-Vacations.html

### 1.4.2) ໂຄງການໃນອາດີດ, ປັດຈຸບັນ ແລະ ອະນາຄົດທີ່ສົ່ງຜົນກະທົບຕໍ່ການນໍາສະເໜີຂໍ້ມູນ

ຫລວງພະບາງເປັນແຂວງໜຶ່ງທີ່ຮັບການສະໜັບສະໜູນຈາກຫລາຍໂຄງການໃນຂະແໜງການທ່ອງທ່ຽວ, ເຊິ່ງສົ່ງຜົນກະທົບຕໍ່ການນໍາສະເໜີຂໍ້ມູນຢູ່ໃນຈຸດໝາຍປາຍທາງການທ່ອງທ່ຽວ. ໃນປີ 1995, ຫລວງພະບາງຖືກຮອງຮັບເປັນເມືອງມໍລະດົກໂລກຈາກອົງການຢູແນສໂກ (UNESCO). ນອກຈາກເຮັດໃຫ້ຫລວງພະບາງເປັນທີ່ຮູ້ຈັກເພີ່ມຂຶ້ນໃນຕະຫລາດການທ່ອງທ່ຽວໂລກແລ້ວ ຍັງເຮັດໃຫ້ເກີດມີການອະນຸລັກຮັກສາສະຖາປັດຕະຍະກໍາລາວແບບດັ້ງເດີມ ແລະ ແບບອານານິຄົມຂອງເອີລົບ[6]. ໃນປີ 2014 – 2019, ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ (GMS Tourism Infrastructure for Inclusive Growth Project – TIIGP) ເຊິ່ງໄດ້ຮັບທຶນສະໜັບສະໜູນຈາກທະນາຄານພັດທະນາອາຊີ (Asian Development Bank – ADB) ກໍ່ໄດ້ມີການປັບປຸງເສັ້ນທາງການເຂົ້າເຖິງ ແລະ ສິ່ງອໍານວຍຄວາມສະດວກຢູ່ສະຖານທີ່ທ່ອງທ່ຽວເມືອງຈອມເພັດ ແລະ ເມືອງປາກອູ. ນອກຈາກນັ້ນ, ຍັງໄດ້ສ້າງແຜນປົກປັກຮັກສາ ແລະ ຄຸ້ມຄອງມໍລະດົກທາງດ້ານທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດເພື່ອການທ່ອງທ່ຽວແຂວງຫລວງພະບາງ, ສ້າງຫລັກສູດການຝຶກອົບຮົມພະນັກງານນໍາທ່ຽວມໍລະດົກ, ຜະລິດສື່ສິ່ງພິມ ແລະ ຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວ[7]. ໃນປີ 2016 – 2019, ໜຶ່ງໃນກິດຈະກໍາສົ່ງເສີມຂອງໂຄງການໃສ່ໃຈຫລວງພະບາງ (Luang Prabang – Handle with Care[8]) ແມ່ນການປົກປັກຮັກສາມໍລະດົກທາງວັດທະນະທໍາ, ປ້າຍແນະນໍາວິທີການປະພຶດຕົນເອງ ແລະ ການນຸ່ງຖືໃຫ້ແກ່ນັກທ່ອງທ່ຽວ ຍັງສາມາດພົບເຫັນຢູ່ທາງເຂົ້າວັດຫລາຍແຫ່ງ.

ປັດຈຸບັນ, ແຂວງຫລວງພະບາງແມ່ນໜຶ່ງໃນສາມແຂວງເປົ້າໝາຍຂອງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 (Second GMS Tourism Infrastructure for Inclusive Growth Project – TIIGP) ລະຫວ່າງປີ 2019 – 2025. ໜຶ່ງໃນກິດຈະກໍາຂອງໂຄງການແມ່ນການສະໜັບສະໜັບການນໍາສະເໜີຂໍ້ມູນການທ່ອງທ່ຽວ, ນັບຕັ້ງແຕ່ການສ້າງ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດການນໍາສະເໜີຂໍ້ມູນການທ່ອງທ່ຽວສະບັບນີ້[9]. ອົງການຮ່ວມມືສາກົນຍີ່ປຸ່ນ (JICA) ກໍາລັງຢູ່ໃນຂັ້ນຕອນສຶກສາຂໍ້ມູນເພື່ອສ້າງໂຄງການໃໝ່ ເຊິ່ງມີເປົ້າໝາຍປັບປຸງການນໍາສະເໜີຂໍ້ມູນການທ່ອງທ່ຽວຢູ່ແຂວງຫລວງພະບາງ. ກິດຈະກໍາຫລັກຂອງໂຄງການແມ່ນສຸມໃສ່ການປັບປຸງທັກສະຂອງພະນັກງານນໍາທ່ຽວມໍລະດົກ ຜ່ານການຝຶກອົບຮົມທີ່ເນັ້ນໜັກການລົງພາກປະຕິບັດຕົວຈິງ.

ການປັບປຸງການນໍາສະເໜີຂໍ້ມູນການທ່ອງທ່ຽວນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ຈະຕ້ອງອີງໃສ່ໂຄງລ່າງພື້ນຖານ, ສິ່ງອໍານວຍຄວາມສະດວກ ແລະ ຊັບພະຍາກອນຕ່າງໆທີ່ໂຄງການໄລຍະຜ່ານມາໄດ້ສ້າງໄວ້ແລ້ວ ພ້ອມທັງຮ່ວມມືກັບທຸກພາກສ່ວນທີ່ມີເປົ້າໝາຍອັນດຽວກັນ ເພື່ອເຮັດໃຫ້ກິດຈະກໍາມີປະສິດທິພາບ ແລະ ປະສິດທິຜົນ.

[6] https://whc.unesco.org/en/list/479
[7] Project Administration Manual, Greater Mekong Subregion Tourism Infrastructure for Inclusive Growth Project, page 6, Asian Development Bank, 2014
[8] https://www.giz.de/en/worldwide/38618.html
[9] Project Administration Manual, Second Greater Mekong Subregion Tourism Infrastructure for Inclusive Growth Project, Page 7, Asian Development Bank, 2018

## 2) ເປົ້າຫມາຍ ແລະ ຈຸດປະສົງ (Goals and Objectives)

### 2.1) ເປົ້າຫມາຍ (Interpretive Goals)

ຄູ່ມືການສ້າງແຜນແມ່ບົດການນຳສະເໜີຂໍ້ມູນ (Interpretive Master Planning[10]) ຂອງ ທ່ານ ຈອນ (John A Veverka) ຂອງສຳນັກພິມ MuseumEtc ປະເທດສະກອດແລັນໄດ້ກຳນົດໄວ້ວ່າ: ເປົ້າຫມາຍຂອງການນຳສະເໜີຂໍ້ມູນແມ່ນສິ່ງທີ່ເຮົາຕ້ອງການໃຫ້ມັນເກີດຂຶ້ນ, ບໍ່ຕ້ອງສະເພາະເຈາະຈົງ ແລະ ບໍ່ຈຳເປັນຕ້ອງວັດແທກໄດ້ຄືກັນກັບຈຸດປະສົງ. ສະນັ້ນ, ເປົ້າຫມາຍຂອງການນຳສະເໜີຂໍ້ມູນການທ່ອງທ່ຽວນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບແມ່ນ:

1) ເພື່ອຍົກລະດັບປະສົບການຂອງນັກທ່ອງທ່ຽວ (To enhance visitor experience)

ຖ້ານັກທ່ອງທ່ຽວມີປະສົບການທີ່ດີໃນການຢ້ຽມຢາມສະຖານທີ່ທ່ອງທ່ຽວ ກໍ່ຈະສົ່ງຜົນເຖິງຄວາມເພິ່ງພໍໃຈຂອງເຂົາເຈົ້າຢູ່ຈຸດຫມາຍປາຍທາງການທ່ອງທ່ຽວ. ເພື່ອເຮັດໃຫ້ນັກທ່ອງທ່ຽວມີປະສົບການທີ່ດີ, ການນຳສະເໜີຂໍ້ມູນຢູ່ສະຖານທີ່ທ່ອງທ່ຽວ ບໍ່ຄວນແຕ່ສະຫນອງຂໍ້ມູນທີ່ຫນ້າສົນໃຈໃຫ້ແກ່ນັກທ່ອງທ່ຽວເທົ່ານັ້ນ (ເພາະເຂົາເຈົ້າຈະລືມ), ແຕ່ຈະຕ້ອງນຳພາໃຫ້ເຂົາເຈົ້າຫາຂໍ້ສະຫລຸບຂອງເລື່ອງລາວຈາກຂໍ້ມູນດັ່ງກ່າວດ້ວຍຕົນເອງ.

2) ເພື່ອປົກປັກຮັກສາມໍລະດົກທາງດ້ານການທ່ອງທ່ຽວ (To protect the site and its resources)

ການນຳສະເໜີຂໍ້ມູນຊ່ວຍໃນການປົກປັກຮັກສາມໍລະດົກທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ. ນັກທ່ອງທ່ຽວບາງກຸ່ມທີ່ຂາດຄວາມຮັບຮູ້ໃນການປະພຶດຕົນເອງເວລາຢ້ຽມຢາມວັດວາອາຮາມ, ນ້ຳຕົກຕາດ ຫລື ສະຖານທີ່ສຳຄັນທາງປະຫວັດສາດ ກໍ່ຈະສົ່ງຜົນກະທົບທາງລົບໃຫ້ແກ່ສະຖານທີ່ທ່ອງທ່ຽວ. ການນຳສະເໜີຂໍ້ມູນຈະຊ່ວຍໃຫ້ເຂົາເຈົ້າມີຄວາມເຂົ້າໃຈ ແລະ ເຫັນເຖິງຄວາມສຳຄັນຂອງສະຖານທີ່ ແລະ ສິ່ງແວດລ້ອມອ້ອມຂ້າງ.

### 2.2) ຈຸດປະສົງ (Interpretive Objectives)

ຈຸດປະສົງແມ່ນສິ່ງທີ່ຕ້ອງເຮັດໃຫ້ສຳເລັດເພື່ອບັນລຸເປົ້າຫມາຍຂ້າງເທິງ ແລະ ເປັນສິ່ງທີ່ສາມາດວັດແທກໄດ້, ການນຳສະເໜີຂໍ້ມູນການທ່ອງທ່ຽວນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບແມ່ນມີຈຸດປະສົງດັ່ງນີ້:

1) ນັກທ່ອງທ່ຽວສ່ວນໃຫຍ່ຈະສາມາດຈົດຈຳໃຈຄວາມໃນການນຳສະເໜີ (Theme) ຂອງເລື່ອງລາວທີ່ນຳສະເໜີຢູ່ສະຖານທີ່ທ່ອງທ່ຽວພາຍຫລັງສຳເລັດການທ່ອງທ່ຽວຢູ່ນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ.
2) ນັກທ່ອງທ່ຽວສ່ວນໃຫຍ່ທີ່ມາຢ້ຽມຢາມນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ຈະສາມາດເດີນທາງເຂົ້າເຖິງແຫລ່ງທ່ອງທ່ຽວໄດ້ງ່າຍຂຶ້ນ ໂດຍອາໄສປ້າຍຊີ້ບອກຕາມເສັ້ນທາງ ແລະ ແຜນທີ່ອອນລາຍ.

[10] Interpretive Master Planning, Volume One: Strategies for the New Millennium, Page 70, John A Veverka, 2018

## 2.3) ຈຸດປະສົງໃນລະດັບສະຖານທີ່ທ່ອງທ່ຽວ (Site Objectives)

ເພື່ອຈະບັນລຸຈຸດປະສົງລວມຂ້າງເທິງ, ເຮົາຈຳເປັນຕ້ອງກຳນົດຈຸດປະສົງລົງເລິກໃນລະດັບສະຖານທີ່ທ່ອງທ່ຽວ ເຊິ່ງແບ່ງອອກເປັນ 3 ລະດັບຄື[11]:

ຈຸດປະສົງໃນການຮຽນຮູ້ (Learning objectives): ແມ່ນສິ່ງທີ່ເຮົາຕ້ອງການໃຫ້ນັກທ່ອງທ່ຽວໄດ້ຮຽນຮູ້ ຫລື ຈົດຈຳຜ່ານການນຳສະເຫນີຂໍ້ມູນເຊັ່ນ: ພາຍຫລັງການຢ້ຽມຢາມບ້ານຊ່າງໄຫ, ນັກທ່ອງທ່ຽວສ່ວນໃຫຍ່ຈະສາມາດອະທິບາຍຂັ້ນຕອນການຕົ້ມເຫລົ້າຂາວແບບພື້ນບ້ານ. ພາຍຫລັງທີ່ຢ້ຽມຢາມວັດລ່ອງຄູນ, ນັກທ່ອງທ່ຽວສ່ວນໃຫຍ່ຈະສາມາດອະທິບາຍຄວາມຫມາຍຂອງຮູບແຕ້ມທະຫານຈີນຢູ່ປະຕູທາງເຂົ້າວັດ.

ຈຸດປະສົງໃນການປ່ຽນແປງພຶດຕິກຳ (Behavior objective): ແມ່ນສິ່ງທີ່ເຮົາຢາກໃຫ້ນັກທ່ອງທ່ຽວເຮັດຜ່ານການນຳສະເຫນີຂໍ້ມູນເຊັ່ນ: ນັກທ່ອງທ່ຽວສ່ວນໃຫຍ່ຈະຊື້ຜະລິດຕະພັນເຫລົ້າຂາວບ້ານຊ່າງໄຫເປັນເຄື່ອງຝາກຂອງຕ້ອນ. ຖ້າສາມາດບັນລຸຈຸດປະສົງນີ້, ປະຊາຊົນບ້ານຊ່າງໄຫກໍ່ຈະມີລາຍຮັບຫລາຍຂຶ້ນ ເຊິ່ງດີກວ່າການບັນລຸພຽງແຕ່ຈຸດປະສົງຂອງການຮຽນຮູ້ທີ່ນັກທ່ອງທ່ຽວພຽງແຕ່ເຂົ້າໃຈຂັ້ນຕອນການຕົ້ມເຫລົ້າ, ແຕ່ບໍ່ໄດ້ຊື້ຜະລິດຕະພັນ. ຕົວຢ່າງກ່ຽວກັບຮູບແຕ້ມທະຫານຢູ່ວັດລ່ອງຄູນແມ່ນ, ນັກທ່ອງທ່ຽວສ່ວນໃຫຍ່ຈະມີພຶດຕິກຳທີ່ເຫມາະສົມເວລາຢ້ຽມຢາມວັດວາອາຮາມ.

ຈຸດປະສົງໃນການປ່ຽນແປງອາລົມ (Emotional objectives): ເຮົາຈະບໍ່ສາມາດປ່ຽນແປງພຶດຕິກຳນັກທ່ອງທ່ຽວໄດ້, ຖ້າຍັງບໍ່ສາມາດປ່ຽນແປງອາລົມ ຫລື ຄວາມຮູ້ສຶກຂອງເຂົາເຈົ້າ. ແມ່ນສິ່ງທີ່ເຮັດໃຫ້ນັກທ່ອງທ່ຽວຈົດຈຳເລື່ອງລາວຂອງສະຖານທີ່ທ່ອງທ່ຽວ ເນື່ອງຈາກມັນກະທົບຈິດໃຈຂອງເຂົາເຈົ້າ (Strong feeling), ເຊິ່ງນຳໄປສູ່ການປ່ຽນແປງທາງດ້ານພຶດຕິກຳຂອງເຂົາເຈົ້າ. ນັກທ່ອງທ່ຽວຮູ້ສຶກປະຫລາດໃຈ, ໃຈຮ້າຍ, ໂສກເສົ້າ, ຮູ້ສຶກຜິດ ແລະ ພາກພູມໃຈ ຜ່ານເລື່ອງລາວທີ່ນຳສະເຫນີກ່ຽວກັບສະຖານທີ່ທ່ອງທ່ຽວ. ນັກທ່ອງທ່ຽວສ່ວນໃຫຍ່ຈະຮູ້ສຶກປະຫລາດໃຈກ່ຽວກັບຂັ້ນຕອນການຕົ້ມເຫລົ້າຂາວແບບພື້ນບ້ານ, ເນື່ອງຈາກເຂົາເຈົ້າຄຸ້ນເຄີຍກັບຂັ້ນຕອນການຜະລິດແບບໂຮງຈັກໂຮງງານ. ໃນບາງຈຸດຫມາຍປາຍທາງການທ່ອງທ່ຽວກໍ່ເປີດໃຫ້ນັກທ່ອງທ່ຽວຢ້ຽມຢາມອະນຸສອນສະຖານຂອງສະຫນາມຮົບ, ນັກທ່ອງທ່ຽວຈະຮູ້ສຶກໂສກເສົ້າຕໍ່ກັບເລື່ອງລາວຂອງການສູນເສຍ ແລະ ເຂົ້າໃຈຜົນຮ້າຍຂອງສົງຄາມ.

ແນວທາງການກຳນົດຈຸດປະສົງໃນການນຳສະເຫນີຂໍ້ມູນໃນລະດັບສະຖານທີ່ທ່ອງທ່ຽວຂ້າງເທິງ ຈະຖືກນຳໃຊ້ໄລຍະອອກແບບເນື້ອໃນ ແລະ ເລື່ອງລາວ, ເຊິ່ງຈະຍັງບໍ່ທັນໄດ້ກຳນົດໄວ້ໃນແຜນຍຸດທະສາດການນຳສະເຫນີຂໍ້ມູນສະບັບນີ້.

[11] Interpretive Master Planning, Volume One: Strategies for the New Millennium, Page 70, John A Veverka, 2018

## 3) ຂອບເຂດພື້ນທີ່ການສ້າງແຜນ (Geographic Scope)

ການສ້າງແຜນການນຳສະເຫນີຂໍ້ມູນການທ່ອງທ່ຽວນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ແມ່ນສຸມໃສ່ພາຍໃນນະຄອນຫລວງພະບາງ, ເມືອງຈອມເພັດ ແລະ ເມືອງປາກອູ. ທັງສາມເຂດແມ່ນມີທ່າແຮງດ້ານການທ່ອງທ່ຽວ, ມີນັກທ່ອງທ່ຽວໄປຢ້ຽມຢາມ ແລະ ມີທຸລະກິດໃນຂະແຫນງການທ່ອງທ່ຽວດຳເນີນຢູ່. ນອກຈາກນັ້ນ, ເລື່ອງລາວ ແລະ ປະຫວັດຄວາມເປັນມາຂອງສະຖານທີ່ທ່ອງທ່ຽວທາງປະຫວັດສາດ, ທຳມະຊາດ ແລະ ວັດທະນະທຳ ຍັງມີຄວາມເຊື່ອມໂຍງກັນ ເຮັດໃຫ້ສາມາດສ້າງເປັນວົງຈອນ ແລະ ເສັ້ນທາງການທ່ອງທ່ຽວ ໂດຍອີງໃສ່ໃຈຄວາມໃນການນຳສະເຫນີ (theme).

ແຜນທີ່: ແຂວງຫລວງພະບາງ



## 4) ຫລັກການໃນການນໍາສະເຫນີຂໍ້ມູນ (Guiding Principle)

ຫລັກການໃນການນໍາສະເຫນີຂໍ້ມູນການທ່ອງທ່ຽວແມ່ນອີງໃສ່ 6 ຫລັກການຂອງ ທ່ານ ຟຣີແມນ ທິວເດັນ (Tilden's six Interpretive Principles[12]) ເຊິ່ງມີລາຍລະອຽດດັ່ງນີ້:

1) **ການນໍາສະເຫນີຂໍ້ມູນຕ້ອງມີຄວາມສອດຄ່ອງກັບປະສົບການຂອງນັກທ່ອງທ່ຽວ**

ການນໍາສະເຫນີຂໍ້ມູນ ນອກຈາກອີງໃສ່ເລື່ອງລາວທີ່ຫນ້າສົນໃຈຂອງສະຖານທີ່ທ່ອງທ່ຽວແລ້ວ, ຈະຕ້ອງຄິດຕື່ມອີກວ່າ ນັກທ່ອງທ່ຽວຈະສາມາດເຂົ້າໃຈເລື່ອງລາວດັ່ງກ່າວໄດ້ບໍ່ ໂດຍອີງໃສ່ປະສົບການ ແລະ ຄວາມຮັບຮູ້ຂອງເຂົາເຈົ້າ. ຂໍ້ມູນທີ່ນໍາສະເຫນີຈະຕ້ອງສອດຄ່ອງ ຫລື ສາມາດເຊື່ອມໂຍງກັບຊີວິດປະຈໍາວັນຂອງນັກທ່ອງທ່ຽວ. ສະນັ້ນ, ການມີຄວາມເຂົ້າໃຈທີ່ເລິກເຊິ່ງກ່ຽວກັບນັກທ່ອງທ່ຽວຈຶ່ງມີຄວາມສໍາຄັນໃນການອອກແບບການນໍາສະເຫນີຂໍ້ມູນ ເຊິ່ງໄດ້ອະທິບາຍໃນບົດທີ 5 ກຸ່ມຕະຫລາດເປົ້າຫມາຍ.

2) **ການສະຫນອງພຽງແຕ່ຂໍ້ມູນຂ່າວສານ (Information) ແມ່ນຍັງບໍ່ຖືວ່າເປັນການນໍາສະເຫນີ ຫລື ການອະທິບາຍຄວາມຫມາຍຂໍ້ມູນ (Interpretation)**

ການນໍາສະເຫນີຂໍ້ມູນ ຫລື ການອະທິບາຍຄວາມຫມາຍ (Interpretation) ແມ່ນການເປີດເຜີຍເລື່ອງລາວຂອງສະຖານທີ່ທ່ອງທ່ຽວໂດຍນໍາໃຊ້ຂໍ້ມູນຂ່າວສານ (Information) ທີ່ຖືກນໍາມາວິເຄາະ ແລະ ຮຽບຮຽງໃຫມ່ໃຫ້ເຂົ້າໃຈງ່າຍ ແລະ ຫນ້າສົນໃຈຕໍ່ກຸ່ມຕະຫລາດເປົ້າຫມາຍ. ຂໍ້ມູນກ່ຽວກັບສະຖານທີ່ທ່ອງທ່ຽວ ຫລື ປະຫວັດຄວາມເປັນມາຂອງວັດທະນະທໍາ ແລະ ຮີດຄອງປະເພນີ ສ່ວນໃຫຍ່ແມ່ນມີເນື້ອໃນທີ່ຍາວ ແລະ ເຕັມໄປດ້ວຍຄໍາສັບເຕັກນິກ ຫລື ຄໍາສັບທາງວິຊາການ ເຮັດໃຫ້ຄົນທົ່ວໄປເຂົ້າໃຈຍາກ. ການກະຕຸ້ນຄວາມສົນໃຈຂອງນັກທ່ອງທ່ຽວ ແມ່ນຕ້ອງກໍານົດໃຈຄວາມໃນການນໍາສະເຫນີຂໍ້ມູນ (Theme) ຂອງສະຖານທີ່ທ່ອງທ່ຽວຂຶ້ນມາໃຫມ່ໃຫ້ມີຄວາມຫນ້າສົນໃຈ. ເລື່ອງລາວ ແລະ ໃຈຄວາມໃນການນໍາສະເຫນີ ແມ່ນໄດ້ອະທິບາຍໄວ້ໃນບົດທີ 6 ແລະ 7.

3) **ການນໍາສະເຫນີຂໍ້ມູນແມ່ນສິລະປະ (Art), ເຊິ່ງໂຮມເອົາຫລາກຫລາຍສິລະປະເຂົ້າກັນ.**

ການຕິດຕັ້ງພຽງແຕ່ປ້າຍປະຫວັດແຫລ່ງທ່ອງທ່ຽວ (Interpretation Board) ຢູ່ສະຖານທີ່ທ່ອງທ່ຽວ ອາດຍັງບໍ່ສາມາດດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວທຸກຄົນໄດ້, ເນື່ອງຈາກເຂົາເຈົ້າມີວິທີການຮັບຮູ້ຂໍ້ມູນທີ່ແຕກຕ່າງກັນ. ບາງຄົນຮຽນຮູ້ຈາກການອ່ານ, ບາງຄົນຮຽນຮູ້ຈາກການຟັງ, ເບິ່ງ ຫລື ໄດ້ສໍາພັດຕົວຈິງ. ສະນັ້ນ, ວິທີການນໍາສະເຫນີຂໍ້ມູນ (Interpretive media and services) ໃນແຕ່ລະສະຖານທີ່ທ່ອງທ່ຽວ ຈະຕ້ອງກໍານົດໃຫ້ສອດຄ່ອງກັບແຕ່ລະກຸ່ມຕະຫລາດເປົ້າຫມາຍ.

---

[12] Interpreting Our Heritage, Freeman Tilden, Third Edition, Page 9, 1977

4) **ເປົ້າຫມາຍຂອງການນຳສະເຫນີຂໍ້ມູນ ບໍ່ແມ່ນການສິດສອນ (Instruction), ແຕ່ເປັນການກະຕຸ້ນຄວາມຢາກຮູ້ຢາກເຫັນ ແລະ ຄວາມສົນໃຈຂອງນັກທ່ອງທ່ຽວ (Provocation).**

   ການກະຕຸ້ນໃຫ້ນັກທ່ອງທ່ຽວເກີດມີຄວາມສົນໃຈ ແລະ ຢາກຮູ້ລົງເລິກຕື່ມດ້ວຍຕົນເອງກ່ຽວກັບເລື່ອງລາວຂອງສະຖານທີ່ທ່ອງທ່ຽວ ນອກຈາກການສະຫນອງຂໍ້ມູນໃຫ້ແກ່ເຂົາເຈົ້າພຽງແຕ່ຝ່າຍດຽວ, ເປັນວິທີການສ້າງການມີສ່ວນຮ່ວມໃນການຊອກຫາຄຳຕອບ ແລະ ເຮັດໃຫ້ນັກທ່ອງທ່ຽວຈົດຈຳໄດ້ດີກວ່າ. ຕົວຢ່າງ, ໃນເນື້ອໃນການນຳສະເຫນີຂໍ້ມູນຂອງສະຖານທີ່ທ່ອງທ່ຽວສາມາດລະບຸຄຳວ່າ ຊອກຫາ (look for…), ລອງເບິ່ງຖ້າທ່ານສາມາດຊອກເຫັນ (see if you can find…), ທ່ານແນມເຫັນບໍ່ (can you see the…), ຈັບເປືອກຂອງຕົ້ນໄມ້ຢູ່ຫນ້າທ່ານເພື່ອໃຫ້ຮູ້ສຶກວ່າມັນຫນັກຊໍ່າໃດ (touch the bark on the tree in front of you, feel how heavy).

5) **ການນຳສະເຫນີຂໍ້ມູນຄວນແນ່ໃສ່ການນຳສະເຫນີຄວາມຫມາຍລວມ ຫລາຍກວ່າການນຳສະເຫນີຄວາມຫມາຍແຕ່ສ່ວນໃດສ່ວນຫນຶ່ງ.**

   ຕົວຢ່າງ: ການນຳສະເຫນີຂໍ້ມູນກ່ຽວກັບນໍ້າຕົກຕາດ, ບໍ່ຄວນນຳສະເຫນີພຽງແຕ່ຊື່ ແລະ ຄວາມສູງຂອງນໍ້າຕົກ ແຕ່ຄວນອະທິບາຍຕື່ມອີກວ່າ ນໍ້າຕົກແຫ່ງນີ້ມີຕົ້ນນໍ້າມາຈາກໃສ, ມີສາຍນໍ້າໄຫລຜ່ານຈຸດໃດແດ່ ແລະ ມີຄວາມສຳພັນແນວໃດຕໍ່ກັບສະພາບແວດລ້ອມອ້ອມຂ້າງເຊັ່ນ: ປະຊາຊົນທີ່ອາໄສໃນເຂດນີ້, ສັດປ່າ ແລະ ຕົ້ນໄມ້ໃບຫຍ້າ. ການນຳສະເຫນີຂໍ້ມູນແບບນີ້ ຈະເຮັດໃຫ້ນັກທ່ອງທ່ຽວເຂົ້າໃຈຄວາມສຳຄັນຂອງທຳມະຊາດໄດ້ດີຂຶ້ນ[13].

6) **ການນຳສະເຫນີຂໍ້ມູນໃຫ້ແກ່ເດັກນ້ອຍບໍ່ຄວນມີເນື້ອໃນຕ່າງກັນກັບຜູ້ໃຫຍ່ ແຕ່ຄວນໃຊ້ວິທີການນຳສະເຫນີທີ່ຕ່າງກັນ**

   ເນື່ອງຈາກເດັກນ້ອຍມີພື້ນຖານຄວາມຮູ້ ແລະ ປະສົບການຫນ້ອຍກວ່າຜູ້ໃຫຍ່, ຄວາມສາມາດໃນການຈົດຈໍ່ສິ່ງໃດສິ່ງຫນຶ່ງເປັນເວລາດົນຂອງເຂົາເຈົ້າກໍ່ມີຈຳກັດ. ສະນັ້ນ, ການນຳສະເຫນີຂໍ້ມູນການທ່ອງທ່ຽວໃຫ້ແກ່ເດັກນ້ອຍ ຫລືນັກຮຽນ ຈະຕ້ອງນຳໃຊ້ຄຳສັບທີ່ງ່າຍ, ມີຄຳອະທິບາຍທີ່ສັ້ນ ແລະ ເຂົ້າໃຈງ່າຍ, ມີຮູບພາບ, ກະຕຸ້ນໃຫ້ເຂົາເຈົ້າໄດ້ເຄື່ອນໄຫວ ແລະ ເຮັດກິດຈະກຳ ເຊິ່ງຈະເຮັດໃຫ້ເຂົາເຈົ້າສາມາດເຂົ້າໃຈຂໍ້ມູນ ແລະ ໃຈຄວາມໃນການນຳສະເຫນີເລື່ອງລາວໃນສະຖານທີ່ທ່ອງທ່ຽວ.

[13] Sukhothai Thammathirat Open University, School of Management Science

## 5) ກຸ່ມຕະຫລາດເປົ້າຫມາຍ (Target Audiences)

ຄວາມເຂົ້າໃຈກ່ຽວກັບກຸ່ມຕະຫລາດເປົ້າຫມາຍ (Target Audiences) ເຮັດໃຫ້ສາມາດອອກແບບວິທີການນໍາສະເຫນີຂໍ້ມູນທີ່ແທດເຫມາະກັບຄວາມຕ້ອງການ ແລະ ພຶດຕິກໍາຂອງເຂົາເຈົ້າ. ກຸ່ມຕະຫລາດເປົ້າຫມາຍ ແມ່ນຄັດຈາກແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວແຂວງຫລວງພະບາງສໍາລັບປີ 2020 – 2025[14] ເຊິ່ງໄດ້ກໍານົດເປັນກະແສນັກທ່ອງທ່ຽວ ທີ່ມີຄຸນລັກສະນະ ແລະ ຄວາມສົນໃຈທີ່ແຕກຕ່າງກັນ.

ຕາຕະລາງ: ກຸ່ມຕະຫລາດເປົ້າຫມາຍນັກທ່ອງທ່ຽວນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ

| ລໍາດັບ | ກຸ່ມຕະຫລາດເປົ້າຫມາຍ | ຄຸນລັກສະນະ | ການນໍາສະເຫນີຂໍ້ມູນ |
|---|---|---|---|
| 1 | ນັກທ່ອງທ່ຽວສາກົນມາເປັນກຸ່ມ | | |
| 1.1 | ກະແສນັກທ່ອງທ່ຽວສາກົນມີຄຸນນະພາບມາເປັນກຸ່ມໃຫຍ່ | ○ ສ່ວນໃຫຍ່ແມ່ນມາຈາກບັນດາປະເທດໃນທະວີບເອີລົບ ແລະ ອົດສະຕາລີ<br>○ ກຸ່ມລະ 9 – 25 ຄົນ, ອາຍຸລະຫວ່າງ 35 – 70 ປີ, ມີງົບປະມານຫລາຍ<br>○ ເດີນທາງມາດ້ວຍເຮືອບິນ, ນໍາໃຊ້ລົດຕູ້ເດີນທາງພາຍໃນນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ໂດຍມີພະນັກງານນໍາທ່ຽວເປັນຜູ້ນໍາພາ<br>○ ມັກຄົ້ນຄວ້າ, ຮຽນຮູ້ປະຫວັດສາດ ແລະ ວັດທະນະທໍາທ້ອງຖິ່ນ<br>○ ບໍ່ຄ່ອຍມີເວລາເຮັດກິດຈະກໍາຫລາຍ ເນື່ອງຈາກມາເປັນກຸ່ມໃຫຍ່<br>○ ນໍາໃຊ້ສິ່ງອໍານວຍຄວາມສະດວກພາຍໃນສະຖານທີ່ທ່ອງທ່ຽວ<br>○ ການເຂົ້າເຖິງເຕັກໂນໂລຊີຍັງຈໍາກັດ | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວ ຄວນຕິດຕັ້ງຢູ່ບໍລິເວນທີ່ມີເນື້ອທີ່ກວ້າງຂວາງ, ຢູ່ບ່ອນຮົ່ມ ແລະ ບໍ່ກີດຂວາງທາງຍ່າງ ເວລາພະນັກງານນໍາທ່ຽວຢືນອະທິບາຍໃຫ້ກຸ່ມຄົນຈໍານວນຫລາຍ<br>○ ເນື້ອໃນຂອງປ້າຍເປັນພາສາລາວ ແລະ ພາສາອັງກິດ<br>○ ມີບ່ອນນັ່ງພັກເຊົາສໍາລັບຜູ້ສູງອາຍຸ<br>○ ໃຊ້ເວລາບໍ່ດົນໃນການທໍາຄວາມເຂົ້າໃຈເລື່ອງລາວ<br>○ ບັນຈຸເນື້ອໃນ ແລະ ວິທີການນໍາສະເຫນີຂໍ້ມູນເຂົ້າໃນຫລັກສູດການຝຶກອົບຮົມພະນັກງານນໍາທ່ຽວມໍລະດົກ |
| 1.2 | ກະແສນັກທ່ອງທ່ຽວສາກົນມີຄຸນນະພາບມາເປັນກຸ່ມນ້ອຍ | ○ ຄ້າຍຄືກັບກະແສນັກທ່ອງທ່ຽວສາກົນມີຄຸນນະພາບມາເປັນກຸ່ມໃຫຍ່, ແຕ່ຄວາມແຕກຕ່າງແມ່ນ:<br>○ ກຸ່ມລະ 2 – 8 ຄົນ, ມີເວລາຫລາຍ, ມັກເຮັດກິດຈະກໍາເພື່ອສໍາພັດປະສົບການທ້ອງຖິ່ນ | ○ ຄືກັນກັບກະແສນັກທ່ອງທ່ຽວສາກົນມີຄຸນນະພາບມາເປັນກຸ່ມໃຫຍ່, ແຕ່ຄວາມແຕກຕ່າງແມ່ນ:<br>○ ເນັ້ນການມີສ່ວນຮ່ວມເວລາຮັບຟັງການນໍາສະເຫນີຂໍ້ມູນຢູ່ສະຖານທີ່ທ່ອງທ່ຽວ |

[14] ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວແຂວງຫລວງພະບາງ ສໍາລັບປີ 2020 – 2025, ຫນ້າທີ 7 – 43, ກະຊວງຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, 2020

| | | | |
|---|---|---|---|
| 1.3 | ກະແສນັກທ່ອງທ່ຽວລ່ອງເຮືອສຳລານ | ○ ນັກທ່ອງທ່ຽວສາກົນທີ່ມີຄຸນນະພາບ, ໄວກາງຄົນ ແລະ ສູງອາຍຸ<br>○ ມັກຄົ້ນຄວ້າ, ຮຽນຮູ້ປະຫວັດສາດ ແລະ ວັດທະນະທຳທ້ອງຖິ່ນ<br>○ ນຳໃຊ້ສິ່ງອຳນວຍຄວາມສະດວກຢູ່ສະຖານທີ່ທ່ອງທ່ຽວ | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວ ຄວນຕິດຕັ້ງຢູ່ບໍລິເວນທີ່ມີເນື້ອທີ່ກວ້າງຂວາງ, ຢູ່ບ່ອນຮົ່ມ ແລະ ບໍ່ກີດຂວາງທາງຍ່າງເວລາພະນັກງານນຳທ່ຽວຢືນອະທິບາຍໃຫ້ກຸ່ມຄົນຈຳນວນຫລາຍ<br>○ ເນື້ອໃນຂອງປ້າຍເປັນພາສາລາວ ແລະ ພາສາອັງກິດ<br>○ ມີບ່ອນນັ່ງພັກເຊົາສຳລັບຜູ້ສູງອາຍຸ<br>○ ໃຊ້ເວລາບໍ່ດົນໃນການທຳຄວາມເຂົ້າໃຈເລື່ອງລາວ |
| 2 | ນັກທ່ອງທ່ຽວສາກົນມາແບບອິດສະຫລະ | | |
| 2.1 | ກະແສນັກທ່ອງທ່ຽວສາກົນມີຄຸນນະພາບມາແບບອິດສະຫລະ | ○ ສ່ວນໃຫຍ່ແມ່ນນັກທ່ອງທ່ຽວທີ່ມາຈາກເອີລົບ, ສະຫະລາຊະອານາຈັກ (UK), ອິດສະຕາລີ, ອາເມລິກາ ແລະ ຕ່າງປະເທດທີ່ເຮັດວຽກຢູ່ເຂດອາຊີເຊັ່ນ: ກຸງເທບ, ຊຽງໃຫມ່, ສິງກາໂປ, ຮ່າໂນ່ຍ ແລະ ອື່ນໆ<br>○ ເປັນໄວກາງຄົນ, ມາເປັນຄູ່ ແລະ ແບບຄອບຄົວ, ມີງົບປະມານຫລາຍ<br>○ ເດີນທາງມາດ້ວຍເຮືອບິນ ແລະ ທ່ອງທ່ຽວດ້ວຍຕົນເອງ<br>○ ນຳໃຊ້ເຕັກໂນໂລຊີໃນການຊອກຫາຂໍ້ມູນຂ່າວສານການທ່ອງທ່ຽວ<br>○ ນຳໃຊ້ບໍລິການຂອງພະນັກງານນຳທ່ຽວທ້ອງຖິ່ນ<br>○ ມັກເຮັດກິດຈະກຳເພື່ອສຳພັດປະສົບການທ້ອງຖິ່ນ | ○ ຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວ ແລະ ພາຍໃນສະຖານທີ່ທ່ອງທ່ຽວ, ນຳໃຊ້ພາສາລາວ ແລະ ພາສາອັງກິດ ຫລື ສັນຍາລັກສາກົນ<br>○ ນຳໃຊ້ເຕັກໂນໂລຊີໃນການຊ່ວຍໃຫ້ເຂົ້າເຖິງສະຖານທີ່ທ່ອງທ່ຽວ ເປັນຕົ້ນແມ່ນ ແຜນທີ່ອອນລາຍ Google maps<br>○ ນຳໃຊ້ເວັບໄຊ ແລະ ແອບມືຖືທ່ອງທ່ຽວໃນການນຳສະເຫນີຂໍ້ມູນເຊັ່ນ: TripAdvisor, ເວັບໄຊ ແລະ ແອບມືຖືທ່ອງທ່ຽວແຂວງຫລວງພະບາງ.<br>○ ນຳໃຊ້ເຄື່ອງອະທິບາຍສຽງ (Audio Guide) ໃນການນຳສະເຫນີຂໍ້ມູນຜ່ານໂທລະສັບມືຖື. |
| 2.2 | ກະແສນັກທ່ອງທ່ຽວສາກົນງົບປະມານຫນ້ອຍມາແບບອິດສະຫລະ | ○ ຄ້າຍຄືກັນກັບກະແສນັກທ່ອງທ່ຽວສາກົນມີຄຸນນະພາບມາແບບອິດສະຫລະ, ແຕ່ຄວາມແຕກຕ່າງແມ່ນ:<br>○ ອາຍຸຫນ້ອຍກວ່າ, ລະຫວ່າງ 18 – 29 ປີ ແລະ ມີງົບປະມານຫນ້ອຍ | |

| | | | |
|---|---|---|---|
| 3 | ນັກທ່ອງທ່ຽວໄທ | | |
| 3.1 | ກະແສນັກທ່ອງທ່ຽວໄທມາເປັນກຸ່ມ | ○ ຂີ່ເຮືອບິນລົງສະໜາມບິນຫລວງພະບາງ ແລະ ຂີ່ລົດຕູ້ຂ້າມດ່ານຫ້ວຍໂກ້ນ ຜ່ານເມືອງເງິນ ແຂວງໄຊຍະບູລີ ເຂົ້າສູ່ຫລວງພະບາງເຊິ່ງເປັນເສັ້ນທາງໃຫມ່.<br>○ ສ່ວນໃຫຍ່ແມ່ນໄວກາງຄົນ ແລະ ຜູ້ສູງອາຍຸ. ສົນໃຈກ່ຽວກັບສາດສະໜາ, ເຮັດບຸນ ແລະ ງານຜ້າປ່າ<br>○ ເນື່ອງຈາກຈຳນວນຄົນຫລາຍ ຈຶ່ງບໍ່ຄ່ອຍມີເວລາເຮັດກິດຈະກຳເພື່ອສຳພັດປະສົບການທ້ອງຖິ່ນ<br>○ ມັກກຄວາມມ່ວນຊື່ນບັນເທີງ ຢູ່ຕາມສະຖານທີ່ທ່ອງທ່ຽວ ແລະ ໃນຂະນະເດີນທາງ | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວ ຄວນຕິດຕັ້ງຢູ່ບໍລິເວນທີ່ມີເນື້ອທີ່ກວ້າງຂວາງ, ຢູ່ບ່ອນຮົ່ມ ແລະ ບໍ່ກີດຂວາງທາງຍ່າງເວລາພະນັກງານນຳທ່ຽວຢືນອະທິບາຍໃຫ້ກຸ່ມຄົນຈຳນວນຫລາຍ<br>○ ເນື້ອໃນເປັນພາສາລາວ, ເພື່ອໃຫ້ພະນັກງານນຳທ່ຽວຄົນລາວນຳໃຊ້ເພື່ອອະທິບາຍໃຫ້ແກ່ນັກທ່ອງທ່ຽວ. ຖ້າບັນຈຸພາສາໄທເຂົ້າໃນປ້າຍປະຫວັດແຫລ່ງທ່ອງທ່ຽວ ກໍ່ຈະເຮັດໃຫ້ຂະໜາດໃຫຍ່ເກີນໄປ.<br>○ ມີບ່ອນນັ່ງພັກເຊົາສຳລັບຜູ້ສູງອາຍຸ<br>○ ໃຊ້ເວລາບໍ່ດົນໃນການທຳຄວາມເຂົ້າໃຈເລື່ອງລາວ<br>○ ບັນຈຸເນື້ອໃນ ແລະ ວິທີການນຳສະເຫນີຂໍ້ມູນເຂົ້າໃນຫລັກສູດການຝຶກອົບຮົມພະນັກງານນຳທ່ຽວມໍລະດົກ |
| 3.2 | ກະແສນັກທ່ອງທ່ຽວຄາລາວານລົດຈັກບິກໄບຈາກໄທ | ○ ເປັນກຸ່ມຄົນຮັກລົດຈັກບິກໄບຢູ່ປະເທດໄທ, ເປັນສະມາຄົມ ຫລື ກຸ່ມ (Club) ທີ່ມັກໂຮມຕົວກັນເດີນ ທາງທ່ອງທ່ຽວ ໂດຍການຊື້ລາຍການທ່ອງທ່ຽວຈາກບໍລິສັດທ່ອງທ່ຽວຢູ່ໄທ ທີ່ຮັບຈັດລາຍການທ່ອງທ່ຽວລົດຈັກບິກໄບ. ບາງຄັ້ງກໍ່ໄດ້ຮັບການສະໜັບສະໜູນຈາກບໍລິສັດຜະລິດ ແລະ ຈຳໜ່າຍລົດຈັກບິກໄບຢູ່ໄທເຊັ່ນ: ຮ້ອນດາ, ຍາມາຮາ ແລະ ອື່ນໆ. | ○ ຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວ ແລະ ພາຍໃນສະຖານທີ່ທ່ອງທ່ຽວ, ນຳໃຊ້ພາສາລາວ ແລະ ພາສາອັງກິດ ຫລື ສັນຍາລັກສາກົນ<br>○ ນຳໃຊ້ເຕັກໂນໂລຊີໃນການຊ່ວຍໃຫ້ເຂົ້າເຖິງສະຖານທີ່ທ່ອງທ່ຽວ ເປັນຕົ້ນແມ່ນ ແຜນທີ່ອອນລາຍ Google maps<br>○ ນຳໃຊ້ເວັບໄຊ ແລະ ແອບມືຖືທ່ອງທ່ຽວໃນການນຳສະເຫນີຂໍ້ມູນເຊັ່ນ: TripAdvisor, ເວັບໄຊ ແລະ ແອບມືຖືທ່ອງທ່ຽວແຂວງຫລວງພະບາງ. ສາມາດບັນຈຸເປັນພາສາໄທໄດ້, ເພື່ອຄວາມສະດວກຂອງນັກທ່ອງທ່ຽວ. |
| 3.3 | ກະແສນັກທ່ອງທ່ຽວຄາລາວານລົດໃຫຍ່ຈາກໄທ | ○ ກຸ່ມຄົນຮັກລົດໃຫຍ່ວິບາກຢູ່ປະເທດໄທ, ເປັນສະມາຄົມ ຫລື ກຸ່ມ (Club) ທີ່ມັກໂຮມຕົວກັນເດີນ ທາງທ່ອງທ່ຽວ ໂດຍການຊື້ລາຍການທ່ອງທ່ຽວຈາກບໍລິສັດທ່ອງທ່ຽວຢູ່ໄທ ທີ່ຮັບຈັດລາຍການທ່ອງທ່ຽວລົດໃຫຍ່ວິບາກ. ບາງຄັ້ງກໍ່ໄດ້ຮັບການສະໜັບສະໜູນຈາກບໍລິສັດຜະລິດ ແລະ ຈຳໜ່າຍລົດໃຫຍ່ວິບາກຢູ່ປະເທດໄທ ເຊັ່ນ: ໂຕໂຍຕາ, ອີຊູຊຸ, ຟອດ ແລະ ອື່ນໆ. | |

| 4 | ນັກທ່ອງທ່ຽວເກົາຫລີ, ຈີນ ແລະ ພາກພື້ນ | | |
|---|---|---|---|
| 4.1 | ກະແສນັກທ່ອງທ່ຽວເກົາຫລີມາເປັນກຸ່ມ | ○ ເດີນທາງມາເປັນກຸ່ມທາງເຮືອບິນລົງສະໜາມບິນສາກົນຫລວງພະບາງ<br>○ ສ່ວນໃຫຍ່ເປັນໄວກາງຄົນ, ບໍ່ສາມາດເວົ້າພາສາອັງກິດໄດ້, ອາໄສພະນັກງານນໍາທ່ຽວຄົນເກົາຫລີເປັນຜູ້ແປ | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວ ຄວນຕິດຕັ້ງຢູ່ບໍລິເວນທີ່ມີເນື້ອທີ່ກວ້າງຂວາງ, ຢູ່ບ່ອນຮົ່ມ ແລະ ບໍ່ກີດຂວາງທາງຍ່າງເວລາພະນັກງານໍາທ່ຽວຢືນອະທິບາຍໃຫ້ກຸ່ມຄົນຈໍານວນຫລາຍ<br>○ ເນື້ອໃນຂອງປ້າຍເປັນພາສາລາວ ແລະ ພາສາອັງກິດ, ໂດຍໃຫ້ພະນັກງານນໍາທ່ຽວຄົນລາວອະທິບາຍໃຫ້ແກ່ຫົວໜ້າພະນັກງານນໍາທ່ຽວ<br>○ ມີບ່ອນນັ່ງພັກເຊົາສໍາລັບຜູ້ສູງອາຍຸ<br>○ ໃຊ້ເວລາບໍ່ດົນໃນການທໍາຄວາມເຂົ້າໃຈເລື່ອງລາວ<br>○ ບັນຈຸເນື້ອໃນ ແລະ ວິທີການນໍາສະເໜີຂໍ້ມູນເຂົ້າໃນຫລັກສູດການຝຶກອົບຮົມພະນັກງານນໍາທ່ຽວມໍລະດົກ |
| 4.2 | ກະແສນັກທ່ອງທ່ຽວຈີນມາເປັນກຸ່ມ | ○ ເດີນທາງມາເປັນກຸ່ມທາງເຮືອບິນລົງສະໜາມບິນສາກົນຫລວງພະບາງ<br>○ ເດີນທາງທ່ອງທ່ຽວພາຍໃນນະຄອນຫລວງພະບາງດ້ວຍລົດຕູ້ນ້ອຍ, ໂດຍມີພະນັກງານນໍາທ່ຽວພາສາຈີນເປັນຜູ້ນໍາພາ | |
| 4.3 | ກະແສນັກທ່ອງທ່ຽວຄາລາວານລົດໃຫຍ່ຈາກຈີນ | ○ ຂັບລົດສ່ວນຕົວເປັນໝູ່ຄະນະເຂົ້າມາທາງບໍ່ເຕ່ນແຂວງຫລວງນໍ້າທາ, ກ່ອນເຂົ້າມາທ່ອງທ່ຽວນະຄອນຫລວງພະບາງ<br>○ ສ່ວນໃຫຍ່ແມ່ນໄວກາງຄົນ, ອາຍຸລະຫວ່າງ 35 – 54 ປີ | ○ ຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວ ແລະ ພາຍໃນສະຖານທີ່ທ່ອງທ່ຽວ, ນໍາໃຊ້ພາສາລາວ ແລະ ພາສາອັງກິດ ຫລື ສັນຍາລັກສາກົນ<br>○ ນໍາໃຊ້ເຕັກໂນໂລຊີໃນການຊ່ວຍໃຫ້ເຂົ້າເຖິງສະຖານທີ່ທ່ອງທ່ຽວ ເປັນຕົ້ນແມ່ນ ແຜນທີ່ອອນລາຍ Baidu Maps ເຊິ່ງຄ້າຍຄືກັບ Google maps ສໍາລັບຄົນຈີນ<br>○ ນໍາໃຊ້ເວັບໄຊ ແລະ ແອບມືຖືທ່ອງທ່ຽວໃນການນໍາສະເໜີຂໍ້ມູນເຊັ່ນ: TripAdvisor, ເວັບໄຊ ແລະ ແອບມືຖືທ່ອງທ່ຽວແຂວງຫລວງພະບາງ. ບັນຈຸເປັນພາສາຈີນ ແລະ ເກົາຫລີໄດ້, ເພື່ອຄວາມສະດວກຂອງນັກທ່ອງທ່ຽວ.<br>○ ນອກຈາກນັ້ນ, ຈະຕ້ອງນໍາໃຊ້ສື່ສັງຄົມອອນລາຍທີ່ນັກທ່ອງທ່ຽວຈີນນິຍົມໃຊ້ເຊັ່ນ: MAFENGWO ແລະ QYER |
| 4.4 | ກະແສນັກທ່ອງທ່ຽວກິລາກ໊ອຟຈາກເຂດພາກພື້ນ | ○ ຄົນທີ່ມັກກິລາກ໊ອຟຈາກຈີນ, ເກົາຫລີ, ໄທ ແລະ ຫວຽດນາມ. ຕ່າງປະເທດທີ່ເຮັດວຽກຢູ່ກຸງເທບ, ສິງກະໂປ ແລະ ຮ່າໂນ່ຍ ແລະ ພະນັກງານລັດຢູ່ລາວ. | |

| | | | |
|---|---|---|---|
| 5 | ນັກທ່ອງທ່ຽວໃນຮູບແບບກອງປະຊຸມ | | |
| 5.1 | ກະແສນັກທ່ອງທ່ຽວໃນຮູບແບບກອງປະຊຸມ (MICE) | ○ ຕະຫລາດ MICE ພາຍໃນ: ບໍລິສັດເອກະຊົນ, ລັດຖະບານ ແລະ ອົງການຈັດຕັ້ງສາກົນ ທີ່ມາຈັດງານ ຫລື ກອງປະຊຸມຕ່າງໆຢູ່ນະຄອນຫລວງພະບາງ.<br>○ ຕະຫລາດ MICE ຕ່າງປະເທດ: ບໍລິສັດຂ້າມຊາດຢູ່ສິງກະໂປ, ຮ່ອງກົງ, ກົວລາລໍາເປີ, ກຸງເທບ, ຮ່າໂນ່ຍ, ຊຽງໄຮ ແລະ ປັກກິ່ງ. | ○ ປ້າຍປະຫວັດແຫລ່ງທ່ອງທ່ຽວ ຄວນຕິດຕັ້ງຢູ່ບໍລິເວນທີ່ມີເນື້ອທີ່ກວ້າງຂວາງ, ຢູ່ບ່ອນຮົ່ມ ແລະ ບໍ່ກີດຂວາງທາງຍ່າງເວລາພະນັກງານນໍາທ່ຽວຢືນອະທິບາຍໃຫ້ກຸ່ມຄົນຈໍານວນຫລາຍ |
| 6 | ນັກທ່ອງທ່ຽວໃນຮູບແບບການສຶກສາ | | |
| 6.1 | ກະແສນັກທ່ອງທ່ຽວໃນຮູບແບບການສຶກສາຈາກຕ່າງປະເທດ | ○ ໄວຫນຸ່ມຈາກເອີລົບ ແລະ ເຂດພາກພື້ນເຊັ່ນ: ສິງກະໂປ ເດີນທາງມາເຮັດກິດຈະກໍາກັບຊຸມຊົນ, ສ້າງໂຮງຮຽນອະນຸບານ. ພັກຢູ່ນະຄອນຫລວງພະບາງ, ເປັນອາສາສະຫມັກຢູ່ເມືອງຈອມເພັດ, ປາກອູ, ນໍ້າບາກ ແລະ ປາກແຊງ. | ○ ສ້າງເນື້ອໃນການນໍາສະເຫນີຂໍ້ມູນທີ່ເຂົ້າໃຈງ່າຍ, ສັ້ນກະທັດຫັດ, ມີຮູບພາບປະກອບ ແລະ ນໍາໃຊ້ວິທີການນໍາສະເຫນີທີ່ກະຕຸ້ນການມີສ່ວນຮ່ວມ ແລະ ສ້າງບັນຍາກາດໃຫ້ມີຄວາມມ່ວນຊື່ນ. |
| 6.2 | ກະແສນັກທ່ອງທ່ຽວໃນຮູບແບບການສຶກສາຈາກພາຍໃນ | ○ ຄະນະນັກສຶກສາ ແລະ ຄູອາຈານ ຈາກສະຖາບັນສຶກສາຈາກຕ່າງແຂວງ ໂດຍສະເພາະແມ່ນຈາກນະຄອນຫລວງວຽງຈັນ. ປະກອບມີມະຫາວິທະໄລແຫ່ງຊາດ, ວິທະຍາໄລບໍລິຫານທຸລະກິດ ແລະ ວິທະຍາໄລນາໆຊາດ ນະຄອນຫລວງວຽງຈັນ. ເດີນທາງມາດ້ວຍລົດເມໃຫຍ່ ແລະ ຂີ່ເຮືອບິນລົງນະຄອນຫລວງພະບາງ. | |
| 7 | ນັກທ່ອງທ່ຽວພາຍໃນ | | |
| 7.1 | ກະແສນັກທ່ອງທ່ຽວພາຍໃນໄລຍະເທດສະການ | ○ ຄົນລາວ ແລະ ຕ່າງປະເທດທີ່ອາໄສຢູ່ລາວ ໂດຍສະເພາະແມ່ນຢູ່ນະຄອນຫລວງວຽງຈັນ ແລະ ແຂວງອື່ນໆ. ເຂົາເຈົ້າເດີນທາງມາທາງເຮືອບິນ ຫລື ຂັບລົດສ່ວນຕົວ. ມາທ່ອງທ່ຽວຫລວງພະບາງ ໄລຍະເທດສະການ, ບຸນປະເພນີເຊັ່ນ: ປີໃຫມ່ລາວ, ບຸນຊ່ວງເຮືອ, ລອຍກະທົງ, ງານມະຫະກໍາຫັດຖະກໍາ, ງານແຂ່ງຂັນກິລາມາລາທອນ, ແລ່ນວິບາກ ແລະ ອື່ນໆ. | ○ ຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວ ແລະ ພາຍໃນສະຖານທີ່ທ່ອງທ່ຽວ, ນໍາໃຊ້ພາສາລາວ ແລະ ພາສາອັງກິດ ຫລື ສັນຍາລັກສາກົນ<br>○ ນໍາສະເຫນີເນື້ອໃນກ່ຽວກັບເທດສະການ ແລະ ບຸນປະເພນີ |

ສະຖານທີ່ທ່ອງທ່ຽວໃນບົດທີ 6 ແລະ ວິທີການນໍາສະເຫນີຂໍ້ມູນໃນບົດທີ 9 ແມ່ນຖືກກໍານົດໃຫ້ສອດຄ່ອງກັບຄຸນລັກສະນະຂອງແຕ່ລະກຸ່ມຕະຫລາດເປົ້າຫມາຍຂ້າງເທິງ

## 6) ສະຖານທີ່ທ່ອງທ່ຽວ ແລະ ເລື່ອງລາວ (Site and Stories)

ສະຖານທີ່ທ່ອງທ່ຽວພາຍໃນນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ທີ່ກຳນົດໃນແຜນຍຸດທະສາດນຳສະເຫນີຂໍ້ມູນການທ່ອງທ່ຽວສະບັບນີ້ ແມ່ນອີງໃສ່ກະແສນັກທ່ອງທ່ຽວໃນແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວແຂວງຫລວງພະບາງສຳລັບປີ 2020 – 2025[15]. ເລື່ອງລາວໃນການນຳສະເຫນີ ແມ່ນສິ່ງທີ່ຫນ້າສົນໃຈຂອງສະຖານທີ່ທ່ອງທ່ຽວ, ຈຸດຂາຍທີ່ເປັນເອກະລັກຂອງສະຖານທີ່ທ່ອງທ່ຽວ (Unique Selling Point – USP) ເຊັ່ນ: ພູທີ່ສູງທີ່ສຸດ, ວິວທີ່ງາມທີ່ສຸດ, ປາທີ່ຫາຍາກທີ່ສຸດ, ຫໍພິພິທະພັນທີ່ວາງສະແດງວັດຖຸບູຮານທີ່ຫາເບິ່ງໄດ້ຍາກ ແລະ ອື່ນໆ. ເລື່ອງລາວໃນການນຳສະເຫນີແມ່ນຈະຖືກນຳໃຊ້ເຂົ້າໃນການກຳນົດໃຈຄວາມໃນການນຳສະເຫນີ (Theme) ໃນບົດຕໍ່ໄປ.

### 6.1) ນະຄອນຫລວງພະບາງ

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເຫນີ (Interpretive Stories & Topics) |
|---|---|---|---|
| 1 | ວັດພຣະມະຫາທາດ (Vat Phramahathat[16])  | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[17] ແລະ TripAdvisor[18], ແຕ່ບໍ່ມີຂໍ້ມູນໃນເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ. ປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ມີທາດທີ່ບັນຈຸອັດຖິ (ຂີ້ເທົ່າ) ຂອງເຈົ້າເພັດຊະລາດ, ເຈົ້າສຸວັນນະພູມາ ແລະ ເຈົ້າສຸພານຸວົງ[19]. | ○ **ປະຫວັດຄວາມເປັນມາຂອງວັດພຣະມະຫາທາດ** ສ້າງຂຶ້ນໃນສະໄຫມເຈົ້າໄຊເສດຖາທິລາດ (1548 – 1571). ໃນປີ 1900 ໄດ້ຖືກລົມພາຍຸພັດພັງທະລາຍ ແລະ ໄດ້ຮັບການສ້າງຄືນໃຫມ່ໃນປີ 1907 – 1910 ແລະ ປະຕິສັງຂອນໃນປີ 1963 ແລະ 1991[20].<br>○ **ເລື່ອງລາວຂອງອາດີດເຈົ້າຊີວິດ ແລະ ບຸກຄົນສຳຄັນ** ເຈົ້າເພັດຊະລາດ, ເຈົ້າສຸວັນນະພູມາ ແລະ ເຈົ້າສຸພານຸວົງ |

[15] ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວແຂວງຫລວງພະບາງ ສຳລັບປີ 2020 – 2025, ຫນ້າທີ 7 – 43, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2020

[16] ຄຳວ່າ "ວັດ" ພາສາອັງກິດໃນສື່ສັງຄົມອອນລາຍແມ່ນນຳໃຊ້ໂຕ W (Wat) ສ່ວນຢູ່ເທິງປ້າຍຊື່ວັດຢູ່ ສປປ ລາວ ແມ່ນນຳໃຊ້ໂຕ V (Vat), ຄວນມີການກຳນົດໃຫ້ເປັນເອກະພາບກັນ ເພື່ອຊ່ວຍໃຫ້ນັກທ່ອງທ່ຽວສາມາດຊອກຫາສະຖານທີ່ທ່ອງທ່ຽວໄດ້ງ່າຍ ແລະ ຫລີກເວັ້ນການເຂົ້າໃຈຜິດ.

[17] https://goo.gl/maps/QowBT1nQknd8HvdR9

[18] https://www.tripadvisor.com/Attraction_Review-g295415-d12918768-Reviews-Wat_Mahathat-Luang_Prabang_Luang_Prabang_Province.html

[19] https://www.renown-travel.com/laos/temples/wat-mahathat.html

[20] A Guide to Luang Prabang, The Land of a Million Elephants, Page 22, Department of Information, Culture and Tourism, Luang Prabang Province,

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເຫນີ (Interpretive Stories & Topics) |
|---|---|---|---|
| 2 | ວັດທາດຫລວງ (Vat That Luang)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[21], TripAdvisor[22] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[23]<br>○ ປ້າຍປະຫວັດແຫລ່ງທ່ອງທ່ຽວ. ບໍ່ທັນເປັນທີ່ນິຍົມຂອງນັກທ່ອງທ່ຽວ ແລະ ບໍ່ມີການເກັບຄ່າເຂົ້າຊົມ<br>○ ມີທາດທີ່ບັນຈຸອັດຖິ (ຂີ້ເທົ່າ) ຂອງເຈົ້າສີສະຫວ່າງ ວົງ[24] | ○ **ກິດຈະວັດປະຈຳວັນຂອງພະສົງສຳມະເນນ**<br>ການປະກອບພິທີກຳທາງສາດສະຫນາ, ການຕີກອງທີ່ຫຸ້ມດ້ວຍຫນັງຄວາຍ ແລະ ການກະກຽມເຮືອສຳລັບບຸນຊ່ວງເຮືອ<br>○ **ປະຫວັດຄວາມເປັນມາຂອງວັດທາດຫລວງ**<br>ສ້າງຂຶ້ນໃນປີ ຄ.ສ 1818 ສະໄຫມເຈົ້າມັນທາຕຸຣາດ, ຖືກນຳໃຊ້ເປັນບ່ອນຈັດພິທີ ແລະ ເຜົາສົບຂອງບຸກຄົນສຳຄັນຂອງປະເທດ ຈົນຮອດປີ ຄ.ສ 1975 ເມື່ອປະເທດໄດ້ຮັບການປົດປ່ອຍ<br>○ **ເລື່ອງລາວຂອງເຈົ້າສີສະຫວ່າງ ວົງ**<br>ເຊື່ອມໂຍງເລື່ອງລາວຂອງເຈົ້າສີສະຫວ່າງ ວົງ ແລະ ອານຸເສົາວະ ແລະ ຫໍພິພິທະພັນແຫ່ງຊາດຫລວງພະບາງ |
| 3 | ວັດວິຊຸນ (Vat Visoun)<br> | ○ ມີປ້າຍປະຫວັດແຫລ່ງທ່ອງທ່ຽວຕັ້ງຢູ່ປະຕູທາງເຂົ້າທາງທິດຕາເວັນອອກ ຫລື ຟາກນ້ຳຄານ, ແຕ່ຍັງມີເນື້ອໃນທີ່ຍາວ, ບໍ່ທັນກຳນົດໃຈຄວາມໃນການນຳສະເຫນີ (Theme) ທີ່ຊັດເຈນ ແລະ ເມື່ອນັກທ່ອງທ່ຽວຢືນອ່ານ ແມ່ນບັງທາງຍ່າງ<br>○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[25], TripAdvisor[26] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[27] | ○ **ປະຫວັດຄວາມເປັນມາຂອງວັດວິຊຸນ**<br>ສ້າງຂຶ້ນໃນປີ ຄ.ສ 1512 ໃນສະໄຫມພະເຈົ້າຊີວິດວິຊຸນນະລາຊ (1501 – 1520). ວັດແຫ່ງນີ້ຖືກຈູດເຜົາຈາກການເຜົາຜານ ແລະ ປຸ້ນສະດົມຕົວເມືອງຫລວງພະບາງ ໂດຍພວກຫໍ້ທຸງດຳໃນປີ ຄ.ສ 1887[29].<br>○ **ເລື່ອງລາວຂອງເຈົ້າວິຊຸນ**<br>○ **ເລື່ອງລາວຂອງວັດຖຸບູຮານພາຍໃນສິມ**<br>○ **ປະຫວັດຄວາມເປັນມາຂອງທາດປະທຸມ**<br>ທາດປະທຸມ (ທາດຫມາກໂມ) ສ້າງຂຶ້ນໃນປີ ຄ.ສ 1514 ໂດຍມະຫາສີເຈົ້າວິຊຸນ ໃນຮູບແບບຊາວລັງກາວີ. ທາດປະທຸມໄດ້ພັງທະລາຍລົງປີ ຄ.ສ 1914, ກໍ່ພົບເຫັນສິ່ງຂອງຮູບປະພັນລ້ຳຄ່າ |

21 https://goo.gl/maps/XHenmfML3qT3cB5T8
22 https://www.tripadvisor.com/Attraction_Review-g295415-d7912937-Reviews-Wat_Tat_Luang-Luang_Prabang_Luang_Prabang_Province.html
23 https://tourismluangprabang.org/things-to-do/buddhism/other-temples
24 The Last Century of Lao Royalty, page 418, Grant Evans, 2009
25 https://goo.gl/maps/7NyPXPdWd9SRjtrB6
26 https://www.tripadvisor.com/Attraction_Review-g295415-d6104717-Reviews-Vat_Visounarath-Luang_Prabang_Luang_Prabang_Province.html
27 https://tourismluangprabang.org/things-to-do/buddhism/wat-visoun
29 ປຶ້ມປະຫວັດຄວາມເປັນມາຂອງແຫລ່ງທ່ອງທ່ຽວ, ບຸນປະເພນີ ແລະ ຊົນເຜົ່າທີ່ສຳຄັນຂອງແຂວງຫລວງພະບາງ, ຫນ້າທີ 36, ພະແນກ ຖວທ ແຂວງຫລວງພະບາງ

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| |  | ○ ພາຍໃນສິມແມ່ນມີການນຳສະເໜີຂໍ້ມູນຂອງວັດຖຸບູຮານ, ແຕ່ຍັງມີເນື້ອໃນທີ່ຈຳກັດ, ການກຳນົດໃຈຄວາມໃນການນຳສະເໜີ (Theme) ບໍ່ທັນຊັດເຈນ ແລະ ຂາດຄວາມເຊື່ອມໂຍງຂອງເລື່ອງລາວ<br>○ ມີຮູບແຕ້ມໃນປີ 1885 ຂອງ ທ່ານ ຫລຸຍ ເດີລາປອກ - Louis Delaporte[28] ເຊິ່ງເປັນນັກສຳຫລວດຄົນຝລັ່ງ ທີ່ສະແດງເຖິງຄວາມງົດງາມຂອງສະຖາປັດຕະຍະກຳຂອງວັດແຫ່ງນີ້ | ຫລວງຫລາຍທີ່ຖືກຝັງໄວ້ແຕ່ສັດຕະວັດທີ 15 – 16. ປີ ຄ.ສ 1932 ກໍ່ໄດ້ຮັບການບູລະນະປະຕິສັງຂອນ ໃນສະໄໝເຈົ້າຊຸມ ດວງຈັນ. ສິ່ງຂອງບາງຈຳນວນແມ່ນຖືກເກັບຮັກສາໄວ້ຄືນໃນຫາດ ແລະ ອີກຈຳນວນໜຶ່ງແມ່ນເກັບຮັກສາໄວ້ທີ່ຫໍພິພິທະພັນແຫ່ງຊາດຫລວງພະບາງ. |
| 4 | ວັດອາຮາມ (Vat Aham)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[30], TripAdvisor[31] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[32]<br>○ ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວການທ່ອງທ່ຽວ<br>○ ມີຫໍເທວະດາຫລວງ (ປູ່ເຍີ ຍ່າເຍີ)<br>○ ມີຕົ້ນໄຊໃຫຍ່ສັກສິດ | ○ **ປະຫວັດຄວາມເປັນມາຂອງວັດອາຮາມ**<br>ສ້າງຂຶ້ນປີ 1527, ແຕ່ສິມໄດ້ຮັບການປະຕິສັງຂອນໃນປີ 1818 ໂດຍເຈົ້າມັນທາຕຸຣາດ (1817 – 1825). ສ້າງຂຶ້ນໃສ່ບ່ອນທີ່ເຈົ້າຟ້າງຸ່ມຕັ້ງຫໍເສື້ອເມືອງ (ຫໍປູ່ເຍີຍ່າເຍີ ຫລື ຫໍເທວະດາຫລວງ[33])<br>○ **ເລື່ອງລາວຂອງຕົ້ນໄຊ (Banyan Tree)**<br>ປະຊາຊົນມີຄວາມເຊື່ອວ່າຕົ້ນໄຊທັງສອງຕົ້ນແມ່ນບ່ອນສິງສະຖິດຂອງເທວະດາຫລວງ ທີ່ປົກປັກຮັກສາຫລວງພະບາງ. ເຈົ້າຊີວິດໄດ້ນຳມາຈາກປະເທດອິນເດຍໃນປີ 1950 ເພື່ອປູກຢູ່ວັດແຫ່ງນີ້[34].<br>○ **ເລື່ອງລາວຂອງປູ່ເຍີຍ່າເຍີ** |

---

28 Voyage d'exploration en Indo-Chine affectué par une commission française, Marie Joseph Francis Garnier, Librairie Hatchett, page 303, Paris 1885
30 https://goo.gl/maps/8ZeqBg43D9oK1rsNA
31 https://www.tripadvisor.com/Attraction_Review-g295415-d7313912-Reviews-Wat_Aham-Luang_Prabang_Luang_Prabang_Province.html
32 https://tourismluangprabang.org/things-to-do/buddhism/other-temples
33 ປື້ມປະຫວັດຄວາມເປັນມາຂອງແຫລ່ງທ່ອງທ່ຽວ, ບຸນປະເພນີ ແລະ ຊົນເຜົ່າທີ່ສຳຄັນຂອງແຂວງຫລວງພະບາງ, ໜ້າທີ 36, ພະແນກ ຖວທ ແຂວງຫລວງພະບາງ
34 https://tourismluangprabang.org/things-to-do/buddhism/other-temples

| ລໍາດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນໍາສະເຫນີ (Interpretive Stories & Topics) |
|---|---|---|---|
| 5 | ວັດໃຫມ່ (Vat May)<br><br><br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[35], TripAdvisor[36] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[37]. ບໍ່ທັນມີປ້າຍນໍາສະເຫນີຂໍ້ມູນການທ່ອງທ່ຽວ<br>○ ພາຍໃນສິມມີແບບຈໍາລອງຂອງພະແກ້ວມໍລະກົດ, ແຕ່ບໍ່ທັນມີການນໍາສະເຫນີຂໍ້ມູນໃດໆ ແລະ ມີແຕ່ພະນັກງານນໍາທ່ຽວເປັນຜູ້ອະທິບາຍ<br>○ ປະຕູລັກຂອງສິມດ້ານຫນ້າຝາແກະສະລັກດ້ວຍຮູບນາງສີດາ ໃນເລື່ອງລາມາຍານະ ພອກຄໍາປິວ, ຝາຜະຫນັງດ້ານຫນ້າຂອງສິມແກະສະລັກຊີມັງມາປະສົບເຣັດ ປະຫາຍເພັດປັ້ນຮູບທັງຝາ ເປັນຮູບພາບເລື່ອງລາວຂອງພະເວດສັນດອນຊາດົກ. ແຕ່ບໍ່ທັນມີການນໍາສະເຫນີຂໍ້ມູນເຫລົ່ານີ້ໃຫ້ຮູບແບບທີ່ນັກທ່ອງທ່ຽວສາມາດເຂົ້າໃຈໄດ້.<br>○ ມີຮູບພາບເກົ່າໃນຊຸມປີ 1800[38] | ○ **ປະຫວັດຄວາມເປັນມາຂອງວັດໃຫມ່**<br>ສ້າງຂຶ້ນປີ ຄ.ສ 1796 ໃນສະໄຫມເຈົ້າອະນຸຣຸດ. ໄດ້ປະຕິສັງຂອນຕໍ່ເຕີມຄືນໃຫມ່ໃນປີ 1821 ໂດຍເຈົ້າມັນທາຕຸລາດ[39].<br>○ **ຄວາມສໍາພັນຂອງວັດ ແລະ ການຖວາຍສັດຕະຍາບັນ**<br>ເນື່ອງຈາກວັດຢູ່ໃກ້ກັບພະຣາຊະວັງຫລວງ ຈຶ່ງເປັນບ່ອນຈັດພິທີຖວາຍສັດຕະຍາບັນປະຕິຍານຕົນ (ກິນນໍ້າສາບານ) ຂອງຂ້າຣາຊການບ້ານເມືອງ ເພື່ອເປັນຂ້າຣາຊການທີ່ດີ, ຊື່ສັດ ແລະ ຈົ່ງຮັກພັກດີຕໍ່ຫນ້າທີ່ຢູ່ຕໍ່ຫນ້າອົງພະບາງໃນແຕ່ລະປີ<br>○ **ປະຫວັດຄວາມເປັນມາຂອງພະແກ້ວມໍລະກົດ**<br>○ **ຄວາມສໍາພັນຂອງວັດ ແລະ ພະບາງ**<br>ປີ 1894 ເຈົ້າສັກກະລິນ ໄດ້ອັນເຊີນເອົາພະບາງຈາກວັດວິຊູນມາປະດິດສະຖານໄວ້ຢູ່ວັດແຫ່ງນີ້, ໄລຍະປີໃຫມ່ລາວໃນແຕ່ລະປີ ໄດ້ມີການອັນເຊີນອົງພະບາງຈາກຫໍພະບາງຢູ່ຫໍພິພິທະພັນແຫ່ງຊາດມາປະດິດສະຖານຢູ່ຫນ້າສິມວັດແຫ່ງນີ້ ເພື່ອໃຫ້ປະຊາຊົນໄດ້ຫົດສົງ. ເຊື່ອມໂຍງເລື່ອງລາວຂອງພະບາງ ແລະ ຫໍພະບາງຢູ່ຫໍພິພິທະພັນແຫ່ງຊາດຫລວງພະບາງ. |

35 https://goo.gl/maps/ZLZuvYgb5FcW3uLY7
36 https://www.tripadvisor.com/Attraction_Review-g295415-d454851-Reviews-Wat_Mai_Suwannaphumaham-Luang_Prabang_Luang_Prabang_Province.html
37 https://tourismluangprabang.org/things-to-do/buddhism/wat-mai-souwannaphummaham
38 https://www.facebook.com/historyandarchaeologyinlaos
39 ປື້ມປະຫວັດຄວາມເປັນມາຂອງແຫລ່ງທ່ອງທ່ຽວ, ບຸນປະເພນີ ແລະ ຊົນເຜົ່າທີ່ສໍາຄັນຂອງແຂວງຫລວງພະບາງ, ຫນ້າທີ 38, ພະແນກ ຖວທ ແຂວງຫລວງພະບາງ

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເຫນີ (Interpretive Stories & Topics) |
|---|---|---|---|
| 6 | ຫໍພິພິທະພັນແຫ່ງຊາດຫລວງພະບາງ<br>(Luang Prabang National Museum)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[40], TripAdvisor[41] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[42]<br>○ ບໍລິເວນພາຍນອກ: ມີການຕິດຕັ້ງປ້າຍແຜນທີ່ຕົວເມືອງ, ແຕ່ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ. ມີປ້າຍຂໍ້ມູນນ້ອຍຢູ່ຫນ້າຫ້ອງວາງສະແດງລົດພະທີ່ນັ່ງກ່ຽວກັບລາດຊະລົດພຣະສິງ ແລະ ລາດຊະລົດພຣບາງ.<br>○ ພາຍໃນຫໍພິພິທະພັນແລະຫ້ອງວາງສະແດງລົດພະທີ່ນັ່ງແມ່ນຫ້າມບໍ່ໃຫ້ຖ່າຍຮູບ | ○ **ປະຫວັດຄວາມເປັນມາຂອງຫໍພິພິທະພັນ**<br>ຫໍພິພິທະພັນແຫ່ງຊາດຫລວງພະບາງ ຫລື ພະຣາຊວັງເກົ່າ ຖືກສ້າງຂຶ້ນໃນປີ ຄ.ສ 1904 – 1909 ໃນສະໄຫມເຈົ້າສີສະຫວ່າງວົງ ໂດຍການອຸປະຖຳຂອງລັດຖະບານຝລັ່ງ. ອາຄານຖືກອອກແບບໂດຍສະຖາປະນິກຄົນຝລັ່ງ ເຊິ່ງມີລັກສະນະປະສົມປະສານລະຫວ່າງສິລະປະລາວ ແລະ ສິລະປະຝລັ່ງ[43]. ມີກະສັດປະທັບຢູ່ສອງພະອົງຄື: ເຈົ້າຊີວິດສີສະຫວ່າງ ວົງ ໃນປີ 1905 – 1959 ແລະ ເຈົ້າຊີວິດສີສະຫວ່າງ ວັດທະນາ ໃນປີ 1959 – 1975. ພາຍຫລັງປະເທດໄດ້ຮັບການສະຖາປະນາ ໃນປີ 1975, ເຈົ້າຊີວິດສີສະຫວ່າງ ວັດທະນາ ໄດ້ສະຫລະບັນລັງ, ປີ 1976 ລັດຖະບານກໍ່ເປີດເປັນຫໍພິພິທະພັນແຫ່ງຊາດ.<br>○ **ເລື່ອງລາວຂອງອາດີດເຈົ້າຊີວິດ** |
| 7 | ຫໍພະບາງ (Pha Bang Hall)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[44], TripAdvisor[45], ເວັບໄຊ ແລະ ແອບທ່ອງທ່ຽວຫລວງພະບາງ[46]<br>○ ມີການນຳສະເຫນີຂໍ້ມູນກ່ຽວກັບຫໍພະບາງ ແລະ ອົງພະບາງ ໃນຮູບແບບປ້າຍຂໍ້ມູນນ້ອຍໆຢູ່ຫນ້າຫໍ. ແຕ່ບໍ່ທັນກຳນົດ theme ໃນການນຳສະເຫນີທີ່ຊັດເຈນ ແລະ ຈຸດວາງປ້າຍກໍ່ກີດຂວາງນັກທ່ອງທ່ຽວເວລາມີຄົນຢືນອ່ານ. | ○ **ປະຫວັດຄວາມເປັນມາຂອງຫໍພະບາງ**<br>ສ້າງຂຶ້ນໃນປີ ຄ.ສ 1969 ໃນສະໄຫມເຈົ້າສີສະຫວ່າງວັດທະນາ. ອອກແບບໂດຍນາຍຊ່າງຊາວຫລວງພະບາງທີ່ມີການສ້າງໂຄງສ້າງເປັນແບບເອກະລັກສິລະປະສະກຸນຊ່າງລາວຫລວງພະບາງໂດຍແທ້<br>○ **ປະຫວັດຄວາມເປັນມາຂອງພະບາງ**<br>○ **ຄວາມສຳພັນຂອງພະບາງ ແລະ ບຸນປີໃຫມ່ລາວ** |

[40] https://goo.gl/maps/jceyJknqzakoqzKG7
[41] https://www.tripadvisor.com/Attraction_Review-g295415-d325309-Reviews-Royal_Palace_Museum-Luang_Prabang_Luang_Prabang_Province.html
[42] https://tourismluangprabang.org/things-to-do/culture-and-history/national-museum
[43] ປຶ້ມປະຫວັດຄວາມເປັນມາຂອງແຫລ່ງທ່ອງທ່ຽວ, ບຸນປະເພນີ ແລະ ຊິນເຜົ່າທີ່ສຳຄັນຂອງແຂວງຫລວງພະບາງ, ຫນ້າທີ 32, ພະແນກ ຖວທ ແຂວງຫລວງພະບາງ
[44] https://goo.gl/maps/AjjCWcVGeogu9J2QA
[45] https://www.tripadvisor.com/Attraction_Review-g295415-d325309-Reviews-Royal_Palace_Museum-Luang_Prabang_Luang_Prabang_Province.html
[46] https://tourismluangprabang.org/things-to-do/culture-and-history/national-museum

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 8 | ໂຮງລະຄອນພະລັກພະລາມ (Phalak Phalam Theatre)<br><br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[47], TripAdvisor[48] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[49]<br>○ ເວັບໄຊສະເພາະຂອງໂຮງລະຄອນພະລັກພະລາມ[50] ໄດ້ນຳສະເໜີຂໍ້ມູນທີ່ລະອຽດກ່ຽວກັບປະຫວັດຄວາມເປັນຂອງໂຮງລະຄອນ, ລະຄອນພະລັກພະລາມ, ຕົວລະຄອນ, ເຄື່ອງນຸ່ງ, ໜ້າກາກ, ນັກດົນຕີ ແລະ ເຄື່ອງດົນຕີພື້ນເມືອງ. | ○ ປະຫວັດຄວາມເປັນມາຂອງໂຮງລະຄອນ<br>○ ເລື່ອງລາວຂອງພະລັກພະລາມ<br>○ ເລື່ອງລາວຂອງເຄື່ອງດົນຕີພື້ນເມືອງ<br>**ສະພາບປັດຈຸບັນ**<br>○ ມີການນຳສະເໜີຂໍ້ມູນກ່ຽວກັບເລື່ອງພະລັກພະລາມຢູ່ໜ້າໂຮງລະຄອນໃນຮູບແບບກະດານ ແລະ ຕິດເຈ້ຍຮູບແບບ ແລະ ປົດລະຄອນ. ແຕ່ການນຳສະເໜີແມ່ນມີເນື້ອໃນທີ່ຍາວ, ບໍ່ທັນກຳນົດໃຈຄວາມໃນການນຳສະເໜີ (Theme) ທີ່ຊັດເຈນ.<br>○ ພາຍໃນຫ້ອງໂຖງຂາຍປີ້, ມີການຈັດວາງສະແດງຫົວໂຂນ ແລະ ອຸປະກອນດົນຕີພື້ນເມືອງ, ແຕ່ບໍ່ທັນມີການນຳສະເໜີຂໍ້ມູນທີ່ດຶງດູດຈິດໃຈນັກທ່ອງທ່ຽວ. |
| 9 | ອານຸເສົາວະລີເຈົ້າສີສະຫວ່າງ ວົງ(King Sisavang Vong Statue)<br> | ○ ບໍ່ມີຂໍ້ມູນໃນແຜນທີ່ອອນລາຍ Google Maps ແລະ ເວັບໄຊທ່ອງທ່ຽວຫລວງພະບາງ, ມີພຽງຮູບພາບໃນ TripAdvisor.<br>○ ມີປ້າຍຂໍ້ມູນນ້ອຍໆຢູ່ກ້ອງອານຸເສົາວະລີ. | ○ **ເລື່ອງລາວຂອງເຈົ້າສີສະຫວ່າງ ວົງ**<br>ເຈົ້າສີສະຫວ່າງ ວົງ ແມ່ນເຈົ້າຊີວິດຫລວງພະບາງລະຫວ່າງປີ 1904 – 1959, ພະອົງຄອງລາດໃນສະໄໝລາວຕົກເປັນຫົວເມືອງຂຶ້ນຂອງຝລັ່ງ (1893 – 1953), ສົບຂອງເພິ່ນແມ່ນຖືກຈູດເຜົາຢູ່ວັດທາດຫລວງ. ທ່າທາງຂອງຮູບປັ້ນແມ່ນສະແດງເຖິງການປະຕິຍານຕົນຕໍ່ກັບລັດຖະທຳມະນູນຕໍ່ໜ້າປະຊາຊົນ[51]. |

[47] https://goo.gl/maps/SBiYV7kYA5Zsnf2u6
[48] https://www.tripadvisor.com/Attraction_Review-g295415-d5986622-Reviews-Royal_Theatre-Luang_Prabang_Luang_Prabang_Province.html
[49] https://tourismluangprabang.org/things-to-do/culture-and-history/national-museum
[50] http://phralakphralam.com/phralak_phralam_en
[51] https://en.wikipedia.org/wiki/Sisavang_Vong

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 10 | ພະທາດພູສີ (Phousy Mountain)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[52], TripAdvisor[53] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[54]<br>○ ມີປ້າຍປະຫວັດແຫລ່ງທ່ອງທ່ຽວ ແລະ ແຜນທີ່ສະເພາະຂອງພູສີ. ແຕ່ເນື້ອໃນຍັງບໍ່ທັນກຳນົດໃຈຄວາມໃນການນຳສະເໜີ (Theme) ທີ່ຊັດເຈນ, ການຍ່າງເຂົ້າໄປຫາປ້າຍຍັງຫຍຸ້ງຍາກ ເພາະມີຮ້ານຂາຍເຄື່ອງບັງທາງຍ່າງ. ສ່ວນປ້າຍຂໍ້ມູນ ແລະ ແຜນທີ່ຢູ່ຈອມພູສີ ກໍ່ຕັ້ງຢູ່ຈຸດທີ່ການຍ່າງເຂົ້າໄປອ່ານແມ່ນມີຄວາມຫຍຸ້ງຍາກ. | ○ **ປະຫວັດຄວາມເປັນມາຂອງພູສີ**<br>ພະທາດພູສີສ້າງຂຶ້ນເມື່ອປີ ຄ.ສ 1804 ສະໄໝເຈົ້າອານຸລາດ, ຕັ້ງຂຶ້ນໃນປ່າທີ່ສັກສິດ, ມີລືສີສອງພີ່ນ້ອງມາບຳເພັນພາວະນາກຳມະຖານ. ພະທາດພູສີມີປະເພນີທີ່ສຳຄັນທີ່ຕິດພັນກັບຫໍກອງເພື່ອຕີບອກເວລາ ແລະ ແຈ້ງເຕືອນເຫດການຕ່າງໆໃຫ້ກັບຊາວຫລວງພະບາງ<br>○ **ເລື່ອງລາວຂອງວັດວາອາຣາມບໍລິເວນພະທາດພູສີ ເຊັ່ນ: ວັດປ່າຮວກ**<br>○ **ເລື່ອງລາວຂອງຮອຍພຣະພຸດທະບາດ**<br>○ **ເລື່ອງລາວຂອງພະພຸດທະຮູບ ແລະ ລືສີ ທີ່ຕັ້ງຢູ່ພູສີຟາກນ້ຳຄານ** |
| 11 | ວັດແສນ (Vat Sen)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[55], TripAdvisor[56] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[57]. ບໍ່ທັນມີປ້າຍນຳສະເໜີຂໍ້ມູນການທ່ອງທ່ຽວ.<br>○ ຢູ່ເທິງເພດານຂອງອາຣາມໃຫຍ່ ແມ່ນມີຮູບພາບທີ່ສວຍງາມທັງຫມົດ 50 ພາບ ທັງເພດານດ້ານນອກແລະດ້ານໃນອາຣາມ | ○ **ປະຫວັດຄວາມເປັນມາຂອງວັດແສນ**<br>ສ້າງຂຶ້ນປີ 1718 ສະໄໝເຈົ້າກິ່ງກິສຣາຊ, ມີພະເຈົ້ານ້ອຍ ແລະ ໃຫຍ່ຫລາຍອົງທີ່ມີອາຍຸຫລາຍກວ່າ 200 ປີ.<br>○ **ເລື່ອງລາວຂອງຮູບພາບເທິງເພດານຂອງອາຣາມ**<br>ຄວາມເປັນມາຂອງພະເຫວດສັນດອນ, ຮູບພຸດທະປະຫວັດ, ຮູບພະເຈົ້າ 10 ຊາດ, ຮູບກ່ຽວກັບເລື່ອງສິນ 5 ແລະ ຮູບພະພູຣິທັດ[58]. |

[52] https://goo.gl/maps/TDk59jvFXXUKfFWW6
[53] https://www.tripadvisor.com/Attraction_Review-g295415-d546038-Reviews-Mount_Phousi-Luang_Prabang_Luang_Prabang_Province.html
[54] https://tourismluangprabang.org/things-to-do/nature/phou-si-mountain
[55] https://goo.gl/maps/JnUD8RwwErpQxKeJ6
[56] https://www.tripadvisor.com/Attraction_Review-g295415-d3305897-Reviews-Wat_Sensoukharam-Luang_Prabang_Luang_Prabang_Province.html
[57] https://tourismluangprabang.org/things-to-do/buddhism/other-temples
[58] ປຶ້ມປະຫວັດຄວາມເປັນມາຂອງແຫລ່ງທ່ອງທ່ຽວ, ບຸນປະເພນີ ແລະ ຊົນເຜົ່າທີ່ສຳຄັນຂອງແຂວງຫລວງພະບາງ, ຫນ້າທີ 42, ພະແນກ ຖວທ ແຂວງຫລວງພະບາງ

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 12 | ວັດຊຽງທອງ (Vat Xiengthong)<br><br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[59], TripAdvisor[60] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[61]<br>○ ມີປ້າຍປະຫວັດແຫລ່ງທ່ອງທ່ຽວ 1 ແຜ່ນ ຕັ້ງຢູ່ປະຕູທາງເຂົ້າຟາກຖະຫນົນສັກກະລິນ, ແຕ່ຍັງມີເນື້ອໃນທີ່ຍາວ, ບໍ່ທັນກຳນົດໃຈຄວາມໃນການນຳສະເໜີ (Theme) ທີ່ຊັດເຈນ ແລະ ຕັ້ງຢູ່ຈຸດທີ່ກີດຂວາງທາງຍ່າງ ຖ້າມີກຸ່ມນັກທ່ອງທ່ຽວກຳລັງຢືນອ່ານ.<br>○ ພາຍໃນວັດຊຽງທອງມີຫລາຍສະຖານທີ່ຍ່ອຍ ຫລື ອົງປະກອບທີ່ສາມາດນຳສະເໜີໄດ້ເຊັ່ນ: ສິມ, ວິຫານແດງ, ຫໍພະມ່ານ, ໂຮງເກັບເຮືອ, ຫໍກອງ ແລະ ໂຮງມ້ຽນໂກດ.<br>○ ພາຍໃນໂຮງມ້ຽນໂກດ ມີການຈັດສະແດງວັດຖຸບູຮານຈຳນວນຫລາຍ, ແຕ່ບໍ່ທັນມີການນຳສະເໜີຂໍ້ມູນ ເຮັດໃຫ້ນັກທ່ອງທ່ຽວສາມາດເຂົ້າໃຈຄວາມຫມາຍຂອງແຕ່ລະຢ່າງໄດ້. | ○ **ປະຫວັດຄວາມເປັນມາຂອງວັດຊຽງທອງ**<br>ສ້າງຂຶ້ນປີ 1560 ໂດຍເຈົ້າໄຊເສດຖາທິລາດ (1548 – 1571), ມີຄວາມງົດງາມທາງດ້ານສະຖາປັດຕະຍະກຳແບບມີເອກະລັກຂອງຫລວງພະບາງ, ເປັນດັ່ງອັນຍະມະນີແຫ່ງສະຖາປັດຕະຍະກຳຂອງລາວອັນເກົ່າແກ່ ແລະ ມີຮູບແບບຊົງລາວດັ້ງເດີມແທ້ໆ.ເປັນວັດແຫ່ງດຽວທີ່ລອດພົ້ນຈາກການເຜົາຜານ ໃນສະໄຫມສົງຄາມປີ 1887. ມີຣາດຊະຣົດທີ່ເກັບມ້ຽນພະໂກດຂອງເຈົ້າສີສະຫວ່າງ ວັດທະນາ ແລະ ເຄືອລະຍາດ[62].<br>○ **ສະຖາປັດຕະຍະກຳເອກະລັກຂອງຫລວງພະບາງ**<br>ສິມ ສະແດງເຖິງສະຖາປັດຕະຍະກຳທາງດ້ານສາສະຫນາແບບເອກະລັກຂອງຫລວງພະບາງແທ້ໆ ດ້ວຍຫລັງຄາອາຮາມທີ່ແອ່ນໂຄ້ງຊ້ອນກັນຢູ່ 3 ຊັ້ນ, ຫລຸດລື່ນກັນລົງມາເປັນຖານ ສ່ວນກາງຂອງຫລັງຄາປະດັບເອ້ດ້ວຍຍອດ ຊໍ່ຟ້າ ທີ່ສວຍງາມເຊິ່ງປະກອບມີທັງຫມົດ 17 ຊໍ່, ອັນມີຄວາມຫມາຍວ່າເປັນ ອາຮາມທີ່ເຈົ້າມະຫາຊີວິດ ຊົງສ້າງຂຶ້ນ. ຕາມອາຮາມ ແລະ ບໍລິເວນອ້ອມຮອບວັດ ກໍຍັງມີຮູບພາບທີ່ສະແດງເຖິງວິຖີການດຳລົງຊີວິດຂອງປະຊາຊົນ ທີ່ຕິດດ້ວຍແກ້ວຫລາກຫລາຍສີສັນຕິດຕໍ່ກັນເປັນຮູບຕ່າງໆ |

59 https://goo.gl/maps/xQxezMrFG6L7JG2g9
60 https://www.tripadvisor.com/Attraction_Review-g295415-d325751-Reviews-Wat_Xiengthong-Luang_Prabang_Luang_Prabang_Province.html
61 https://tourismluangprabang.org/things-to-do/buddhism/wat-xiengthong-2
62 ປຶ້ມປະຫວັດຄວາມເປັນມາຂອງແຫລ່ງທ່ອງທ່ຽວ, ບຸນປະເພນີ ແລະ ຊົນເຜົ່າທີ່ສຳຄັນຂອງແຂວງຫລວງພະບາງ, ຫນ້າທີ 7, ພະແນກ ຖວທ ແຂວງຫລວງພະບາງ

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເຫນີ (Interpretive Stories & Topics) |
|---|---|---|---|
| 13 | ອາຄານເກົ່າ: ເຮືອນມໍລະດົກໂລກ (World Heritage House)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[63], ແຕ່ບໍ່ມີໃນເວັບໄຊ TripAdvisor, ເວັບໄຊ ແລະ ແອບມືຖື ທ່ອງທ່ຽວຫລວງພະບາງ[64]<br>○ ບໍ່ມີປ້າຍປະຫວັດແຫລ່ງທ່ອງທ່ຽວຂອງ ອາຄານ | ○ ປະຫວັດຄວາມເປັນມາຂອງອາຄານ ເຄີຍເປັນຫ້ອງການພາສີ (Former Customs and Public Companies House), ສ້າງຂຶ້ນໃນປີ 1932. ປັດຈຸບັນແມ່ນ ພະແນກມໍລະດົກໂລກຫລວງພະບາງ[65].<br>○ ຮູບແບບການກໍ່ສ້າງ, ການອອກແບບ ແລະ ການນຳໃຊ້ວັດສະດຸ |
| 14 | ອາຄານເກົ່າ: ເຮືອນຈັນມໍລະດົກຫລວງພະບາງ (Heuan Chan Heritage Luang Prabang)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[66], TripAdvisor[67], ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[68]ແລະ Facebook[69]<br>○ ເປັນທັງສູນຂໍ້ມູນຂ່າວສານມໍລະດົກ (Heritage Information Center) ແລະ ຫໍພິພິທະພັນທີ່ນຳສະເຫນີວິຖີຊີວິດການເປັນຢູ່ຂອງຄົນຫລວງພະບາງ | ○ ປະຫວັດຄວາມເປັນຂອງເຮືອນຈັນ ເຮືອນຊົງລາວມີອາຍຸ 100 ປີ, ປັດຈຸບັນເປັນຫໍພິພິທະພັນທາງດ້ານວັດທະນະທຳ ແລະ ເປັນສູນຂໍ້ມູນມໍລະດົກໂລກ (Heritage Information Center)<br>○ ເລື່ອງລາວກ່ຽວກັບຮີດຄອງປະເພນີຫລວງພະບາງ, ການໃສ່ບາດ ແລະ ວິຖີຊີວິດຊາວຫລວງພະບາງ |

[63] https://goo.gl/maps/ewuBMQcVohEH7UQo9
[64] https://tourismluangprabang.org/things-to-do/culture-and-history/colonial-buildings
[65] A walk through the heritage of Luang Prabang, page 17 – 18, Francis Engelmann, Alain Menoni, 2015
[66] https://g.page/HeuanChanHeritageLuangPrabang?share
[67] https://www.tripadvisor.com/Attraction_Review-g295415-d12351995-Reviews-Heuan_Chan_Heritage_Luang_Prabang-Luang_Prabang_Luang_Prabang_Province.html
[68] https://tourismluangprabang.org/things-to-do/culture-and-history/heritage-information-center
[69] https://www.facebook.com/HeuanChanHeritageLuangPrabang

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 15 | ອາຄານເກົ່າ: ໂຮງຮຽນປະຖົມຫລວງພະບາງ (Luang Prabang Primary School)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[70]<br>○ ບໍ່ທັນມີການນຳສະເໜີຂໍ້ມູນໃນຮູບແບບປ້າຍ ແລະ ຊ່ອງທາງອອນລາຍ. | ○ ຄວາມເຊື່ອມໂຍງກັບບຸກຄົນສຳຄັນຂອງປະເທດ ປະທານປະເທດຄົນທຳອິດຂອງ ສປປ ລາວ ເຈົ້າຊາຍ ສຸພານຸວົງ (1909 – 1995) ເຄີຍຮ່ຳຮຽນຢູ່ໂຮງຮຽນແຫ່ງນີ້[71].<br>○ ສະຖາປັດຕະຍະກຳຂອງອາຄານ ການອອກແບບທາງສະຖາປັດຕະຍະກຳສາມຮູບແບບ, ສະແດງອອກບ່ອນການກໍ່ສ້າງສາມໄລຍະ.<br>○ ເລື່ອງລາວຂອງຕົ້ນຂາມ |
| 16 | ອາຄານເກົ່າ: ໂຮງແຮມ 3 ນາກາ (3 Nagas Hotel)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[72] ແລະ TripAdvisor[73]<br>○ ບໍ່ທັນມີການນຳສະເໜີຂໍ້ມູນໃນຮູບແບບປ້າຍ ແລະ ຊ່ອງທາງອອນລາຍ. | ○ ປະຫວັດຄວາມເປັນມາຂອງອາຄານ ໂຮງແຮມປະກອບມີອາຄານເກົ່າສາມຫລັງທີ່ໄດ້ຮັບການບູລະນະຄືນໃຫມ່. ອາຄານຢູ່ເບື້ອງຊ້າຍ ແມ່ນເຮືອນຊົງລາວສະໄຫມລ່າເມືອງຂຶ້ນ (Lao – colonial half – timbered house) ເຊິ່ງປະກອບມີລະບຽງ ແລະ ຂັ້ນໄດກໍ່. ພາຍໃນເຮືອນຫລັງນີ້ມີສວນດອກໄມ້ທີ່ກວ້າງຂວາງ, ເຊິ່ງເປັນເລື່ອງທີ່ປົກກະຕິກ່ອນການຈັດສັນຕົວເມືອງແບບລ່າເມືອງຂຶ້ນ (Colonial urbanization). ສ້າງຂຶ້ນໃນປີ 1903, ເຈົ້າຂອງຜູ້ທຳອິດແມ່ນເຈົ້າພະຍາເມືອງຈັນ, ທີ່ປຶກສາຂອງເຈົ້າສີສະຫວ່າງ ວົງ (1885 – 1959), ກ່ອນຈະມອບຕໍ່ກຳມະສິດໃຫ້ແກ່ຄອບຄົວຄຳບົວ ແລະ Achan Thing Dy[74]. |

70 https://goo.gl/maps/rgAcsfpzRKVqCw6U6
71 A walk through the heritage of Luang Prabang, page 45 – 48, Francis Engelmann, Alain Menoni, 2015
72 https://goo.gl/maps/eVBaTbyiH3SLUyRAA
73 https://www.tripadvisor.com/Hotel_Review-g295415-d325311-Reviews-Hotel_3_Nagas_Luang_Prabang_MGallery_by_Sofitel-Luang_Prabang_Luang_Prabang_Province.html
74 A walk through the heritage of Luang Prabang, page 41 – 44, Francis Engelmann, Alain Menoni, 2015

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 17 | ອາຄານເກົ່າ: ໂຮງແຮມວິນລາສັນຕິ (Villa Santi)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[75] ແລະ TripAdvisor[76]<br>○ ບໍ່ທັນມີການນຳສະເໜີຂໍ້ມູນໃນຮູບແບບ ປ້າຍ ແລະ ຊ່ອງທາງອອນລາຍ | ○ ປະຫວັດຄວາມເປັນມາຂອງອາຄານ ອາຄານນີ້ເຄີຍແມ່ນຊັບສິນບັດຂອງຄອບຄົວເຈົ້າຊີວິດ, ອາຄານ ຊົງຝລັ່ງ (Colonial house) ທີ່ມາຊົງໂຄ້ງ ອາດໄດ້ຮັບອິດທິພົນຈາກເມືອງເກົ່າເປນັງ, ອະນານິຄົມຂອງອັງກິດຢູ່ມາເລເຊຍ ຫລື ສະຫຍາມ (ປະເທດໄທ)[77]. |
| 18 | ວິນລາເດີວິວປາວິລຽນ (The View Pavilion Hotel)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[78] ແລະ TripAdvisor[79]<br>○ ບໍ່ທັນມີການນຳສະເໜີຂໍ້ມູນໃນຮູບແບບ ປ້າຍ ແລະ ຊ່ອງທາງອອນລາຍ | ○ ປະຫວັດຄວາມເປັນມາຂອງອາຄານ ສ້າງຂຶ້ນໃນປີ 1935, ເຄີຍເປັນບ່ອນຢູ່ອາໄສຂອງສັດຕະວະແພດຄົນຝລັ່ງ[80]<br>○ ຮູບແບບ ແລະ ຈຸດພິເສດຂອງອາຄານ |

[75] https://goo.gl/maps/CHnSzHd7bB6zUmAM6
[76] https://www.tripadvisor.com/Hotel_Review-g295415-d301957-Reviews-Villa_Santi_Hotel-Luang_Prabang_Luang_Prabang_Province.html
[77] A walk through the heritage of Luang Prabang, page 51, Francis Engelmann, Alain Menoni, 2015
[78] https://goo.gl/maps/2cYxEQUSXyPyurco7
[79] https://www.tripadvisor.com/Hotel_Review-g295415-d1421776-Reviews-The_View_Pavilion_Boutique_Hotel-Luang_Prabang_Luang_Prabang_Province.html
[80] A walk through the heritage of Luang Prabang, page 62, Francis Engelmann, Alain Menoni, 2015

## 6.2) ເມືອງຈອມເພັດ

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 1 | ວັດຊຽງແມນ (Vat Xieng Mene)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[81], ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[82]<br>○ ແຕ່ບໍ່ທັນມີຂໍ້ມູນໃນ TripAdvisor ແລະ ປ້າຍປະຫວັດແຫລ່ງທ່ອງທ່ຽວ<br>○ ມີທາດທີ່ບັນຈຸອັດຖິຂອງເຈົ້າຫລວງທີຣິຍະເທບພະວົງ, ເຈົ້າຫລວງອົງສຸດທ້າຍຂອງນະຄອນແພຣ່ (ປະເທດໄທ) ແລະ ອາດີດຕາແສງບ້ານຊຽງແມນ | ○ **ປະຫວັດຄວາມເປັນມາຂອງວັດຊຽງແມນ**<br>ສ້າງປີ 1566 ໂດຍພະເຈົ້າໄຊເສດຖາທິຣາຊ (1548 – 1571), ມີສິລະປະແບບປະສົມປະສານກັນລະຫວ່າງ ສີມືສະກຸນຊ່າງຊາວຫລວງພະບາງ ກັບສິລະປະຂອງມຽນມາ. ສະຖາປັດຕະຍະກຳຮູບແບບການປຸກສ້າງເປັນຊົງຫລວງພະບາງ ອາດຈະຮຽນແບບມາຈາກສິມວັດຊຽງທອງ ເພາະສ້າງຂຶ້ນໃນສະໄຫມກະສັດປົກຄອງອົງດຽວກັນ.<br>○ **ເລື່ອງລາວຂອງເຈົ້າຫລວງ[83]**<br>○ **ປະເພນີຕີບພະທາດຊາຍ** |
| 2 | ວັດຈອມເພັດ (Vat Chomphet)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[84], ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[85]. ມີຂໍ້ມູນເບື້ອງຕົ້ນກ່ຽວກັບເມືອງ ແລະ ວັດຢູ່ໃນ TripAdvisor[86], ແຕ່ບໍ່ທັນມີປ້າຍປະຫວັດແຫລ່ງທ່ອງທ່ຽວ. ມີປ້າຍແຈ້ງໃຫ້ນັກທ່ອງທ່ຽວຊື້ປີ້ເປັນພາສາອັງກິດຢູ່ຕີນຂັ້ນໄດ, ແຕ່ຂຽນບໍ່ທັນຖືກຫລັກໄວຍາກອນ. ສະພາບພາຍນອກ ແລະ ພາຍໃນວັດ ແມ່ນຍັງຂາດການບູລະນະຮັກສາ. ທາດຢູ່ດ້ານຫລັງຂອງວັດ ກໍ່ສ່ຽງທີ່ຈະພັງທະລາຍລົງມາ. | ○ **ປະຫວັດຄວາມເປັນມາຂອງວັດຈອມເພັດ**<br>ປີ 1888 ພະຍາ ສຸລິສັກ ມົນຕີ ແມ່ທັບພາກທີ່ 3 ຂອງໄທ ໄດ້ຖືກແຕ່ງຕັ້ງຈາກສະຫຍາມໃຫ້ມາປະຈຳຢູ່ຂົງເຂດນີ້ ເພື່ອຈະບຸກໂຈມຕີນະຄອນຫລວງພະບາງ, ເພິ່ນເລີຍສ້າງວັດແຫ່ງນີ້ຂຶ້ນໄວ້ ເພື່ອເປັນສິລາຈາລຶກໃຫ້ເພິ່ນ.<br>○ **ເລື່ອງລາວຂອງທາດສອງຫນ່ວຍຢູ່ດ້ານຫລັງຂອງວັດ**<br>ທາດແມ່ນບັນຈຸອັດຖິຂອງພະມະເຫສີຂອງເຈົ້າຊີວິດໃນອາດີດ[87] |

[81] https://goo.gl/maps/AfJ82yYy2Ld92KYVA
[82] https://tourismluangprabang.org/things-to-do/buddhism/temples-in-chomphet-district
[83] Facebook: ນະຄອນຫລວງພະບາງ Luangprabang City
[84] https://goo.gl/maps/hJ3uHt7mrYSUnMFf9
[85] https://tourismluangprabang.org/things-to-do/buddhism/wat-chomphet
[86] https://www.tripadvisor.com/Attraction_Review-g295415-d5976295-Reviews-Chomphet-Luang_Prabang_Luang_Prabang_Province.html
[87] https://tourismluangprabang.org/things-to-do/buddhism/wat-chomphet

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 3 | ວັດລ້ອງຄູນ (Vat Longkhoune)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[88], TripAdvisor[89], ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[90]<br>○ ບໍ່ທັນມີປ້າຍນຳສະເໜີຂໍ້ມູນ.<br>○ ມີກຸດຕິຂອງອາດີດເຈົ້າຊີວິດ: ເຈົ້າສີສະຫວ່າງວັດທະນາ, ອົງມຸງກຸນລາດຊະກຸມມານ ແລະ ເຈົ້າຊາຍວົງສະຫວ່າງ ໄດ້ບວດຮ່ຳຮຽນໃນພະພຸດທະສາສະໜາຢູ່ວັດນີ້<br>○ ສະຖານທີ່ສຳລັບເດີນຈົງກົມ: ແຕ່ກ່ອນບໍ່ທັນເປັນວັດ, ເປັນບ່ອນປະຕິບັດທຳ, ນັ່ງສະມາທິ ແລະ ກຳມະຖານ | ○ **ປະຫວັດຄວາມເປັນມາຂອງວັດລ້ອງຄູນ**<br>ເປັນວັດທີ່ມີປະຫວັດສາດຕິດພັນກັບລາຊະປະເພນີຂຶ້ນຄອງລາຊະສົມບັດຂອງພະເຈົ້າມະຫາຊີວິດຫລວງພະບາງກ່ອນຂຶ້ນສະເຫວີຍລາດຕ້ອງໄດ້ບວດຈຳສີນຢູ່ວັດນີ້ 7 ວັນ.<br>○ **ຄວາມໝາຍຂອງຮູບແຕ້ມທະຫານຈີນ**<br>ທ້າຍສັດຕະວັດທີ 18, ເກີດມີການຕໍ່ສູ້ເສິກຫໍ່ (ຈີນ) ໄດ້ໃຊ້ສະຖານທີ່ວັດລ້ອງຄູນ ເປັນເຂດທີ່ໝັ້ນ. ທະຫານຈີນໄດ້ແຕ້ມຮູບທະຫານ 2 ອົງຂ້າງປະຕູເຂົ້າວັດເພື່ອປົກປ້ອງເຂົາເຈົ້າຈາກຜີເຜດ.<br>○ **ພິທີທາງສາສະໜາຢູ່ວັດລ້ອງຄູນມື້ບຸນປີໃໝ່ລາວ**<br>ບຸນປີໃໝ່ລາວ ຊາວເມືອງຈອມເພັດ ໂດຍສະເພາະຊາວບ້ານຊຽງແມນ ມາທຳພິທີທາງສາສະໜາຢູ່ວັດແຫ່ງນີ້ກ່ອນ ຫລັງຈາກນັ້ນກໍໄປວັດຖ້ຳສັກກະລິນ ແລ້ວຈຶ່ງລົງໄປຕົບພະທາດຊາຍມົງຄຸນຢູ່ດອນຊາຍມົງຄຸນ. |
| 4 | ວັດຖ້ຳສັກກະລິນ (Vat Tham Sakkalin)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[91], ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[92]. ແຕ່ບໍ່ທັນມີຂໍ້ມູນໃນ TripAdvisor ແລະ ປ້າຍປະຫວັດແຫລ່ງທ່ອງທ່ຽວ. | ○ **ປະຫວັດຄວາມເປັນມາຂອງວັດຖ້ຳສັກກະລິນ**<br>ສ້າງຂຶ້ນປີ 1902 ໃນລາຊະການຂອງເຈົ້າຄຳສຸກ ສັກກະລິນ (1895 – 1904), ເຊິ່ງເປັນພໍ່ຂອງເຈົ້າສີສະຫວ່າງ ວົງ.<br>○ **ເລື່ອງລາວກ່ຽວກັບຖ້ຳ**<br>○ **ເລື່ອງລາວຂອງເຈົ້າສັກກະລິນ**<br>ຫລັງຈາກທີ່ເຈົ້າຄຳສຸກ ສັກກະລິນໄດ້ເສຍຊີວິດ, ກະດູກຂອງເພິ່ນກໍ່ຖືກກໍ່ເປັນທາດໄວ້ທາງດ້ານໃນຂອງຖ້ຳ ທັດຈາກແທ່ນພະພຸດທະເຈົ້າໄປທາງຊ້າຍມື |

88 https://goo.gl/maps/XkZjnfBBZ345q1Zg9
89 https://www.tripadvisor.com/Attraction_Review-g295415-d454894-Reviews-Wat_Long_Khoun-Luang_Prabang_Luang_Prabang_Province.html
90 https://tourismluangprabang.org/things-to-do/buddhism/temples-in-chomphet-district
91 https://goo.gl/maps/2tCMh7okgNW3xpKU6
92 https://tourismluangprabang.org/things-to-do/buddhism/temples-in-chomphet-district

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 5 | ວັດຫາດສ້ຽວ (Vat Had Siaw)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[93], ແຕ່ບໍ່ທັນມີຂໍ້ມູນໃນເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ, TripAdvisor ແລະ ປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ກ່ອນຈະຮອດວັດແຫ່ງນີ້, ນັກທ່ອງທ່ຽວໄດ້ສຳພັດກັບວັດ 4 ແຫ່ງແລ້ວ. ສະນັ້ນ, ການຈະດຶງດູດນັກທ່ອງທ່ຽວໃຫ້ສືບຕໍ່ສຳພັດວັດອີກຫນຶ່ງແຫ່ງ, ຈະຕ້ອງມີເລື່ອງລາວທີ່ຫນ້າສົນໃຈ ແລະ ເປັນເອກະລັກ. | ○ **ປະຫວັດຄວາມເປັນມາຂອງວັດຫາດສ້ຽວ**<br>ສ້າງຂຶ້ນໃນສັດຕະວັດທີ 18 ໂດຍເຈົ້າອານຸລຸດ (1792 – 1817) ເປັນວັດປ່າ ພະສົງ ແລະ ຊາວບ້ານໃຊ້ເປັນບ່ອນກຳມະຖານ ແລະ ເດີນຈົງກົມພາວະນາ. ວັດຖືກປະຮ້າງໄວ້ໃນປີ 1995. ແຕ່ລະວັນ ພະສົງຂ້າມເຮືອໄປບິນທະບາດຢູ່ຕົວເມືອງຫລວງພະບາງ<br>○ **ເລື່ອງລາວກ່ຽວກັບການປະຕິບັດກຳມະຖານ** |
| 6 | ວັດຄົກປາບ (Vat Kokpap)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[94], ແຕ່ບໍ່ທັນມີຂໍ້ມູນໃນເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ, TripAdvisor ແລະ ປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ມີສະພາບແວດລ້ອມທີ່ຮົ່ມເຢັນ, ປົກຫຸ້ມດ້ວຍຕົ້ນໄມ້ ແລະ ທາງຍ່າງທີ່ສະອາດ.<br>○ ການເດີນທາງເຂົ້າເຖິງຈາກວັດຫາດສ້ຽວຫາວັດຄົກປາບ ແມ່ນມີຄວາມຫຍຸ້ງຍາກ, ພາຫະນະບໍ່ສາມາດເຂົ້າເຖິງທາງບົກໄດ້ ແລະ ມີແຕ່ທາງຍ່າງ. ສ່ວນໃຫຍ່ແມ່ນນຳໃຊ້ເຮືອ. | ○ **ປະຫວັດຄວາມເປັນມາຂອງວັດຄົກປາບ**<br>ສ້າງຂຶ້ນພາຍຫລັງທີ່ສຳເລັດການສ້າງວັດຫາດສ້ຽວ, ອາດເວົ້າໄດ້ວ່າ ວັດດັ່ງກ່າວກໍແມ່ນເຈົ້າອານຸລຸດ ນັນທາຕຸລາດ ເປັນຜູ້ສ້າງ ແລະ ໄດ້ຮັບການອຸປະຖຳຈາກເຊື້ອສາຍຫນໍ່ກະສັດໃນວັງຫລວງພະບາງ. ປີ 1957 ວັດແຫ່ງນີ້ໄດ້ຖືກປະລະເລີຍ ແລະ ຖິ້ມຮ້າງໄວ້ໃນໄລຍະຫນຶ່ງ. ວັດຕິດພັນກັບການດຳລົງຊີວິດຂອງຊາວຫລວງພະບາງ ໂດຍສະເພາະແມ່ນການຈັດພິທີກຳຕ່າງໆຕາມຮີດ 12 ຄອງ 14<br>○ **ເລື່ອງລາວກ່ຽວກັບຮີດ 12 ຄອງ 14**<br>○ **ເລື່ອງລາວກ່ຽວກັບການປະຕິບັດກຳມະຖານ** |

[93] https://goo.gl/maps/DiXPL2HCW2ezKdJk9
[94] https://goo.gl/maps/m7se2sQMX4QXuzpZ6

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເຫນີ (Interpretive Stories & Topics) |
|---|---|---|---|
| 7 | ວັດຫນອງສະແກ້ວ (Vat Nong Sa Keo)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[95], ແຕ່ບໍ່ທັນມີຂໍ້ມູນໃນເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ, TripAdvisor ແລະ ປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ກ່ອນຈະຮອດວັດແຫ່ງນີ້, ນັກທ່ອງທ່ຽວໄດ້ສຳພັດກັບວັດ 5 ແຫ່ງແລ້ວ. ສະນັ້ນ, ການຈະດຶງດູດນັກທ່ອງທ່ຽວໃຫ້ສືບຕໍ່ສຳພັດວັດອີກຫນຶ່ງແຫ່ງ, ຈະຕ້ອງມີເລື່ອງລາວທີ່ຫນ້າສົນໃຈ ແລະ ເປັນເອກະລັກ. | ○ **ປະຫວັດຄວາມເປັນມາຂອງວັດຫນອງສະແກ້ວ** ສ້າງຂຶ້ນໃນປີ ຄ.ສ 1657. ເປັນວັດປ່າ, ພະສົງ ແລະ ຊາວບ້ານໃຊ້ເປັນບ່ອນກຳມະຖານ ແລະ ເດີນຈົງກົມ. ເຄີຍເປັນບ່ອນປະຕິບັດທຳຂອງເຈົ້າເພັດຊະລາດ ເຊິ່ງເພິ່ນໄດ້ອອກບວດຢູ່ວັດນີ້ໃນປີ ຄ.ສ 1912, ຖືກປະລະເລີຍ ແລະ ຖິ້ມຮ້າງໄວ້ມາແຕ່ປີ ຄ.ສ 1920.<br>○ ເລື່ອງລາວກ່ຽວກັບການປະຕິບັດທຳຂອງເຈົ້າເພັດຊະລາດ |
| 8 | ສູນຫັດຖະກຳເຄື່ອງປັ້ນດິນເຜົາ<br>(Pottery Demonstration and Exhibition Center)<br> | ○ ມີຂໍ້ມູນເບື້ອງຕົ້ນກ່ຽວກັບປະຫວັດຄວາມເປັນມາຂອງການຜະລິດເຄື່ອງປັ້ນດິນເຜົາບ້ານຈ່ານເຫນືອໃນເວັບໄຊ້ ແລະ ແອບມືທ່ອງທ່ຽວຫລວງພະບາງ[96], ແຕ່ບໍ່ທັນມີຂໍ້ມູນຢູ່ໃນແຜນທີ່ອອນລາຍ Google Maps ແລະ TripAdvisor.<br>○ ມີປ້າຍປະຫວັດກ່ຽວກັບບ້ານຈ່ານເຫນືອ ແລະ ການຜະລິດເຄື່ອງປັ້ນດິນເຜົາ ພ້ອມກັບແຜນທີ່ທ່ອງທ່ຽວພາຍໃນບ້ານ ເຊິ່ງຕັ້ງຢູ່ທ່າເຮືອຂອງບ້ານຈ່ານເຫນືອ. | ○ ປະຫວັດຄວາມເປັນມາຂອງການຜະລິດເຄື່ອງປັ້ນດິນເຜົາ<br>○ ຄວາມສຳພັນຂອງເຄື່ອງປັ້ນດິນເຜົາກັບວິຖີຊີວິດຂອງປະຊາຊົນທ້ອງຖິ່ນບ້ານຈ່ານເຫນືອ<br>○ ຄຸນປະໂຫຍດ ແລະ ການນຳໃຊ້ເຄື່ອງປັ້ນດິນເຜົາ<br>○ ຂັ້ນຕອນການຜະລິດເຄື່ອງປັ້ນດິນເຜົາ<br>**ສະພາບປັດຈຸບັນ**<br>○ ມີຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວຢູ່ພາຍໃນສູນຫັດຖະກຳທີ່ໃກ້ຈະສຳເລັດ, ຫ້ອງວາງສະແດງຜະລິດຕະພັນ ແລະ ຫ້ອງນ້ຳສາທາລະນະ<br>○ ນອກຈາກສູນຫັດຖະກຳແຫ່ງນີ້, ຍັງມີ Pottery House Lao Food[97] ຂອງສ່ວນບຸກຄົນທີ່ຂາຍປະສົບການທ່ອງທ່ຽວໃນຮູບແບບການຜະລິດເຄື່ອງປັ້ນດິນເຜົາ. |

95 https://goo.gl/maps/wxbFs4sZEHtQZDXE9
96 https://tourismluangprabang.org/things-to-do/arts/pottery
97 https://www.tripadvisor.com/Attraction_Review-g295415-d13222351-Reviews-Pottery_House_Lao_Food_Tours-Luang_Prabang_Luang_Prabang_Province.html

## 6.3) ເມືອງປາກອູ

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 1 | ບ້ານຊ່າງໄຫ (Ban Xang Hai)  | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[98] ແລະ TripAdvisor[99] . ບໍ່ທັນມີຂໍ້ມູນໃນເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ ແລະ ບໍ່ມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ມີສະຖານທີ່ຈອດລົດ ແລະ ຫ້ອງນໍ້າສາທາລະນະທີ່ຫາກໍ່ສ້າງສຳເລັດ, ສ່ວນສູນຂໍ້ມູນຂ່າວສານກໍ່ກຳລັງຈະສຳເລັດ.<br>○ ນັກທ່ອງທ່ຽວບາງກຸ່ມກໍ່ເດີນທາງມາດ້ວຍເຮືອ ຫລື ມາລົດແຕ່ກັບທາງເຮືອ.<br>○ ການຕົ້ມເຫລົ້າບາງແຫ່ງພາຍໃນບ້ານຍັງບໍ່ທັນໄດ້ມາດຕະຖານເລື່ອງຄວາມສະອາດ | ○ **ປະຫວັດຄວາມເປັນມາຂອງບ້ານຊ່າງໄຫ** ສ້າງຕັ້ງຂຶ້ນປີ 1363. ດິນມີຄຸນນະພາບດີ, ມີຄວາມຫນ້າແຫນ້ນເຫມາະແກ່ການປັ້ນຫລໍ່. ປັດຈຸບັນ ບ້ານບໍ່ມີຊ່າງປັ້ນຫມໍ້ແລ້ວ, ເນື່ອງຈາກວິທີການປັ້ນຫມໍ້ບໍ່ໄດ້ຮັບການສືບຜ່ານ ແລະ ສືບທອດໃຫ້ຄົນລຸ້ນຫລັງ, ມີພຽງຮ່ອງຮອຍຂອງເຕົາໄຫພາຍໃນບ້ານເທົ່ານັ້ນທີ່ຫລົງເຫລືອໄວ້ໃຫ້ຢ້ຽມຊົມ ແລະ ໄຫບູຮານຈຳນວນຫນຶ່ງ<br>○ **ປະຫວັດຄວາມເປັນມາຂອງການຕົ້ມເຫລົ້າ, ຄວາມສຳພັນກັບວິຖີຊີວິດຂອງປະຊາຊົນ ແລະ ຂັ້ນຕອນການຕົ້ມເຫລົ້າ**<br>○ **ບົດບາດຂອງແມ່ຍິງພາຍໃນບ້ານຊ່າງໄຫ ກ່ຽວກັບການຕຳແຜ່ນແພ, ຂັ້ນຕອນການຕຳແຜ່ນແພ** |
| 2 | ວັດຊ່າງໄຫ (Vat Xang Hai)  | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[100], ແຕ່ຂໍ້ມູນທີ່ຕັ້ງບໍ່ຖືກຕ້ອງ. ບໍ່ມີຂໍ້ມູນໃນ TripAdvisor, ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ ແລະ ບໍ່ມີປ້າຍປະຫວັດແຫລ່ງທ່ອງທ່ຽວ. | ○ **ປະຫວັດຄວາມເປັນມາຂອງວັດຊ່າງໄຫ**<br>○ **ຄວາມຫມາຍຂອງພະພຸດທະຮູບ ແລະ ຮູບປັ້ນຕ່າງໆ** |

[98] https://goo.gl/maps/nFFRtgqmJLXMrYgW6
[99] https://www.tripadvisor.com/Attraction_Review-g295415-d546106-Reviews-Whisky_Village-Luang_Prabang_Luang_Prabang_Province.html
[100] https://goo.gl/maps/A6AhdEDX8VQ2PuDv8

| ລຳດັບ | ສະຖານທີ່ (Site Name) | ສະພາບປັດຈຸບັນ (Current Status) | ເລື່ອງລາວໃນການນຳສະເໜີ (Interpretive Stories & Topics) |
|---|---|---|---|
| 3 | ວັດປາກອູ (Vat Pak Ou)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[101], ແຕ່ບໍ່ທັນມີຂໍ້ມູນໃນ TripAdvisor, ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ ແລະ ບໍ່ມີປ້າຍປະຫວັດແຫລ່ງທ່ອງທ່ຽວ.<br>○ ມີສະຖານທີ່ຈອດລົດ ແລະ ຫ້ອງນ້ຳສາທາລະນະທີ່ຫາກໍ່ສ້າງສຳເລັດ, ສ່ວນສູນຂໍ້ມູນຂ່າວສານກໍ່ກຳລັງຈະສຳເລັດ. | ○ **ປະຫວັດຄວາມເປັນມາຂອງວັດປາກອູ**<br>ສ້າງຂຶ້ນປີ 1547 ໂດຍພະເຈົ້າໄຊເສດຖາ, ເປັນວັດເກົ່າແກ່ ແລະ ມີຄວາມສຳຄັນຂອງຊາວເມືອງປາກອູ, ເປັນບ່ອນສັກກະລະບູຊາຂອງຊາວເມືອງປາກອູ. ມີຄວາມເປັນມາທີ່ຕິດພັນກັບບ້ານປາກອູ - ຖ້ຳຕິ່ງ. ຈຸດພິເສດທີ່ໂດດເດັ່ນແມ່ນ ອາຮາມ (ສິມ) ຂະໜາດນ້ອຍ. ສະໄໝເຈົ້າສີສະຫວ່າງວົງ ໄດ້ກໍ່ສ້າງເພີ່ມເຕີມລະບຽງດ້ານຂ້າງ ເພື່ອເປັນພື້ນທີ່ໃຊ້ສອຍ ແລະ ເປັນບ່ອນທຳພິທີສົງນ້ຳພະຂອງເຈົ້າຊີວິດ.<br>○ **ຄວາມໝາຍຂອງຮູບແຕ້ມຈິດຕະກຳຝາຜະໜັງກ່ຽວກັບນິທານພື້ນເມືອງລາວ** |
| 4 | ຖ້ຳຕິ່ງ (Tham Ting / Tham Pak Ou)<br> | ○ ມີຂໍ້ມູນເບື້ອງຕົ້ນໃນແຜນທີ່ອອນລາຍ Google Maps[102], TripAdvisor[103] ແລະ ເວັບໄຊ ແລະ ແອບມືຖືທ່ອງທ່ຽວຫລວງພະບາງ[104]<br>○ ມີປ້າຍປະຫວັດຄວາມເປັນມາຂອງຖ້ຳລຸ່ມ, ຖ້ຳເທິງ ແລະ ບ້ານປາກອູ. ແຕ່ເນື້ອໃນບໍ່ທັນໄດ້ກຳນົດໃຈຄວາມໃນການນຳສະເໜີທີ່ຊັດເຈນ ແລະ ບາງປ້າຍກໍ່ຕິດຕັ້ງຢູ່ຈຸດທີ່ກີດຂວາງທາງຍ່າງເວລາຢືນອ່ານ.<br>○ ການຈັດວາງພະພຸດທະຮູບຍັງບໍ່ທັນເປັນລະບຽບ, ຂາດການບົວລະບັດຮັກສາ. | ○ **ປະຫວັດຄວາມເປັນມາຂອງຖ້ຳຕິ່ງ**<br>ຖ້ຳຕິ່ງແບ່ງອອກເປັນສອງຖ້ຳຄື: ຖ້ຳເທິງ ແລະ ຖ້ຳລຸ່ມ, ມີພະພຸດທະຮູບໄມ້ສັກສິດຫລາຍກວ່າງ 4,000 ອົງ. ມີຮູບພາບຂອງຖ້ຳໃນສະໄໝກ່ອນ ແຕ້ມໂດຍ ທ່ານ ຝລັ່ງຊີ ກາກນີເອ ລະຫວ່າງປີ 1865 – 1867<br>○ **ການຫົດສົງພະທີ່ຖ້ຳຕິ່ງໄລຍະບຸນປີໃໝ່ລາວ**<br>ໃນສັດຕະວັດທີ 18 – 20 ເມື່ອຮອດປີໃໝ່ລາວຂອງທຸກໆປີ ເຈົ້າຊີວິດພ້ອມດ້ວຍບໍລິວານໄພ່ຟ້າລາຊະດອນ ໄດ້ພາກັນໄປຫົດສົງພະທີ່ຖ້ຳຕິ່ງແລະທ່ຽວຊົມທຳມະຊາດ |

101 https://goo.gl/maps/bQk7LjeR36acXooC7
102 https://goo.gl/maps/4ZNcSyBxkCyxf9cn8
103 https://www.tripadvisor.com/Attraction_Review-g303979-d325752-Reviews-Pak_Ou_Caves-Ban_Pak_Ou_Luang_Prabang_Province.html
104 https://tourismluangprabang.org/things-to-do/nature/pak-ou-cave-tham-ting

## 7) ໃຈຄວາມໃນການນຳສະເໜີ (Theme)

ໃຈຄວາມໃນການນຳສະເໜີ (Theme, ອ່ານວ່າ “ທີມ”) ແມ່ນໃຈຄວາມສຳຄັນ ຫລື ປະເດັນຫລັກໃນການນຳສະເໜີຂໍ້ມູນ ຫລື ເລື່ອງລາວຂອງສະຖານທີ່ທ່ອງທ່ຽວ (Central concept or key idea of any presentation[105]), ມັນແມ່ນສິ່ງທີ່ນັກທ່ອງທ່ຽວຈະຈົດຈຳພາຍຫລັງຢ້ຽມຢາມສະຖານທີ່ທ່ອງທ່ຽວ. ເຂົາເຈົ້າອາດຈະລືມວ່າວັດແຫ່ງນີ້ສ້າງຂຶ້ນໃນປີໃດ ແລະ ໃຜເປັນຜູ້ສ້າງ, ແຕ່ຈະຈົດຈຳຄວາມຫມາຍຄວາມສຳຄັນຂອງວັດທີ່ມີຕໍ່ວິຖີຊີວິດຂອງຄົນທ້ອງຖິ່ນ. ອີງໃສ່ຫລັກການໃນການນຳສະເໜີຂໍ້ມູນໃນບົດທີ 4 (Guiding Principle), ການກະຕຸ້ນຄວາມສົນໃຈຂອງນັກທ່ອງທ່ຽວ ແມ່ນຕ້ອງສ້າງໃຈຄວາມໃນການນຳສະເໜີ ຫລື ແກ່ນຂອງເລື່ອງລາວ (Theme) ທີ່ຫນ້າສົນໃຈ ແລະ ມີຄຸນຄ່າ.

| Main Theme | | |
|---|---|---|
| ນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ມີມໍລະດົກທາງດ້ານວັດທະນະທຳທີ່ມີຄຸນຄ່າ, ມີປະຫວັດຄວາມເປັນມາທີ່ຍາວນານ ແລະ ມີແຫລ່ງທ່ອງທ່ຽວທາງທຳມະຊາດທີ່ຕິດພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ | | |
| ວັດທະນະທຳ | ທຳມະຊາດ | ປະຫວັດສາດ |
| ນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ມີມໍລະດົກທາງດ້ານວັດທະນະທຳທີ່ມີຄຸນຄ່າ, ມີເອກະລັກ ແລະ ຕິດພັນກັບວິຖີຊີວິດຂອງຄົນທ້ອງຖິ່ນ | ນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ມີທຳມະຊາດທີ່ສວຍງາມ, ຕິດພັນກັບເລື່ອງລາວຂອງອາດີດເຈົ້າຊີວິດ ແລະ ວິຖີຊີວິດຂອງຄົນທ້ອງຖິ່ນ | ນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ມີປະຫວັດຄວາມເປັນມາທີ່ຍາວນານ ແລະ ມີຄຸນຄ່າ, ນັບຕັ້ງແຕ່ສະໄຫມອານາຈັກລາວລ້ານຊ້າງ ຈົນເຖິງສະໄຫມລ່າເມືອງຂຶ້ນຝລັ່ງ |
| > ວັດວາອາຮາມ<br>> ຮີດຄອງປະເພນີ<br>> ຫັດຖະກຳ / ສີໄມ້ລາຍມື<br>> ອາຫານທ້ອງຖິ່ນ<br>> ສິລະປະການຟ້ອນລຳ<br>> ຊິ້ນເຜື່າ<br>> ເຮືອນຊີງລາວ | > ທິວທັດທຳມະຊາດ<br>> ນໍ້າຕົກຕາດ<br>> ພູຜາ<br>> ປ່າໄມ້<br>> ແມ່ນໍ້າ<br>> ຖໍ້າ<br>> ສັດ | > ອາຄານແບບອານານິຄົມ<br>> ອາດີດເຈົ້າຊີວິດ<br>> ພະບາງ ແລະ ພະແກ້ວມໍລະກົດ<br>> ວັດຖຸບູຮານ<br>> ເສິກສົງຄາມ<br>> ໂຮງລະຄອນ |

ໃຈຄວາມໃນການນຳສະເໜີຂໍ້ມູນສະເພາະ (Specific interpretive theme) ແມ່ນໄດ້ກຳນົດສຳລັບແຕ່ລະສະຖານທີ່ທ່ອງທ່ຽວ ໃນບົດທີ 10: ແຜນນຳສະເໜີຂໍ້ມູນ, ເພື່ອເປັນທິດທາງໃຫ້ແກ່ການສ້າງເລື່ອງລາວ (Story) ຫລື ເນື້ອໃນໃນການນຳສະເໜີທີ່ຫນ້າສົນໃຈສຳລັບນັກທ່ອງທ່ຽວ.

[105] Interpretive Master Planning, Volume One: Strategies for the New Millennium, Page 63, John A Veverka, 2018

## 8) ແນວທາງການນຳສະເໜີຂໍ້ມູນ (Conceptual Approach)

| ສະຖານທີ່ | ແນວທາງການນຳສະເໜີ |
|---|---|
| ສະຖານທີ່ທ່ອງທ່ຽວ (Tourism sites) | ○ ສະຖານທີ່ທ່ອງທ່ຽວຢູ່ນະຄອນຫລວງພະບາງ, ເມືອງຈອມເພັດ ແລະ ເມືອງປາກອູ ແມ່ນໄດ້ກຳນົດໄວ້ໃນບົດທີ 6. ແນວທາງການນຳສະເໜີຂໍ້ມູນຢູ່ສະຖານທີ່ທ່ອງທ່ຽວ ແມ່ນມີອົງປະກອບດັ່ງນີ້:<br>○ ປ້າຍຊີ້ບອກຕາມເສັ້ນທາງ, ທັງຕາມທາງຫລວງ ແລະ ໃນຕົວເມືອງ<br>○ ປ້າຍປະຫວັດແຫລ່ງທ່ອງທ່ຽວ: ນຳສະເໜີເລື່ອງລາວ (Story) ທີ່ຫນ້າສົນໃຈ ແລະ ກຳນົດໃຈຄວາມໃນການນຳສະເໜີ (Theme) ທີ່ຊັດເຈນ, ຕັ້ງຢູ່ສະຖານທີ່ໆນັກທ່ອງທ່ຽວມາເປັນກຸ່ມສາມາດຢືນອ່ານໄດ້ໂດຍບໍ່ກີດຂວາງການສັນຈອນ. ການອອກແບບຈະຕ້ອງສອດຄ່ອງກັບສັນຍາລັກທີ່ເປັນເອກະລັກ (Brand) ຂອງການທ່ອງທ່ຽວຫລວງພະບາງ.<br>○ ປ້າຍແຜນທີ່ສະເພາະ: ໃຊ້ສຳລັບສະຖານທີ່ໆມີເນື້ອໃນທີ່ກວ້າງຂວາງ ແລະ ມີຫລາຍສິ່ງໃຫ້ເບິ່ງຊົມເຊັ່ນ: ພະທາດພູສີ, ຫໍພິພິທະພັນແຫ່ງຊາດຫລວງພະບາງ ແລະ ວັດຊຽງທອງ.<br>○ ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວ: ຊີ້ບອກເສັ້ນທາງ ແລະ ສິ່ງອຳນວຍຄວາມສະດວກພາຍໃນສະຖານທີ່ທ່ອງທ່ຽວ.<br>○ ສື່ດິຈິຕອນ: ແຜນທີ່ອອນລາຍ, ເວັບໄຊ ແລະ ແອບມືຖືທ່ອງທ່ຽວ<br>○ ສື່ສິ່ງພິມ: ຜະລິດແຜ່ນພັບ ແລະ ແຜນທີ່ທ່ອງທ່ຽວ<br>○ ການນຳທ່ຽວ: ພະນັກງານນຳທ່ຽວ ແລະ ເຄື່ອງອະທິບາຍສຽງ (Audio Guide) ທີ່ນັກທ່ອງທ່ຽວສາມາດຮັບຟັງການນຳສະເໜີຂໍ້ມູນດ້ວຍຕົນເອງຜ່ານມືຖື. |
| ບ້ານ / ເກາະດອນ (Villages / Islands) | ○ ບ້ານ ແລະ ເກາະດອນແມ່ນມີປະຫວັດຄວາມເປັນມາ, ເລື່ອງລາວ, ວັດທະນະທຳ ແລະ ຮີດຄອງປະເພນີທີ່ມີຄຸນຄ່າ ແລະ ຫນ້າສົນໃຈໃນການນຳສະເໜີໃຫ້ແກ່ນັກທ່ອງທ່ຽວ. ແຕ່ການນຳສະເໜີດັ່ງກ່າວ ຈະຕ້ອງສອດຄ່ອງກັບການນຳສະເໜີຂໍ້ມູນຢູ່ສະຖານທີ່ທ່ອງທ່ຽວ, ເພື່ອເຮັດໃຫ້ນັກທ່ອງທ່ຽວສາມາດເຊື່ອມໂຍງເລື່ອງລາວ ແລະ ປະສົບການທ່ອງທ່ຽວຂອງເຂົາເຈົ້າ.<br>○ ບ້ານທີ່ໄດ້ກຳນົດຢູ່ໃນແຜນຍຸດທະສາດການນຳສະເໜີຂໍ້ມູນສະບັບນີ້ ແມ່ນປະກອບມີ: ບ້ານຊຽງແມນ ແລະ ບ້ານຈ່ານເຫນືອ ເມືອງຈອມເພັດ. ບ້ານຊ່າງໄຫ ແລະ ບ້ານປາກອູ ເມືອງປາກອູ.<br>○ ອົງປະກອບຂອງການນຳສະເໜີຂໍ້ມູນຢູ່ບ້ານແມ່ນປະກອບມີ: ປ້າຍຊື່ບ້ານ, ປ້າຍປະຫວັດແຫລ່ງທ່ອງທ່ຽວທີ່ອະທິບາຍກ່ຽວກັບປະຫວັດຄວາມເປັນມາຂອງບ້ານ, ວິຖີຊີວິດຂອງປະຊາຊົນ, ຊົນເຜົ່າ, ການທຳການຜະລິດກະສິກຳ ແລະ ຫັດຖະກຳ. |

| | |
|---|---|
| ເສັ້ນທາງທ່ອງທ່ຽວ (Routes) | ○ ເສັ້ນທາງທ່ອງທ່ຽວ (Route) ແມ່ນເສັ້ນທາງທຽວຂອງພາຫະນະ ແລະ ທາງຍ່າງເຂົ້າເຖິງສະຖານທີ່ທ່ອງທ່ຽວພາຍໃນນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ, ນັບທັງເສັ້ນທາງພາຍໃນເມືອງມໍລະດົກໂລກຫລວງພະບາງ, ເສັ້ນທາງເມືອງຈອມເພັດ ແລະ ເມືອງປາກອູ.<br>○ ສິ່ງສຳຄັນແມ່ນປ້າຍຊີ້ບອກເສັ້ນທາງ ໂດຍຈຳແນກໃຫ້ເຫັນຄວາມແຕກຕ່າງຂອງແຕ່ລະໃຈຄວາມໃນການນຳສະເໜີ (Theme) ເພື່ອເຮັດໃຫ້ນັກທ່ອງທ່ຽວສາມາດເດີນທາງຕາມເສັ້ນທາງທີ່ເຂົາເຈົ້າສົນໃຈ ແລະ ສາມາດເຊື່ອມໂຍງບັນດາເລື່ອງລາວ ແລະ ປະສົບການຈາກແຕ່ລະສະຖານທີ່ທ່ອງທ່ຽວເຂົ້າກັນເປັນເລື່ອງລາວອັນດຽວກັນ.<br>○ ລາຍລະອຽດຂອງປ້າຍຊີ້ບອກຕາມເສັ້ນທາງ ແມ່ນໄດ້ອະທິບາຍໄວ້ໃນບົດທີ 10. |
| ປະຕູສູ່ຈຸດໝາຍປາຍທາງການທ່ອງທ່ຽວ (Gateways into the destination) | ○ ປະຕູສູ່ຈຸດໝາຍປາຍທາງການທ່ອງທ່ຽວ (Gateway) ແມ່ນທາງເຂົ້າສູ່ນະຄອນຫລວງພະບາງເຊັ່ນ: ສະໜາມບິນສາກົນຫລວງພະບາງ, ຄິວລົດໂດຍສານ ແລະ ທ່າເຮືອ. ສູນຂໍ້ມູນຂ່າວສານການທ່ອງທ່ຽວກໍ່ຖືເປັນ Gateway ອີກບ່ອນໜຶ່ງ, ເພາະບາງຄັ້ງກໍ່ເປັນສະຖານທີ່ທຳອິດທີ່ນັກທ່ອງທ່ຽວສາມາດຊອກຫາຂໍ້ມູນຂ່າວສານການທ່ອງທ່ຽວ.<br>○ ສິ່ງທີ່ຄວນນຳສະເໜີຢູ່ Gateways ເຫລົ່ານີ້ແມ່ນຂໍ້ມູນການທ່ອງທ່ຽວທີ່ມີລັກສະນະພາບລວມ, ແຕ່ບໍ່ໄດ້ລົງເລິກລາຍລະອຽດສະຖານທີ່ໃດໜຶ່ງ ເນື່ອງຈາກເປັນບ່ອນທີ່ນັກທ່ອງທ່ຽວມີເວລາຈຳກັດ. ປະເພດຂໍ້ມູນແມ່ນປະກອບມີສະຖານທີ່ທ່ອງທ່ຽວທີ່ໂດດເດັ່ນຂອງນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ທີ່ນຳສະເໜີໃນຮູບແບບເສັ້ນທາງ ຫລື ວົງຈອນການທ່ອງທ່ຽວ ອີງຕາມໃຈຄວາມໃນການນຳສະເໜີຂໍ້ມູນ (Theme) ທີ່ໄດ້ກຳນົດໄວ້. |

## 9) ວິທີການນຳສະເໜີຂໍ້ມູນ (Interpretive Design Approach)

### 9.1) ເງື່ອນໄຂໃນການອອກແບບ (Design Criteria)

**ພາສາ:** ການນຳສະເໜີຂໍ້ມູນໂດຍສະເພາະໃນຮູບແບບປ້າຍ ແມ່ນຈະຕ້ອງມີທັງພາສາລາວ ແລະ ພາສາອັງກິດ, ແຕ່ຖືເອົາພາສາລາວເປັນຫລັກ. ກົດໝາຍວ່າດ້ວຍປ້າຍໄດ້ລະບຸໄວ້ວ່າ: "ປ້າຍທີ່ຂຽນຫລືພິມພາສາລາວ ແລະ ຕ່າງປະເທດ ແມ່ນໃຫ້ໃສ່ພາສາລາວຢູ່ເທິງ, ພາສາຕ່າງປະເທດຢູ່ລຸ່ມຫລືພາສາລາວຢູ່ເບື້ອງຂວາ ແລະ ພາສາຕ່າງປະເທດຢູ່ເບື້ອງຊ້າຍຂອງປ້າຍ. ຂະໜາດຕົວໜັງສືຕ່າງປະເທດບໍ່ໃຫ້ໃຫຍ່ເກີນສອງສ່ວນສາມຂອງຕົວໜັງສືລາວ"[106]. ສຳລັບພາສາຕ່າງປະເທດອື່ນໆແມ່ນຈະນຳໃຊ້ເຂົ້າໃນສື່ດິຈິຕອນ (Digital media) ແລະ ສື່ສິ່ງພິມ.

**ສີພື້ນ ແລະ ສີຕົວໜັງສືຂອງປ້າຍ:** ສີພື້ນຂອງປ້າຍຕ້ອງເປັນສີນ້ຳຕານ (ສີເຄືອບເງົາກາແລນ - CORAL RED G163), ສ່ວນຕົວໜັງສືທັງພາສາລາວ ແລະ ພາສາອັງກິດແມ່ນຕ້ອງເປັນສີຂາວ[107].

**ວັດສະດຸຂອງປ້າຍ:** ທົນທານຕໍ່ສະພາບອາກາດ ແລະ ການກັດກິນຂອງແມງໄມ້. ພາຍໃນເຂດເມືອງມໍລະດົກ, ຖ້າຈຳເປັນຕ້ອງນຳໃຊ້ເສົາໄມ້ສຳລັບປ້າຍປະຫວັດແຫລ່ງທ່ອງທ່ຽວ, ໃຫ້ຄຳນຶງເຖິງການເທພື້ນດ້ວຍຊີມັງຢູ່ພື້ນເສົາ ຫລື ສ້າງຖານດ້ວຍເຫລັກ ເພື່ອປ້ອງກັນການເປ່ເພຈາກສະພາບແວດລ້ອມ ແລະ ແມງໄມ້.

**ຮູບພາບ:** ຕ້ອງສອດຄ່ອງກັບເນື້ອໃນ ແລະ ມີຄວາມລະອຽດສູງ. ກໍລະນີນຳໃຊ້ຮູບເກົ່າ ຫລື ຮູບແຕ້ມ, ແມ່ນຈະຕ້ອງລະບຸທີ່ມາຂອງຮູບພາບ.

### 9.2) ສັນຍາລັກທີ່ເປັນເອກະລັກຂອງການທ່ອງທ່ຽວ (Brand Identity)

ການອອກແບບຈະຕ້ອງສອດຄ່ອງກັບສັນຍາລັກທີ່ເປັນເອກະລັກ (Brand) ຂອງການທ່ອງທ່ຽວຫລວງພະບາງ "Luang Prabang Timeless" ທີ່ແປວ່າ ຫລວງພະບາງຄວາມປະທັບໃຈທີ່ບໍ່ມີວັນສິ້ນສຸດ. ສັນຍາລັກ (Logo) ຂອງການທ່ອງທ່ຽວຫລວງພະບາງ ຈະຕ້ອງບັນຈຸຢູ່ໃນທຸກປ້າຍຊີ້ບອກເສັ້ນທາງ, ປ້າຍປະຫວັດແຫລ່ງທ່ອງທ່ຽວ, ສື່ສິ່ງພິມ ແລະ ສື່ອອນລາຍ. ນອກຈາກນັ້ນ, ຈະຕ້ອງສ້າງປຶ້ມຄູ່ມືແນະນຳການນຳໃຊ້ສັນຍາລັກທີ່ເປັນເອກະລັກຂອງການທ່ອງທ່ຽວຫລວງພະບາງ (Brand Guideline) ເຊິ່ງປະກອບມີການນຳໃຊ້ໂລໂກ້ໃນຫລາກຫລາຍຮູບແບບ (ພື້ນສີຕ່າງກັນ, ສີ ແລະ ຂາວດຳ), ການນຳໃຊ້ຮູບພາບ ແລະ ຄຳສັບທີ່ສະທ້ອນເຖິງຄວາມເປັນເອກະລັກຂອງການທ່ອງທ່ຽວຫລວງພະບາງ.

---

106 ກົດໝາຍວ່າດ້ວຍປ້າຍ, ໜ້າທີ 4, ສະພາແຫ່ງຊາດ, 2018

107 ປຶ້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເໜີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ໜ້າທີ 5, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

LUANG PRABANG

TIMELESS

## 9.3) ປ້າຍຊີ້ບອກ (Signage / Wayfinding)

ປ້າຍຊີ້ບອກ ຫມາຍເຖິງປ້າຍທີ່ຕິດຕັ້ງຢູ່ຕາມເສັ້ນທາງເພື່ອສະແດງໃຫ້ຮູ້ທິດທາງ ແລະ ໄລຍະທາງຂອງຈຸດຫມາຍປາຍທາງການທ່ອງທ່ຽວ[108]. ມັນຊ່ວຍໃນການຫລຸດຜ່ອນອຸບັດຕິເຫດຕາມເສັ້ນທາງດ້ວຍການຕິດຕັ້ງປ້າຍຊີ້ບອກລ່ວງຫນ້າ (Advance warning sign) ເຮັດໃຫ້ນັກທ່ອງທ່ຽວ ຫລື ຜູ້ຂັບຂີ່ພາຫະນະຫລຸດຜ່ອນຄວາມໄວ ເພື່ອກະກຽມປ່ຽນທິດທາງການສັນຈອນຕາມລູກສອນຂອງປ້າຍ. ນອກຈາກນັ້ນ, ປ້າຍຊີ້ບອກຍັງມີປະໂຫຍດໃນການຊັກນຳໃຫ້ນັກທ່ອງທ່ຽວເດີນທາງໄປຕາມເສັ້ນທາງ ຫລື ລາຍການທ່ອງທ່ຽວທີ່ກຳນົດໄວ້ໂດຍອີງໃສ່ເລື່ອງລາວ (Story) ແລະ ໃຈຄວາມໃນການນຳສະເຫນີຂໍ້ມູນ (Theme) ແລະ ຍັງເປັນເຄື່ອງມືໃນການກະຈາຍຄວາມຫນາແຫນ້ນຂອງນັກທ່ອງທ່ຽວໄປອີກຈຸດຫມາຍປາຍທາງການທ່ອງທ່ຽວຫນຶ່ງ.

[108] ປື້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເຫນີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2019

### 9.3.1) ປ້າຍຊີ້ບອກຕາມທາງຫລວງ

ແມ່ນປ້າຍທີ່ຕິດຕັ້ງຢູ່ຕາມເສັ້ນທາງຕ່າງໆນອກເຂດຕົວເມືອງ ຫລື ເຂດຊຸມຊົນທີ່ມີການໃຊ້ຄວາມໄວສູງໃນການສັນຈອນ

| ລຳດັບ | ປ້າຍຊີ້ບອກ | ຈຸດພິເສດ | ນ້ອຍ | ກາງ | ໃຫຍ່ |
|---|---|---|---|---|---|
| 1 | ປ້າຍແນວຕັ້ງ (On Ground)<br> | ຕິດຕັ້ງຢູ່ຂ້າງທາງ, ມີຄວາມສູງບໍ່ກາຍ 5 m | ○ ພື້ນທີ່ຕິດຕັ້ງຈຳກັດ<br>○ ຄວາມໄວລົດ: ບໍ່ກາຍ 60 Km/h<br>○ ຂະໜາດປ້າຍ: 0.6 x 1.2 m<br>○ ຂໍ້ຄວາມຫລັກນ້ອຍສູງ: 15 cm<br>○ ຂໍ້ຄວາມສຳຮອງນ້ອຍສຸດ: 10 cm<br>○ ຕົວເລກ ແລະ ລູກສອນບອກທິດທາງນ້ອຍສຸດ: 10 cm | ○ ມີພື້ນທີ່ໃນການຕິດຕັ້ງພໍສົມຄວນ<br>○ ຄວາມໄວລົດ: 50 - 70 Km/h<br>○ ຂະໜາດປ້າຍ: 0.8 x 2 m<br>○ ຂໍ້ຄວາມຫລັກນ້ອຍສູງ: 20 cm<br>○ ຂໍ້ຄວາມສຳຮອງນ້ອຍສຸດ: 15 cm<br>○ ຕົວເລກ ແລະ ລູກສອນບອກທິດທາງນ້ອຍສຸດ: 15 cm | ○ ມີພື້ນທີ່ໃນການຕິດຕັ້ງຫລາຍ<br>○ ຄວາມໄວລົດ: ກາຍ 70 Km/h<br>○ ຂະໜາດປ້າຍ: 1.2 x 2.5 m<br>○ ຂໍ້ຄວາມຫລັກນ້ອຍສູງ: 20 cm<br>○ ຂໍ້ຄວາມສຳຮອງນ້ອຍສຸດ: 15 cm<br>○ ຕົວເລກ ແລະ ລູກສອນບອກທິດທາງນ້ອຍສຸດ: 15 cm |
| 2 | ປ້າຍແນວແຂວນ (Overhang)<br> | ສາມາດແນມເຫັນໄດ້ໃນໄລຍະໄກ ກວ່າປ້າຍແນວຕັ້ງ | ○ ຂະໜາດປ້າຍ: 1.2 x 0.6 m<br>○ ຕົວໜັງສື: ນ້ອຍສຸດ 20 cm | ○ ບໍ່ໄດ້ກຳນົດ | ○ ຂະໜາດປ້າຍ: 2.5 x 2 m<br>○ ຕົວໜັງສື: ນ້ອຍສຸດ 20 cm |
| 3 | ປ້າຍແນວຂ້າມທາງ (Gantry)<br> | ສາມາດແນມເຫັນໄດ້ໃນໄລຍະໄກ, ສາມາດນຳໃຊ້ຮູບພາບປະກອບ | ○ ຂະໜາດປ້າຍ: 8 x 1.5 m | ○ ບໍ່ໄດ້ກຳນົດ | ○ ຂະໜາດປ້າຍ: 25 x 3 m |

### 9.3.2) ປ້າຍຊີ້ບອກແຫລ່ງທ່ອງທ່ຽວໃນຕົວເມືອງ



ແມ່ນປ້າຍທີ່ຕິດຕັ້ງຢູ່ຕາມເສັ້ນທາງຍ່າງ ແລະ ທາງແຍກໃນຕົວເມືອງ ເພື່ອຊີ້ບອກສະຖານທີ່ ແລະ ຊື່ຖະໜົນຕ່າງໆ. ການສັນຈອນພາຍໃນຕົວເມືອງແມ່ນມີຄວາມໄວຈຳກັດ, ສະນັ້ນ ປ້າຍຊີ້ບອກຕ່າງໆຈຶ່ງບໍ່ຈຳເປັນຕ້ອງມີຂະໜາດໃຫຍ່ເພື່ອໃຫ້ເຫັນໄດ້ໄກ ແຕ່ຈະເນັ້ນຄວາມສູງທີ່ພໍດີ, ເໝາະກັບສາຍຕາ ແລະຄວາມປອດໄພຂອງຜູ້ສັນຈອນໄປມາ. ຄວາມສູງຈາກພື້ນຢ່າງໜ້ອຍ 2 m ເພື່ອບໍ່ໃຫ້ບົດບັງສາຍຕາ ແລະ ກີດຂວາງການສັນຈອນ. ຂະໜາດຂອງປ້າຍ: ນ້ອຍສຸດ 50 x 15 cm, ໃຫຍ່ສຸດ 70 x 40 cm, ຂະໜາດຕົວໜັງສືນ້ອຍສຸດ 5 cm.

### 9.3.3) ປ້າຍຊີ້ບອກພາຍໃນສະຖານທີ່ທ່ອງທ່ຽວ




ແມ່ນປ້າຍທີ່ແນະນຳສະຖານທີ່ຕ່າງໆພາຍໃນແຫລ່ງທ່ອງທ່ຽວ ເຊັ່ນ: ຫ້ອງນ້ຳສາທາລະນະ, ບ່ອນຫລິ້ນນ້ຳ, ບ່ອນປ່ຽນເຄື່ອງ, ຮ້ານອາຫານ, ສາລາພັກຜ່ອນ ແລະ ອື່ນໆ ເພື່ອແນະນຳທິດທາງໃນການໄປເຖິງຈຸດຕ່າງໆເຫລົ່ານັ້ນ. ໂດຍທົ່ວໄປປ້າຍຊີ້ບອກຄວນຈະຕິດຕັ້ງຢູ່ບໍລິເວນທາງແຍກ ຫລື ຈຸດເສັ້ນທາງທີ່ຕ້ອງຜ່ານ. ຄວາມສູງຈາກພື້ນຢ່າງໜ້ອຍ 1 m ເພື່ອໃຫ້ຢູ່ໃນລະດັບສາຍຕາ, ຄວນນຳໃຊ້ສັນຍາລັກປະກອບກັບຕົວໜັງສື.

ລາຍລະອຽດຂອງຈຸດຕິດຕັ້ງປ້າຍຊີ້ບອກຕາມເສັ້ນທາງຂອງນະຄອນຫລວງພະບາງ ແລະ ບໍລິເວນອ້ອມຮອບ ແມ່ນໄດ້ກຳນົດໃນບົດທີ 10 ຂໍ້ທີ 10.2: ປ້າຍຊີ້ບອກຕາມເສັ້ນທາງ.

ທີ່ມາຂອງລາຍລະອຽດປ້າຍຊີ້ບອກທັງສາມປະເພດ: ປຶ້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເໜີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2019.

## 9.4) ປ້າຍປະຫວັດແຫລ່ງທ່ອງທ່ຽວ (Interpretation Board)

ປ້າຍປະຫວັດແຫລ່ງທ່ອງທ່ຽວ ຫມາຍເຖິງປ້າຍທີ່ສະແດງຂໍ້ມູນກ່ຽວກັບປະຫວັດຄວາມເປັນມາ ແລະ ເລື່ອງລາວທີ່ຫນ້າສົນໃຈຂອງສະຖານທີ່ທ່ອງທ່ຽວ. ເນື້ອໃນຂອງປ້າຍແມ່ນປະກອບມີ: ຮູບພາບ, ຕົວຫນັງສື ແລະ ແຜນທີ່ສະເພາະຂອງສະຖານທີ່ທ່ອງທ່ຽວ. ປະຫວັດຄວາມເປັນມາ ແລະ ເລື່ອງລາວ ຈະຕ້ອງມີໃຈຄວາມໃນການນຳສະເຫນີ (Theme) ທີ່ຊັດເຈນ ເພື່ອດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວ ແລະ ເຮັດໃຫ້ສາມາດເຂົ້າໃຈເລື່ອງລາວໄດ້ໃນເວລາທີ່ຈຳກັດ. ປ້າຍປະຫວັດແຫລ່ງທ່ອງທ່ຽວສາມາດນຳສະເຫນີດ້ວຍ 2 ຮູບແບບດັ່ງລຸ່ມນີ້:

### 9.4.1) ປ້າຍແຜນທີ່ ແລະ ຂໍ້ມູນ

ປ້າຍແຜນທີ່ ແລະ ຂໍ້ມູນ ແມ່ນປ້າຍທີ່ສະແດງແຜນຜັງໂດຍລວມຂອງສະຖານທີ່ທ່ອງທ່ຽວ ເພື່ອສະແດງໃຫ້ຮູ້ທີ່ຕັ້ງ ແລະ ເສັ້ນທາງເຂົ້າເຖິງແຫລ່ງທ່ອງທ່ຽວ ແລະ ຍັງສາມາດແນະນຳເສັ້ນທາງວົງຈອນ ແລະ ຂໍ້ກຳນົດລະບຽບການຂອງສະຖານທີ່ທ່ອງທ່ຽວ.

### 9.4.2) ປ້າຍກະດານຂໍ້ມູນ

ປ້າຍກະດານຂໍ້ມູນ ແມ່ນກະດານທີ່ສະແດງຂໍ້ມູນຕ່າງໆເຊັ່ນ: ປະຫວັດຄວາມເປັນມາ, ລັກສະນະພິເສດ, ຄວາມໂດດເດັ່ນ ແລະ ສິ່ງຕ່າງໆທີ່ຫນ້າສົນໃຈໃນສະຖານທີ່ທ່ອງທ່ຽວ.

### 9.4.3) ການອອກແບບ

**ອັດຕາສ່ວນເນື້ອໃນ ແລະ ຮູບພາບ:** ຖ້າແບ່ງປ້າຍນຳສະເຫນີຂໍ້ມູນອອກເປັນ 3 ສ່ວນ, ສ່ວນທີ່ຫນຶ່ງຕ້ອງປະກອບມີຮູບພາບ ຫລື ແຜນວາດ (Graphics), ສ່ວນທີ 2 ແມ່ນເນື້ອໃນ (Text) ແລະ ສ່ວນທີ 3 ແມ່ນພື້ນທີ່ຫວ່າງ (Blank space)[109]. ການຂຽນເນື້ອໃນແມ່ນນຳໃຊ້ຫລັກການ “3–30–3”. ຫມາຍຄວາມວ່າເຮົາມີເວລາ 3 ວິນາທີທຳອິດໃນການດຶງຄວາມສົນໃຈ (Hook) ນັກທ່ອງທ່ຽວໃຫ້ອ່ານ, ຖ້າເຂົາສົນໃຈອ່ານ ເຮົາກໍ່ຈະມີເວລາອີກ 30 ວິນາທີ ໃນການອະທິບາຍໃຈຄວາມຂອງເລື່ອງລາວ (Primary themes and story lines) ແລະ ມີເວລາອີກ 3 ນາທີ ຖ້າເຂົາເຈົ້າມີຄວາມສົນໃຈແທ້ໆ[110]. ເນື່ອງຈາກນັກທ່ອງທ່ຽວມີເວລາທີ່ຈຳກັດ, ເນື້ອໃນຈະຕ້ອງເນັ້ນໃສ່ເລື່ອງລາວ ແລະ ປະຫວັດຄວາມເປັນມາຂອງສະຖານທີ່ທ່ອງທ່ຽວ ອີງຕາມໃຈຄວາມໃນການນຳສະເຫນີ (Theme) ທີ່ສາມາດເຊື່ອມໂຍງກັບສະຖານທີ່ທ່ອງທ່ຽວອື່ນ. ສາມາດບັນຈຸ QR Code ເພື່ອໃຫ້ນັກທ່ອງທ່ຽວນຳໃຊ້ໂທລະສັບມືຖືສະແກນ ແລະ ອ່ານຂໍ້ມູນເພີ່ມເຕີມໄດ້.

**ຂະຫນາດຂອງຕົວຫນັງສື:** ທຸກຕົວຫນັງສືຢູ່ໃນປ້າຍປະຫວັດແຫລ່ງທ່ອງທ່ຽວ ຈະຕ້ອງສາມາດອ່ານໄດ້ຈາກໄລຍະຫ່າງ 3 m ຫລື ໃກ້ກວ່ານັ້ນ, ບໍ່ຄວນມີຫລາຍກວ່າ 4 ຂະຫນາດຢູ່ໃນປ້າຍດຽວ ເພື່ອບໍ່ໃຫ້ຜູ້ອ່ານສັບສົນ. ຂະຫນາດໂຕຫນັງສືຕ່າງກັນແມ່ນສາມາດນຳໃຊ້ກັບໂຕຫນັງສືດັ່ງນີ້: ຫົວຂໍ້ໃຫຍ່, ຫົວຂໍ້ນ້ອຍ, ເນື້ອໃນ ແລະ ຄຳບັນຍາຍຮູບພາບ[111].

---

[109] Interpretive Media Design Guidelines, Center for Design and Interpretation, Colorado, USA
[110] Interpretive Media Design Guidelines, Center for Design and Interpretation, Colorado, USA
[111] Outdoor Interpretive Signage, Nova Scotia, Canada, Page 31

**ຈຳນວນຕົວຫນັງສື:** ບໍ່ທັນມີການກຳນົດກ່ຽວກັບຈຳນວນຕົວຫນັງສືທີ່ຄວນບັນຈຸຢູ່ໃນປ້າຍປະຫວັດແຫລ່ງທ່ອງທ່ຽວຈາກອົງການໃດໆ, ນັບທັງອົງການທ່ອງທ່ຽວໂລກ. ເຖິງຢ່າງໃດກໍ່ຕາມ, ຫລາຍພາກສ່ວນກໍ່ມີຄຳແນະນຳໃນລວງດຽວກັນວ່າ ບໍ່ຄວນບັນຈຸຕົວຫນັງສືຈຳນວນຫລາຍເກີນໄປ ເນື່ອງຈາກນັກທ່ອງທ່ຽວບໍ່ຄ່ອຍມີເວລາອ່ານ. ອີກຢ່າງຫນຶ່ງ, ຄວນນຳໃຊ້ສື່ອື່ນໆມາປະກອບທີ່ເຮັດໃຫ້ນັກທ່ອງທ່ຽວສາມາດສຳນຶກພາບໄດ້ໃນເວລາທີ່ຈຳກັດເຊັ່ນ: ຮູບພາບ, ຮູບແຕ້ມ, ແຜນວາດ ແລະ ອື່ນໆ. ບໍລິສັດອອກແບບການນຳສະເຫນີຂໍ້ມູນຢູ່ປະເທດອົດສະຕາລີ (The Interpretive Design Company[112]) ໄດ້ໃຫ້ຄຳແນະນຳກ່ຽວກັບ ຈຳນວນຕົວຫນັງສືໃນປ້າຍປະຫວັດແຫລ່ງທ່ອງທ່ຽວດັ່ງນີ້:

- ປະມານ 150 ຄຳ ສຳລັບປ້າຍຂະຫນາດໃຫຍ່ກວ່າ 0.5 $m^2$
- ປະມານ 250 ຄຳ ສຳລັບປ້າຍຂະຫນາດໃຫຍ່ກວ່າ 1 $m^2$
- ປະມານ 450 ຄຳ ສຳລັບປ້າຍຂະຫນາດໃຫຍ່ກວ່າ 2 $m^2$

**ທີ່ຕັ້ງ:** ຕັ້ງຢູ່ບ່ອນທີ່ບໍ່ກີດຂວາງທາງຍ່າງ, ໃນບໍລິເວນກວ້າງຂວາງ ເພື່ອເຮັດໃຫ້ນັກທ່ອງທ່ຽວທີ່ມາເປັນກຸ່ມຢືນອ່ານ ຫລື ຟັງການບັນຍາຍຂອງພະນັກງານນຳທ່ຽວ, ເປັນຈຸດທີ່ຮົ່ມດີ ແລະ ບໍ່ບົດບັງທັດສະນີຍະພາບ.

## 9.5) ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ

ປ້າຍໂຄສະນາສະຖານທີ່ທ່ອງທ່ຽວ ຫມາຍເຖິງປ້າຍທີ່ອອກແບບມາເພື່ອດຶງດູດຜູ້ຄົນເພື່ອໃຫ້ມີຄວາມສົນໃຈໃນແຫລ່ງທ່ອງທ່ຽວໃດຫນຶ່ງ ຫລື ຫລາຍບ່ອນໃນປ້າຍດຽວ, ໂດຍອາດຈະມີການສະແດງຮູບພາບທິວທັດຂອງສະຖານທີ່ ຫລື ກິດຈະກຳຕ່າງໆໃນສະຖານທີ່ນັ້ນ ພ້ອມກັບຄຳບັນຍາຍຕ່າງໆເພື່ອສ້າງຄວາມສົນໃຈ[113]. ປ້າຍໂຄສະນາສະຖານທີ່ທ່ອງທ່ຽວປະກອບມີ 2 ປະເພດຄື: ປ້າຍໂຄສະນາສະຖານທີ່ທ່ອງທ່ຽວໃນຕົວເມືອງ ແລະ ປ້າຍໂຄສະນາສະຖານທີ່ທ່ອງທ່ຽວຕາມທາງຫລວງ. ຄວາມແຕກຕ່າງກັບປ້າຍປະຫວັດແຫລ່ງທ່ອງທ່ຽວແມ່ນ ປ້າຍໂຄສະນາຈະເນັ້ນຮູບພາບຂະຫນາດໃຫຍ່, ໃນຂະນະທີ່ປ້າຍປະຫວັດແຫລ່ງທ່ອງທ່ຽວແມ່ນເນັ້ນຫນັກການອະທິບາຍຂໍ້ມູນທີ່ເລິກເຊິ່ງ. ປ້າຍໂຄສະນາປະກອບມີຫລາຍຮູບແບບຄື: ໂປສເຕີ້ (Poster), ແບນເນີ້ (Banner), ບິວບອດ (Billboard) ແລະ ແພໂນ (Panel).

## 9.6) ສື່ສິ່ງພິມ (Printed Materials)

ສື່ສິ່ງພິມແມ່ນປະກອບມີ ແຜນທີ່, ແຜ່ນພັບ ແລະ ປຶ້ມນຳທ່ຽວ. ເຫມາະສຳລັບກຸ່ມນັກທ່ອງທ່ຽວທີ່ຍັງມີຄວາມຫຍຸ້ງຍາກໃນການເຂົ້າເຖິງເຕັກໂນໂລຊີ, ແຕ່ບໍ່ຄວນຜະລິດຫລາຍເນື່ອງຈາກມີຕົ້ນທຶນສູງ, ການປັບປຸງເນື້ອໃນກໍ່ໃຊ້ເວລາ ແລະ ຫຍຸ້ງຍາກໃນການພົກພາ.

---

112 https://interpretivedesign.com.au/blog/signage-content-tips-information
113 ປຶ້ມຄູ່ມືແນະນຳປ້າຍຊີ້ບອກແຫລ່ງທ່ອງທ່ຽວ ແລະ ປ້າຍນຳສະເຫນີຂໍ້ມູນແຫລ່ງທ່ອງທ່ຽວໃນ ສປປ ລາວ, ຫນ້າທີ 3, ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2019

## 9.7) ການນຳທ່ຽວ (Tour Guiding)

ເລື່ອງລາວ (Story) ແລະ ໃຈຄວາມໃນການນຳສະເຫນີ (Theme) ທີ່ໄດ້ກຳນົດຢູ່ໃນແຜນຍຸດທະສາດການນຳສະເຫນີຂໍ້ມູນການທ່ອງທ່ຽວສະບັບນີ້, ຈະຕ້ອງຖືກບັນຈຸເຂົ້າໃນຫລັກສູດ ຫລື ເອກະສານຝຶກອົບຮົມພະນັກງານນຳທ່ຽວທັງໃນລະດັບຊາດ, ລະດັບແຂວງ, ພະນັກງານນຳທ່ຽວມໍລະດົກ, ພື້ນທີ່ ແລະ ທ້ອງຖິ່ນ ເພື່ອເຮັດໃຫ້ການນຳສະເຫນີຂໍ້ມູນໃນຫລາກຫລາຍຊ່ອງທາງມີຄວາມເປັນເອກະພາບກັນ. ນອກຈາກນັ້ນ, ບັນດາຫລັກການໃນການນຳສະເຫນີຂໍ້ມູນທີ່ໄດ້ກຳນົດໃນບົດທີ 4 ຍັງມີປະໂຫຍດສຳລັບພະນັກງານນຳທ່ຽວເຊັ່ນ: ການກະຕຸ້ນຄວາມຢາກຮູ້ຢາກເຫັນຂອງນັກທ່ອງທ່ຽວ ໃນການຊອກຫາຄຳຕອບຂອງເລື່ອງລາວ ແທນການອະທິບາຍຂໍ້ມູນແຕ່ພຽງຝ່າຍດຽວ.

## 9.8) ສື່ດິຈິຕອນ (Digital Media)

**ແຜນທີ່ອອນລາຍ Google Maps:** ນັກທ່ອງທ່ຽວສາມາດເຂົ້າເຖິງຂໍ້ມູນເບື້ອງຕົ້ນຂອງສະຖານທີ່ທ່ອງທ່ຽວເຊັ່ນ: ທີ່ຕັ້ງ, ຮູບພາບ, ຄຳຄິດເຫັນຂອງນັກທ່ອງທ່ຽວ, ວັນເວລາເປີດປິດ, ເບີໂທລະສັບ, ເວັບໄຊ ແລະ ອື່ນໆ. ແຜນທີ່ນີ້ສາມາດເບິ່ງໄດ້ທັງໃນຮູບແບບເວັບໄຊ ແລະ ແອບມືຖື. ຄວນນຳໃຊ້ຄຽງຄູ່ກັນກັບປ້າຍຊີ້ບອກຕາມເສັ້ນທາງ, ເພື່ອຫລຸດຜ່ອນຈຳນວນການຕິດຕັ້ງປ້າຍຊີ້ບອກຢູ່ຫລາຍບ່ອນ. ພະແນກ ຖວທ ແຂວງສາມາດສະແດງຄວາມເປັນເຈົ້າຂອງ (Claim this businesses) ບັນດາສະຖານທີ່ທ່ອງທ່ຽວທີ່ຄຸ້ມຄອງ ແລະ ມີຢູ່ໃນ Google Maps ເພື່ອໃຫ້ສາມາດປັບປຸງຂໍ້ມູນໄດ້ຫລາກຫລາຍ ແລະ ມີຄວາມຄົບຖ້ວນ. ເນື່ອງຈາກນັກທ່ອງທ່ຽວຈີນບໍ່ສາມາດນຳໃຊ້ແຜນທີ່ Google Maps ໄດ້, ຈຸດຫມາຍປາຍທາງການທ່ອງທ່ຽວຈຳເປັນຕ້ອງໄດ້ສຶກສາ ແລະ ນຳໃຊ້ Baidu Maps ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຂໍ້ມູນທ່ອງທ່ຽວໃນໂປຣແກຣມດັ່ງກ່າວ.



**TripAdvisor:** ເປັນອີກສື່ສັງຄົມອອນລາຍທີ່ໄດ້ຮັບຄວາມນິຍົມໃນກຸ່ມນັກທ່ອງທ່ຽວທີ່ມາແບບອິດສະຫລະ. ຂໍ້ມູນແມ່ນປະກອບມີ ລາຍການສະຖານທີ່ທ່ອງທ່ຽວ, ຮູບພາບ, ທີ່ຕັ້ງ, ແຜນທີ່, ເວລາເປີດປິດ, ແລະ ຄຳຄິດເຫັນຂອງບັນດານັກທ່ອງທ່ຽວ. ເຊັ່ນດຽວກັບ Google Maps, ພະແນກ ຖວທ ແຂວງສາມາດສະແດງຄວາມເປັນເຈົ້າຂອງບັນດາສະຖານທີ່ທ່ອງທ່ຽວທີ່ບໍ່ແມ່ນຂອງພາກທຸລະກິດ ເພື່ອປັບປຸງຂໍ້ມູນ ແລະ ສາມາດຕິດຕາມສະຖິຕິ ແລະ ທ່າອ່ຽງການຢ້ຽມຢາມຂອງບັນດາສະຖານທີ່ທ່ອງທ່ຽວ.




**ເວັບໄຊ ແລະ ແອບມືຖືທ່ອງທ່ຽວ (Website & Mobile Application):** ນຳໃຊ້ເວັບໄຊ ແລະ ແອບມືຖືທ່ອງທ່ຽວແຂວງຫລວງພະບາງ[114] ເພື່ອນຳສະເໜີຂໍ້ມູນໃຫ້ສອດຄ່ອງກັບການນຳສະເໜີໃນຮູບແບບປ້າຍປະຫວັດແຫລ່ງທ່ອງທ່ຽວຢູ່ສະຖານທີ່ທ່ອງທ່ຽວ ແລະ ສື່ສັງຄົມອອນລາຍອື່ນໆ. ນອກຈາກນັ້ນ, ເວັບໄຊຍັງສາມາດເປັນບ່ອນນຳສະເໜີຂໍ້ມູນລະອຽດ ໃນກໍລະນີທີ່ນັກທ່ອງທ່ຽວໃຊ້ມືຖືສະແກນລະຫັດ QR Code ຢູ່ປ້າຍປະຫວັດແຫລ່ງທ່ອງທ່ຽວ.




**ເຄື່ອງອະທິບາຍສຽງ (Audio guide):** ເຫມາະສຳລັບນັກທ່ອງທ່ຽວທີ່ມັກໃນການຟັງຫລາຍກວ່າການອ່ານຂໍ້ມູນ, ສາມາດນຳສະເໜີໃນຫລາກຫລາຍພາສາ. ນັກທ່ອງທ່ຽວສາມາດນຳໃຊ້ມືຖືເພື່ອສະແກນລະຫັດ QR Code ຢູ່ປ້າຍປະຫວັດແຫລ່ງທ່ອງທ່ຽວ ເພື່ອຮັບຟັງການບັນຍາຍສຽງ.

[114] https://tourismluangprabang.org

# 10)ແຜນນຳສະເໜີຂໍ້ມູນ (Content Delivery Plan)

## 10.1) ສະຖານທີ່ທ່ອງທ່ຽວ

### 10.1.1) ນະຄອນຫລວງພະບາງ

| ລຳດັບ | ສະຖານທີ່ (Site Name) | ໃຈຄວາມໃນການນຳສະເໜີ (Interpretive Theme) | ວິທີການນຳສະເໜີຂໍ້ມູນ (Interpretive Media & Services) | ບູລິມະສິດ |
|---|---|---|---|---|
